# ພຣະທັມໂຢບ


1 2 3 4 5 6 7 8 9 10
11 12 13 14 15 16 17 18 19 20
21 22 23 24 25 26 27 28 29 30
31 32 33 34 35 36 37 38 39 40
41 42


# ໂຢບ

## 1. ພຍາມານທົດລອງໂຢບ

1 ໃນປະເທດອູຊ ມີຊາຍຄົນນຶ່ງຊື່ ໂຢບເປັນຄົນສັດຊື່ ແລະຂາບໄຫວ້ພຣະເຈົ້າ ເຂົາເປັນຄົນດີບໍ່ທຳສິ່ງຊົ່ວຮ້າຍ

2 ໂຢບມີບຸດຊາຍເຈັດຄົນ ແລະບຸດສາວສາມຄົນ

3 ເຂົາມີແກະເຈັດພັນໂຕ ອູດສາມພັນໂຕ ງົວກວຽນຫ້າຮ້ອຍຄູ່ ແລະລໍແມ່ຫ້າຮ້ອຍໂຕ ມີຂ້ອຍໃຊ້ຈຳນວນຫລາຍ ເຂົາເປັນຄົນຮັ່ງມີທີ່ສຸດ ໃນບັນດາຊາວຕາເວັນອອກ

4 ພວກບຸດຊາຍຂອງໂຢບເຄີຍຈັດງານກິນລ້ຽງຂຶ້ນ ຕາມຜຽນທີ່ໄດ້ຕົກລົງກັນໄວ້ ພວກເຂົາໄດ້ເຊີນນ້ອງສາວທັງສາມຂອງເຂົາມາຮ່ວມນຳດ້ວຍ

5 ພາຍຫລັງວັນຈັດງານກິນລ້ຽງແຕ່ລະເທື່ອສິ້ນສຸດລົງ ໂຢບຕ້ອງຕື່ນແຕ່ເຊົ້າແລະຖວາຍເຄື່ອງເຜົາບູຊາ ເພື່ອໃຫ້ບຸດຂອງເຂົາແຕ່ລະຄົນອາດຈະທຳບາບດ້ວຍການປມາດພຣະເຈົ້າຢ່າງບໍ່ຮູ້ສຶກຕົວ

6 ຢູ່ມາວັນນຶ່ງ ມີຄນະທູດຂອງພຣະຜູ້ເປັນເຈົ້າ ໄດ້ມາສູ່ພຣະພັກຂອງພຣະອົງ ພຍາມານກໍໄດ້ມາດ້ວຍ

7 ພຣະຜູ້ເປັນເຈົ້າຈຶ່ງຖາມພຍາມານວ່າ, “ເຈົ້າມາແຕ່ໃສ” ພຍາມານທູນຕອບວ່າ, “ຂ້າພຣະອົງໄປໆມາໆທົ່ວໂລກ”

8 ແລ້ວພຣະຜູ້ເປັນເຈົ້າຊົງກ່າວຕໍ່ພຍາມານວ່າ, “ເຈົ້າໄດ້ພິຈາຣະນາໄຕ່ຕອງເບິ່ງໂຢບຜູ້ຮັບໃຊ້ຂອງເຮົາຫລືບໍ່ ໃນໂລກນີ້ບໍ່ມີໃຜຊື່ສັດ ແລະດີເຫມືອນເຂົາ ເຂົາຂາບໄຫວ້ເຮົາ ແລະບໍ່ກະທຳໃນສິ່ງທີ່ຊົ່ວຮ້າຍໃດໆທັງສິ້ນ”

9 ພຍາມານໄດ້ທູນຕອບວ່າ, “ຖ້າໂຢບບໍ່ໄດ້ຫຍັງເຂົາຈະຂາບໄຫວ້ພຣະອົງຫລື

10 ພຣະອົງໄດ້ຄຸ້ມຄອງຮັກສາເຂົາ ແລະຄອບຄົວເຮືອນຊານຂອງເຂົາກັບຊັບສົມບັດຂອງເຂົາທຸກຢ່າງ ພຣະອົງໄດ້ອວຍພອນໃຫ້ວຽກງານທຸກຢ່າງຂອງເຂົາຈະເຣີນຂຶ້ນ ແລະໄດ້ໃຫ້ເຂົາມີຝູງສັດເພີ້ມທະວີຂຶ້ນທົ່ວປະເທດ

11 ແຕ່ບັດນີ້ ສົມມຸດວ່າພຣະອົງເອົາທຸກສິ່ງທີ່ເຂົາມີນັ້ນຫນີໄປ ເຂົາກໍຈະປ້ອຍດ່າພຣະອົງຕໍ່ຫນ້າພຣະອົງ”

12 ພຣະຜູ້ເປັນເຈົ້າຊົງບອກພຍາມານວ່າ, “ແມ່ນແລ້ວ ທຸກສິ່ງທີ່ໂຢບມີນັ້ນເຈົ້າເອົາໄປໄດ້ແຕ່ເຈົ້າຢ່າທຳຮ້າຍເຂົາ” ແລ້ວພຍາມານໄດ້ອອກໄປຈາກພຣະພັກຂອງພຣະຜູ້ເປັນເຈົ້າ

### ລູກແລະຊັບສົມບັດຂອງໂຢບຖືກທຳລາຍ

13 ວັນນຶ່ງ ຂນະທີ່ບຸດທັງຫລາຍຂອງໂຢບກຳລັງກິນລ້ຽງຢູ່ໃນເຮືອນຂອງອ້າຍກົກ
14 ມີຜູ້ສົ່ງຂ່າວມາບອກຂ່າວແກ່ໂຢບວ່າ, "ຂນະທີ່ພວກເຮົາເອົາງົວໄຖນາຢູ່ ແລະລໍກຳລັງກິນຫຍ້າຢູ່ໃກ້ໆ
15 ມີພວກຊາເບອານເຂົ້າມາປຸ້ນເອົາງົວກັບລໍທັງຫມົດໄປ ແລະຂ້າຄົນໃຊ້ເສັຽດ້ວຍດາບ ແລະຍັງຂ້ານ້ອຍຄົນ
ດຽວທີ່ລອດຊີວິດຫນີມາບອກທ່ານ"
16 ຂນະທີ່ຄົນໃຊ້ຜູ້ນັ້ນພວມເວົ້າຢູ່ ກໍມີຄົນໃຊ້ອີກຜູ້ນຶ່ງມາບອກວ່າ, "ໄຟຂອງພຣະເຈົ້າຕົກລົງຈາກຟ້າສວັນ
ໄຫມ້ແກະ ແລະຄົນໃຊ້ ແລະເຜົາຜານເສັຽຫມົດ ຍັງແຕ່ຂ້ານ້ອຍຄົນດຽວທີ່ລອດຊີວິດຫນີມາບອກທ່ານ
17 ຂນະທີ່ກຳລັງເວົ້າຢູ່ ມີອີກຄົນນຶ່ງມາບອກວ່າ, "ມີຊາວຄັນເດອານໄດ້ຈັດສາມພວກ ເຂົ້າມາປຸ້ນພວກຂ້າ
ນ້ອຍ ເຂົາໄດ້ອູດໄປຫມົດທັງໄດ້ຂ້າຄົນໃຊ້ຂອງທ່ານທັງຫມົດ ຍັງແຕ່ຂ້ານ້ອຍຄົນດຽວທີ່ລອດຊີວິດຫນີມາ
ບອກທ່ານ"
18 ຂະນະທີ່ເຂົາກຳລັງເວົ້າຢູ່ ມີອີກຄົນນຶ່ງມາບອກວ່າ, "ເວລາລູກຊາຍຍິງຂອງທ່ານກິນລ້ຽງຢູ່ທີ່ເຮືອນລູກຊາຍ
ກົກຂອງທ່ານ
19 ແລະໄດ້ມີລົມພະຍຸໃຫຍ່ພັດມາຈາກທະເລຊາຍ ລົມນີ້ໄດ້ກະທົບເຮືອນທັງສີ່ມຸມ ແລະເຮືອນນັ້ນພັງທັບ ລູກ
ຊາຍຍິງຂອງທ່ານ ແລະເຂົາໄດ້ຕາຍຫມົດ ຍັງແຕ່ຂ້າພະເຈົ້າຄົນດຽວທີ່ລອດຊີວິດຫນີມາບອກທ່ານ"
20 ແລ້ວໂຢບໄດ້ລຸກຂຶ້ນຈີກເຄື່ອງນຸ່ງຂອງຕົນດ້ວຍຄວາມທຸກໃຈ ເຂົາໄດ້ແຖຜົມແລ້ວຂາບລົງດິນ
21 ແລ້ວກ່າວວ່າ, "ຂ້າພະເຈົ້າອອກມາຈາກທ້ອງແມ່ດ້ວຍຕົວເປົ່າ ແລະຂ້າພະເຈົ້າຈະກັບໄປດ້ວຍຕົວເປົ່າ
ພຣະຜູ້ເປັນເຈົ້າຊົງໂຜດປະທານ ແລະບັດນີ້ພຣະອົງຊົງເອົາໄປເສັຽ ສາທຸການແດ່ພຣະນາມຂອງພຣະອົງ"
22 ເຖິງແມ່ນວ່າທຸກຢ່າງນີ້ໄດ້ເກີດຂຶ້ນ ໂຢບກໍບໍ່ໄດ້ທຳບາບ ຫລືກ່າວໂທດພຣະເຈົ້າແຕ່ຢ່າງໃດເລີຍ

## 2. ພຍາມານທົດລອງໂຢບອີກ

1 ຢູ່ມາວັນນຶ່ງ ຄນະທູດຂອງພຣະເຈົ້າໄດ້ມາສູ່ພຣະພັກຂອງພຣະອົງອີກ ພຍາມານກໍມານຳດ້ວຍ
2 ພຣະຜູ້ເປັນເຈົ້າຊົງຖາມພຍາມານວ່າ, "ເຈົ້າມາແຕ່ໃສ" ພຍາມານທູນຕອບວ່າ, "ຂ້າພຣະອົງໄປໆມາໆທົ່ວ
ໂລກ"
3 ພຣະຜູ້ເປັນເຈົ້າຊົງຖາມວ່າ, "ເຈົ້າໄດ້ພິຈາຣະນາໄຕ່ຕອງເບິ່ງໂຢບຜູ້ຮັບໃຊ້ຂອງເຮົາຫລືບໍ ໃນໂລກນີ້ບໍ່ມີຜູ້
ໃດຊື່ສັດ ແລະດີທໍ່ເຂົາ ເຂົາຂາບໄຫວ້ເຮົາ ແລະບໍ່ກະທຳໃນສິ່ງທີ່ຊົ່ວຮ້າຍໃດໆທັງສິ້ນ ເຖິງແມ່ນເຮົາໄດ້ອະ
ນຸຍາດໃຫ້ເຈົ້າທຳໃຫ້ໂຢບເດືອດຮ້ອນ ຍ້ອນເຈົ້າຊັກຊວນໂດຍບໍ່ມີເຫດຜົນ ເຂົາກໍຍັງຍຶດຫມັ້ນໃນຄວາມຊື່
ສັດຕໍ່ໄປ"
4 ພຍາມານໄດ້ທູນຕອບວ່າ, "ມະນຸດຍ່ອມສລະທຸກສິ່ງເພື່ອໃຫ້ມີຊີວິດຄົງຢູ່
5 ແຕ່ບັດນີ້ ສົມມຸດວ່າພຣະອົງທຳຮ້າຍຮ່າງກາຍຂອງເຂົາ ເຂົາກໍຈະປ້ອຍດ່າພຣະອົງຕໍ່ຫນ້າພຣະອົງ"

6 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ພຍາມານວ່າ, "ແມ່ນແລ້ວ ເຂົາຢູ່ໃຕ້ອຳນາດຂອງເຈົ້າ ຂໍແຕ່ເຈົ້າຢ່າຂ້າເຂົາເທົ່ານັ້ນ"

7 ແລ້ວພຍາມານໄດ້ຫນີອອກຈາກພຣະພັກພຣະຜູ້ເປັນເຈົ້າ ແລະມັນໄດ້ທຳໃຫ້ຮ່າງກາຍຂອງໂຢບເປັນບາດທົ່ວໄປ

8 ໂຢບ ໄດ້ໄປນັ່ງຢູ່ໃກ້ໆກອງຂີ້ເຖົ່າ ແລະໄດ້ເອົາກະບັ້ງຫມໍ້ແຕກຂູດຕາມເນື້ອຕົວຂອງຕົນ

9 ແລ້ວພັຣຍາຂອງໂຢບໄດ້ເວົ້າຕໍ່ເຂົາວ່າ, "ເຈົ້າຍັງຈະຍຶດຫມັ້ນໃນຄວາມຊື່ສັດຢູ່ຕໍ່ໄປຫລື ເປັນຫຍັງຈຶ່ງບໍ່ດ່າພຣະເຈົ້າ ແລ້ວຕາຍເສັຽ"

10 ໂຢບໄດ້ຕອບວ່າ, "ເຈົ້າເວົ້າຢ່າງບ້າໆ ເມື່ອພຣະເຈົ້າປະທານຂອງດີໃຫ້ເຮົາ ເຮົາກໍຍິນດີຮັບເອົາ ແຕ່ເມື່ອພຣະອົງປະທານຄວາມຍາກລຳບາກໃຫ້ເຮົາ ເປັນຫຍັງເຮົາຈຶ່ງຈົ່ມທຸກ" ເຖິງແມ່ນຄວາມທຸກທັງຫມົດນີ້ໄດ້ເກີດຂຶ້ນ ໂຢບກໍບໍ່ໄດ້ກ່າວສິ່ງໃດປມາດພຣະເຈົ້າເລີຍ

11 ເມື່ອມິດສະຫາຍສາມຄົນຂອງໂຢບມາ ຄືເອລີຟັສ ຊາວເມືອງເຕມານ ບິນດັດ ຊາວເມືອງຊູອາ ແລະໂຊຟາຣ໌ ຊາວເມືອງນາອາມາ ໄດ້ຍິນຂ່າວວ່າ ໂຢບມີຄວາມທຸກລຳບາກຫລາຍ ພວກເຂົາກໍນັດກັນມາຢ້ຽມຢາມທ່ານ ເພື່ອເລົ້າໂລມຈິດໃຈທ່ານ

12 ໃນລະຫວ່າງທີ່ພວກເຂົາຍັງຢູ່ບໍ່ໄກປານໃດກັບໂຢບ ພວກເຂົາກໍຫລຽວເຫັນໂຢບ ແຕ່ຈຳບໍ່ໄດ້ ເມື່ອພວກເຂົາມາເຖິງກໍ່ຮ້ອງໄຫ້ຄ່ຳຄວນ ຈີກເສື້ອຜ້າຂອງຕົນສະແດງຄວາມເສັຽໃຈ ແລ້ວຫວ່ານຂີ້ຝຸ່ນດິນຂຶ້ນເທິງອາກາດ ແລະໃສ່ຫົວຂອງຕົນ

13 ຕໍ່ມາກໍນັ່ງຢູ່ໃນດິນກັບທ່ານຄລອດເຈັດວັນເຈັດຄືນໂດຍບໍ່ເວົ້າຈາຫຍັງ ເພາະພວກເຂົາເຫັນວ່າ ໂຢບມີຄວາມທຸກຢ່າງຫລວງຫລາຍ

## 3. ໂຢບຈົ່ມທຸກຕໍ່ພຣະເຈົ້າ

1 ໃນທີ່ສຸດ ໂຢບກໍຮ້ອງດ່າວັນເກີດຂອງຕົນວ່າ

2 ໂຢບກ່າວວ່າ,

3 "ຂໍພຣະເຈົ້າຈົ່ງສາບແຊ່ງວັນເກີດຂອງຂ້າພຣະອົງ ຈົ່ງສາບແຊ່ງຄ່ຳຄືນວັນຂ້າພຣະອົງມາເກີດ

4 ໂອ ພຣະຜູ້ເປັນເຈົ້າ ຂໍຈົ່ງໃຫ້ວັນນັ້ນດຳມືດ ຢ່າລະນຶກເຖິງວັນນັ້ນອີກ ຢ່າໃຫ້ແສງສວ່າງສ່ອງໃນວັນນັ້ນ

5 ຈົ່ງທຳໃຫ້ວັນນັ້ນມືດຕຶບ ຂໍໃຫ້ເມກປົກຄຸມແສງຕາເວັນໃຫ້ດຳມືດ

6 ຈົ່ງລຶບຄືນນັ້ນອອກຈາກປີ ຢ່ານັບມັນເຂົ້າເປັນມື້ນຶ່ງຂອງປີອີກເລີຍ

7 ຈົ່ງທຳໃຫ້ຄືນນັ້ນ ເປັນຫມັນປາສຈາກຄວາມມ່ວນຊື່ນ

8 ຈົ່ງບອກຫມໍມົນສາບແຊ່ງວັນນັ້ນ ເພາະເຂົາມີຄວາມສາມາດສັ່ງໃຫ້ເງືອກຂຶ້ນມາໄດ້

9 ຂໍໃດ້ດາວພຣະສຸກດ ຳມືດໄປ ຈົ່ງໃຫ້ຄວາມຫວັງຄອຍຖ້າແສງອາຣຸນຂອງຄືນນັ້ນຫມົດໄປ

10 ຈົ່ງສາບແຊ່ງຄືນນັ້ນ ເພາະວ່າມັນໃຫ້ຂ້າພຣະອົງໄດ້ເກີດ ແລະເພາະມັນໄດ້ຊ່ອງທາງໃຫ້ຂ້າພຣະອົງມີຄວາມລຳບາກເສັ່ງໃຈ
11 ຂ້າພຣະອົງຢາກຕາຍເສັ່ງຕັ້ງແຕ່ຢູ່ໃນທ້ອງແມ່ ຫລືຕາຍເສັ່ງແຕ່ເວລາເກີດທຳອິດ
12 ເປັນຫຍັງແມ່ຂອງຂ້າພຣະອົງຈິ່ງອຸ້ມຂ້າພຣະອົງໄວ້ໃນຕັກຂອງທ່ານ ເປັນຫຍັງທ່ານຈຶ່ງໃຫ້ຂ້າພຣະອົງກິນນົມ
13 ຖ້າຫາກຂ້າພຣະອົງຕາຍເສັ່ງໃນເວລານັ້ນ ບັດນີ້ຂ້າພຣະອົງກໍຫມົດທຸກ
14 ຈະຫລັບສະບາຍຢູ່ກັບກະສັດ ແລະທີ່ປຶກສາທັງຫລາຍຂອງພຣະອົງ ຜູ້ໄດ້ສ້າງພຣະຣາຊວັງເກົ່າແກ່ຂຶ້ນໃຫມ່
15 ແລ້ວຂ້າພຣະອົງກໍຈະນອນຫລັບເຫມືອນເຈົ້ານາຍທັງຫລາຍ ຊຶ່ງມີເງິນຄຳໄວ້ເຕັມເຮືອນ
16 ຫລືນອນຫລັບເຫມືອນເດັກທີ່ຕາຍໃນທ້ອງແມ່
17 ໃນຂຸມຝັງສົບນັ້ນ ຄົນຊົ່ວຈະຢຸດທຳຊົ່ວ ແລະຄົນງານຜູ້ອິດເມື່ອຍກໍໄດ້ຢຸດພັກ
18 ແມ່ນແຕ່ນັກໂທດກໍຢູ່ສງົບສຸກ ເພາະບໍ່ໄດ້ຍິນສຽງຮ້າຍຂອງນາຍຄຸມເອີ້ນບອກ
19 ຢູ່ທີ່ນັ້ນທຸກໆຄົນທັງຜູ້ໃຫຍ່ຜູ້ນ້ອຍ ແລະພວກຂ້າທາດກໍເປັນອິສຣະ
20 ເປັນຫຍັງຈຶ່ງໃຫ້ຄົນທີ່ທຸກຂະເວທນາມີຊີວິດຢູ່ ເປັນຫຍັງຈຶ່ງໃຫ້ແສງສວ່າງແກ່ຜູ້ໂສກເສົ້າເສັ່ງໃຈ
21 ພວກເຂົາລໍຄອຍຄວາມຕາຍ ແຕ່ມັນກໍບໍ່ຕາຍ ເຂົາມັກຂຸມຝັງສົບຫລາຍກວ່າມັກຊັບສິນ
22 ເຂົາບໍ່ມີຄວາມສຸກຖ້າບໍ່ຕາຍ ແລະຝັງເສັ່ງກ່ອນ
23 ພຣະເຈົ້າຊົງຕັດອະນາຄົດຂອງເຂົາ ແລະປິດລ້ອມເຂົາໃນທຸກດ້ານ
24 ຂ້າພຣະອົງຮ້ອງໄຫ້ແທນການກິນເຂົ້າ ຂ້າພຣະອົງບໍ່ເຄີຍຢຸດຮ້ອງໄຫ້
25 ທຸກສິ່ງທີ່ຂ້າພຣະອົງຢ້ານກົວຕົກຖືກຂ້າພຣະອົງ
26 ຂ້າພຣະອົງບໍ່ມີຄວາມສງົບ ຫລືໄດ້ຢຸດພັກ ແລະຄວາມຍາກລຳບາກບໍ່ເຄີຍຫມົດສິ້ນໄປ

## 4. ມິດສະຫາຍສົນທະນາກັບໂຢບ

1 ຕໍ່ມາ ເອລີຟັສ ຊາວເຕມານໄດ້ເວົ້າກັບໂຢບວ່າ,
2 "ຖ້າຂ້າພະເຈົ້າເວົ້າ ທ່ານຊິບໍ່ຮ້າຍບໍ ຂ້າພະເຈົ້າບໍ່ສາມາດອົດເວົ້າຕໍ່ໄປໄດ້
3 ທ່ານໄດ້ສອນຄົນມາຫລາຍແລ້ວ ແລະໄດ້ໃຫ້ຄົນມືອ່ອນມີກຳລັງແຂງແຮງ
4 ເມື່ອຄົນໃດຄົນນຶ່ງຕຳສະດຸດ ເມື່ອຍ ແລະຫມົດແຮງ ຄຳເວົ້າຂອງທ່ານກໍຊ່ອຍໃຫ້ເຂົາຍືນຂຶ້ນໄດ້
5 ແຕ່ບັດນີ້ ຄວາມຍາກລຳບາກໄດ້ມາຖືກທ່ານແລ້ວ ທ່ານຫມົດກຳລັງໃຈທີ່ຈະສູ້ກັບມັນ
6 ທ່ານຂາບໄຫວ້ພຣະເຈົ້າ ແລະຊີວິດຂອງທ່ານກໍບໍ່ດ່າງພ້ອຍ ດັ່ງນັ້ນ ທ່ານຄວນມີຄວາມຫມັ້ນໃຈ ແລະຄວາມຫວັງ
7 ຈົ່ງຄິດເບິ່ງວ່າ ທ່ານເຫັນໃຜແດ່ຈັກຄົນນຶ່ງ ທີ່ເປັນຄົນຊອບທັມແຕ່ໄດ້ຮັບຄວາມພິນາດ

8 ຕາມທີ່ຂ້າພະເຈົ້າໄດ້ເຫັນຄື ບຸກຄົນຜູ້ໄຖ່ຄວາມຜິດ ແລະຫວ່ານຄວາມຊົ່ວກໍໄດ້ເກັບກ່ຽວຢ່າງນັ້ນ
9 ພຣະເຈົ້າຊົງທຳລາຍເຂົາດ້ວຍພຣະພິໂຣດເຫມືອນລົມພະຍຸ
10 ຄົນຊົ່ວແຜດສຽງຮ້ອງຄາງເຫມືອນດັ່ງສິງ ແຕ່ພຣະເຈົ້າຊົງໃຫ້ເຂົາງຽບ ແລະຫັກແຂ້ວເຂົາເສັຽ
11 ເຫມືອນສິງທີ່ບໍ່ມີຫຍັງຂົບກິນເປັນອາຫານ ມັນຕ້ອງຕາຍແລະລູກຂອງມັນກໍກະຈັດກະຈາຍໄປ
12 ມີຄຳນື່ງດັງມາເຖິງຂ້າພະເຈົ້າຢ່າງຄ່ອຍໆ ຄຳນັ້ນດັງມາຄ່ອຍຫລາຍເກືອບຂ້າພະເຈົ້າບໍ່ໄດ້ຍິນ
13 ມັນເຫມືອນກັບຄວາມຝັນຮ້າຍຊື່ງຣົບກວນຄວາມຫລັບຂອງຂ້າພະເຈົ້າ
14 ຂ້າພະເຈົ້າຢ້ານກົວຕົວສັ່ນ ທົ່ວຕົນຕົວຂອງຂ້າພະເຈົ້າສັ່ນສະທ້ານດ້ວຍຄວາມຢ້ານ
15 ມີລົມເບົາໆພັດຫນ້າຂອງຂ້າພະເຈົ້າ ຂົນຫນັງຂອງຂ້າພະເຈົ້າລຸກຊັນດ້ວຍຄວາມຕົກໃຈ
16 ຂ້າພະເຈົ້າໄດ້ເຫັນແນວນື່ງຢູ່ທີ່ນັ້ນ ຂ້າພະເຈົ້າໄດ້ຈ້ອງເບິ່ງ ແຕ່ບອກບໍ່ໄດ້ວ່າແມ່ນຫຍັງ ແລ້ວຂ້າພະເຈົ້າ
ໄດ້ຍິນສຽງດັ່ງອອກມາແຕ່ຄວາມງຽບວ່າ,
17 "ໃນສາຍພຣະເນດຂອງພຣະເຈົ້າ ຄົນຊອບທັມມີຫລື ມະນຸດຈະບໍຣິສຸດຕໍ່ຫນ້າຜູ້ສ້າງເຂົາໄດ້ຫລື
18 ພຣະເຈົ້າບໍ່ໄວ້ພຣະທັຍໃນພວກເທວະດາຂອງພຣະອົງ ພຣະອົງຊົງພົບເຫັນຄວາມຜິດໃນເທວະດາເຫລົ່າ
ນັ້ນ
19 ທ່ານຄິດວ່າພຣະອົງຈະຊົງໄວ້ວາງພຣະທັຍໃນສິ່ງທີ່ສ້າງດ້ວຍດິນຫນຽວຫລື ສິ່ງທີ່ເປັນດິນນັ້ນຈະຖືກຂະຍີ້
ເຫມືອນບີບແມງເມົ່າ
20 ຄົນຜູ້ນື່ງອາດຈະມີຊີວິດຢູ່ໃນເວລາເຊົ້າ ແຕ່ກ່ອນຄ່ຳເຂົາອາດຈະຕາຍເສັຽໂດຍບໍ່ມີໃຜຮູ້
21 ສິ່ງທັງຫມົດທີ່ເຂົາມີມານັ້ນກໍສູນເສັຽໄປ ເຂົາຕາຍໄປໂດຍບໍ່ທັນຮູ້ຫຍັງ"

## 5.

1 ໂຢບເອີຍ ຈົ່ງເອີ້ນເບິ່ງດູ ມີຜູ້ໃດຈະຕອບທ່ານ ເທວະດາອົງໃດຈະມາຊ່ວຍທ່ານ
2 ຄົນໃຈຮ້ອນຕາຍຍ້ອນຄວາມໂກດ ຄົນໂງ່ຕາຍຍ້ອນຄວາມຮ້າຍ
3 ຂ້າພະເຈົ້າໄດ້ເຫັນພວກຄົນໂງ່ເບິ່ງຄືວ່າມີຖານະຫມັ້ນຄົງ ແຕ່ທັນໃດນັ້ນຄຳແຊ່ງດ່າກໍຕົກຖືກເຮືອນຂອງເຂົາ
4 ພວກລູກຫລານຂອງເຂົາບໍ່ເຄີຍໄດ້ພົບຄວາມປອດໄພ ໃນສານຕັດສິນບໍ່ມີໃຜຢືນຂຶ້ນຊ່ວຍເຂົາ
5 ຄົນຜູ້ຫິວເຂົ້າຈະຮັບປະທານຜົນເກັບກ່ຽວຂອງເຂົາ ແມ່ນແຕ່ພືດຜົນທີ່ງອກຂຶ້ນໃນກາງຫນາມຂອງເຂົາກໍ
ເອົາໄປ ຄົນອຶດຢາກໄດ້ສົມບັດຂອງເຂົາ
6 ບາບແລະຄວາມຍາກລຳບາກບໍ່ໄດ້ງອກອອກມາຈາກດິນ
7 ແມ່ນແລ້ວ ມະນຸດໄດ້ຮັບຄວາມຍາກລຳບາກມາຈາກການກະທຳຂອງຕົນ ແນ່ນອນເຫມືອນກັບແປວໄຟ
ຍ່ອມປິວຂຶ້ນຈາກກອງໄຟ
8 ຖ້າຂ້າພະເຈົ້າເປັນທ່ານ ຂ້າພະເຈົ້າຄືນໄປຫາພຣະເຈົ້າ ແລະມອບເຣື່ອງຣາວຂອງທ່ານຕໍ່ພຣະອົງ
9 ພຣະອົງຊົງກະທຳການອັນຍິ່ງໃຫຍ່ທີ່ພວກເຮົາເຂົ້າໃຈບໍ່ໄດ້ ແລະການອັດສະຈັນຂອງພຣະອົງກໍນັບບໍ່ຖ້ວນ

10 ພຣະອົງຊົງໃຫ້ຝົນຕົກລົງມາເທິງແຜ່ນດິນ ແລະຊົງໃຫ້ນ້ຳມີໃນທົ່ງນາ
11 ເອີ ແມ່ນພຣະເຈົ້າເປັນຜູ້ຊົງຍົກຄົນຕ່ຳຕ້ອຍຂຶ້ນ ແລະຊົງໂຜດຜູ້ໂສກເສົ້າເສັຽໃຈໃຫ້ໄດ້ຮັບຄວາມມ່ວນຊື່ນ
12 ພຣະອົງຊົງຂັດຂວາງເລ່ກົນຫລອກລວງ ເພື່ອມືຂອງເຂົາຈະທຳບໍ່ສຳເຣັດ
13 ຊົງດັກຈັບຄົນສລາດດ້ວຍອຸບາຍຂອງເຂົາເອງ ແລະໂຄງການຂອງຄົນຫລັກແຫລມກໍສິ້ນລົງໂດຍດ່ວນ
14 ເຖິງແມ່ນກາງເວັນເຂົາກໍຢູ່ໃນໃນມືດ
15 ແຕ່ພຣະເຈົ້າຊົງຊ່ອຍຄົນຍາກຈົນໃຫ້ພົ້ນຈາກຄວາມຕາຍ ແລະຊົງຊ່ອຍຄົນຂັດສົນໃຫ້ພົ້ນຈາກການກົດຂີ່
16 ພຣະອົງຊົງໃຫ້ຄວາມຫວັງແກ່ຄົນຍາກຈົນ ແລະຊົງປິດປາກຄົນອະທັມ
17 ຄວາມສຸກຍ່ອມມີກັບບຸກຄົນຜູ້ພຣະເຈົ້າຊົງຕີສອນ ຢ່າເສັຽໃຈເມື່ອພຣະອົງຊົງຕຳໜິ
18 ພຣະເຈົ້າຊົງທຳໃຫ້ບາດເຈັບ ແຕ່ພຣະອົງຊົງພັນບາດແຜໃຫ້ພຣະຫັດຂອງພຣະອົງຊົງຂ້ຽນຕີທ່ານ ແຕ່ພຣະອົງຊົງຮັກສາໃຫ້ດີ
19 ພຣະອົງຈະຮັກສາທ່ານໃຫ້ພົ້ນຈາກອັນຕະຣາຍຄລອດເວລາ
20 ເມື່ອມີການອຶດຢາກ ພຣະອົງຈະຊົງຊ່ອຍທ່ານບໍ່ໃຫ້ຕາຍ ແລະຈະຊົງປ້ອງກັນທ່ານບໍ່ໃຫ້ຕາຍໃນສົງຄາມ
21 ພຣະເຈົ້າຈະຊົງຊ່ອຍທ່ານໃຫ້ພົ້ນຈາກການຕົວະ ແລະໝິ່ນປມາດ ພຣະອົງຈະຊົງຊ່ອຍທ່ານເມື່ອໄພວິບັດມາເຖິງ
22 ທ່ານຈະຫົວຂວັນການທຳລາຍ ແລະການອຶດຢາກ ຈະບໍ່ຢ້ານກົວສັດປ່າ
23 ທົ່ງນາທີ່ທ່ານໄຖຈະບໍ່ມີຫີນ ສັດປ່າທີ່ໂຫດຮ້າຍຈະບໍ່ທຳລາຍທ່ານ
24 ທ່ານຈະມີຊີວິດຢູ່ໃນຕູບຜ້າເຕັນຢ່າງສງົບສຸກ ແລ້ວທ່ານຈະເຫັນແກະຂອງທ່ານມີຄວາມປອດໄພ
25 ທ່ານຈະມີລູກຫລານຫລາຍເໝືອນກັບຫຍ້າ
26 ທ່ານຈະມີອາຍຸຍືນຈົນເຖົ້າແກ່ ເໝືອນເມັດເຂົ້າສຸກໃນຣະດູເກັບກ່ຽວ
27 ໂຢບເອີຍ ພວກເຮົາໄດ້ຮຽນຮູ້ສິ່ງນີ້ຢ່າງຄັກແນ່ແລ້ວ ມັນເປັນຄວາມຈິງ ບັດນີ້ຈົ່ງຮັບໄວ້ເທີນ”

## 6. ໂຢບຕຳໜິສະຫາຍຂອງຕົນ

1 ແລ້ວໂຢບຕອບວ່າ,
2 “ໂອ ຂ້າພະເຈົ້າຢາກຈະຊັ່ງເບິ່ງຄວາມຮ້ອນໃຈຂອງຂ້າພະເຈົ້າ ແລະເອົາຄວາມຍາກລຳບາກຂອງຂ້າພະເຈົ້າໃສ່ໃນຕຣາຊູ
3 ກໍຈະໜັກກວ່າຂີ້ດິນຊາຍໃນທະເລ ເພາະເຫດນີ້ຄຳເວົ້າຂອງຂ້າພະເຈົ້າກໍຫຸນຫັນ
4 ເພາະທະນູຂອງອົງຜູ້ມີອຳນາດຍິ່ງໃຫຍ່ກໍຢູ່ໃນຕົວຂ້າພະເຈົ້າ ຈິດໃຈຂອງຂ້າພະເຈົ້າດື່ມພິດຂອງມັນ ຄວາມໜ້າຫວາດກົວຈາກພຣະເຈົ້າ ລຽນເປັນແຖວສຸມເຂົ້າໃສ່ຂ້າພະເຈົ້າ
5 ລໍປ່າຮ້ອງເມື່ອມັນມີຫຍ້າຫລື ງົວເຖິກຮ້ອງເທິງກອງຫຍ້າຂອງມັນຫລື
6 ຈະຮັບປະທານສິ່ງທີ່ຈືດໂດຍບໍ່ໃສ່ເກືອໄດ້ຫລື ຫລືໜາກເຂືອມີຣົດຢ່າງໃດແດ່

7 ສິ່ງທີ່ຈິດໃຈຂອງຂ້າພະເຈົ້າບໍ່ຍອມແຕະຕ້ອງນັ້ນ ກັບເປັນອາຫານທີ່ເບື່ອໜ່າຍຂອງຂ້າພະເຈົ້າ
8 "ໂອ ຂ້າພະເຈົ້າຢາກຈະໄດ້ສິ່ງທີ່ທູນຂໍ ແລະຂໍພຣະເຈົ້າຊົງປະທານຕາມຄວາມປາຖນາຂອງຂ້າພະເຈົ້າ
9 ວ່າພຣະເຈົ້າພໍພຣະທັຍທີ່ຈະຂະຍີ້ຂ້າພະເຈົ້າ ວ່າພຣະອົງຈະໃຊ້ພຣະຫັດຂອງພຣະອົງຢ່າງເຕັມທີ ແລະຕັດ
ຂ້າພະເຈົ້າອອກເສັຽ
10 ນີ້ຈະເປັນການເລົ້າໂລມໃຈຂອງຂ້າພະເຈົ້າ ຂ້າພະເຈົ້າຄົງຈະເຕັ້ນໂລດແມ່ນວ່າໃນຄວາມເຈັບປວດຈະຂາດ
ໃຈ ເພາະຂ້າພະເຈົ້າບໍ່ໄດ້ປະຕິເສດພຣະຄຳຂອງພຣະອົງຜູ້ບໍຣິສຸດນັ້ນ
11 ຂ້າພະເຈົ້າບໍ່ມີກຳລັງ ທີ່ຂ້າພະເຈົ້າຈະຄອຍ ແລະສິ່ງໃດເປັນອະວະສານຂອງຂ້າພະເຈົ້າ ທີ່ຂ້າພະເຈົ້າຈະ
ຕ້ອງອົດທົນ
12 ກຳລັງຂອງຂ້າພະເຈົ້າເປັນກຳລັງຂອງຫີນຫລື ເນື້ອຂອງຂ້າພະເຈົ້າເປັນເນື້ອທອງສຳຣິດຫລື
13 ທີ່ຈິງຂ້າພະເຈົ້າບໍ່ມີຄວາມຊ່ອຍເຫລືອໃນຕົວຂ້າພະເຈົ້າເລີຍ ຂ້າພະເຈົ້າຈົນປັນຍາເສັຽແລ້ວ
14 "ບຸກຄົນຜູ້ໃດໜ່ວງໜ່ຽວຄວາມກະຣຸນາໄວ້ຈາກເພື່ອນກໍປະຖິ້ມຄວາມຢຳເກງອົງພຣະຜູ້ມີອຳນາດຍິ່ງໃຫຍ່
15 ພີ່ນ້ອງຂອງຂ້າພະເຈົ້າທໍຣະຍົດຢ່າງຫ້ວຍ ຢ່າງຫ້ວຍທີ່ນ້ຳໄຫລລົ້ນ
16 ຊຶ່ງດຳໄປເພາະດ້ວຍນ້ຳແຂງ ແລະຫິມະເປື່ອຍລະລາຍໄປນັ້ນ
17 ໃນເວລາຮ້ອນມັນກໍຫາຍໄປ ເມື່ອຮ້ອນມັນກໍສູນໄປຈາກທີ່ຂອງມັນ
18 ຫມູ່ຄົນເດີນທາງຫັນອອກຈາກທາງຂອງເຂົາ ເຂົາຂຶ້ນໄປຍັງທີ່ຮ້າງເປົ່າ ແລະພິນາດ
19 ຫມູ່ຄົນເດີນທາງຈາກເຕມານມອງເບິ່ງ ຄົນເດີນທາງຂອງເມືອງເຊບາລໍຄອຍຫມູ່ຄົນເຫລົ່ານັ້ນ
20 ເພາະເຂົາທັງຫລາຍຫວັງໃຈ ເຂົາຈຶ່ງຕ້ອງຜິດຫວັງ ເຂົາມາເຖິງທີ່ນັ້ນ ແລະຕ້ອງຫຍຸ້ງໃຈ
21 ບັດນີ້ ທ່ານທັງຫລາຍເປັນຢ່າງນັ້ນແກ່ຂ້າພະເຈົ້າ ທ່ານເຫັນຄວາມຍາກລຳບາກ ແລະທ່ານກໍຢ້ານ
22 ຂ້າພະເຈົ້າເວົ້າວ່າ, "ຂໍຂອງຂວັນໃຫ້ຂ້າພະເຈົ້າແດ່ ຫລືຂໍສິນຈ້າງຈາກຊັບສົມບັດຂອງທ່ານໃຫ້ຂ້າພະເຈົ້າ
23 ຫລືວ່າຂໍຊ່ອຍຂ້າໃຫ້ພົ້ນຈາກມືຂອງສັດຕູ ຫລືວ່າຂໍໄຖ່ຂ້າພະເຈົ້າຈາກມືຂອງຜູ້ບີບບັງຄັບຫລື
24 "ສອນຂ້າພະເຈົ້າ ແລະຂ້າພະເຈົ້າຈະງຽບ ຂໍທຳໃຫ້ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າຜິດສິ່ງໃດ
25 ຄຳຊື່ຕົງມີອຳນາດຫລາຍແທ້ໆ ແຕ່ຄຳຕິເຕືອນຂອງທ່ານຕິເຕືອນສິ່ງໃດທ່ານຄິດວ່າທ່ານຕິຕຽນຖ້ອຍຄຳໄດ້
ຫລື ເມື່ອຄຳປາໄສຂອງຄົນສິ້ນຫວັງເປັນແຕ່ລົມ
26 ທ່ານທັງຫລາຍຄົງຈະໄດ້ຈັບສລາກເອົາລູກກຳພ້າພໍ່ ແລະຕໍ່ຣອງເອົາເພື່ອນຂອງທ່ານເຫມືອນເປັນສິນຄ້າ
27 "ແຕ່ບັດນີ້ ຂໍມອງດູຂ້າພະເຈົ້າ ເພາະຂ້າພະເຈົ້າຈະບໍ່ມຸສາຕໍ່ຫນ້າຂອງທ່ານ
28 ຂໍຈົ່ງຄິດໃຫມ່ ຢ່າຜິດທັມເລີຍ ກັບຄິດໃຫມ່ເຖີດ ຂ້າພະເຈົ້າຍັງຖືກຢູ່
29 ມີຄວາມຜິດສິ່ງໃດເທິງລີ້ນຂ້າພະເຈົ້າຫລື ຂ້າພະເຈົ້ານັ້ນຫລືບໍ່ຮູ້ເຖິງໄພວິບັດ

# 7. ໂຢບເວົ້າທັກທ້ວງພຣະເຈົ້າ

1 “ມະນຸດບໍ່ມີການເຂົ້າປະຈໍາການເທິງແຜ່ນດິນໂລກຫລື ແລະຊີວິດຂອງເຂົາບໍ່ເຫມືອນຂອງລູກຈ້າງດອກ
ຫລື
2 ເຫມືອນຢ່າງທາດທີ່ຄິດເຖິງເວລາຄໍ່າ ແລະເຫມືອນຢ່າງລູກຈ້າງຜູ້ລໍຄອຍຄ່າຈ້າງ
3 ເຊັ່ນດຽວກັນ ຂ້າພະເຈົ້າຕ້ອງໄດ້ຮັບສ່ວນຄວາມອະນິດຈັງເປັນເດືອນໆ ແລະເຂົາແບ່ງຄືນແຫ່ງຄວາມຫນ້າ
ສັງເວດແກ່ຂ້າພະເຈົ້າ
4 ເມື່ອຂ້າພະເຈົ້ານອນລົງ ຂ້າພະເຈົ້າວ່າ “ເມື່ອໃດຫນໍ ຂ້າຈະລຸກຂຶ້ນ“ ແຕ່ກາງຄືນກໍຍາວ ແລະຂ້າພະເຈົ້າ
ກໍພິກໄປພິກມາຈົນຮອດຮຸ່ງເຊົ້າ
5 ເນື້ອຂອງຂ້າພະເຈົ້າຫົ່ມຫນອນ ແລະຝຸ່ນ ຫນັງຂອງຂ້າພະເຈົ້າແຂງຂຶ້ນ ແລ້ວກໍຍະອອກໃຫມ່
6 ວັນຄືນຂອງຂ້າພະເຈົ້າໄວກວ່າກະສວຍຂອງຊ່າງຕໍ່າຜ້າ ແລະສິ້ນສຸດລົງດ້ວຍປາສຈາກຄວາມຫວັງ
7 “ຂໍຊົງຈໍາໄວ້ວ່າ ຊີວິດຂອງຂ້າພຣະອົງເປັນແຕ່ລົມຫາຍໃຈ ຕາຂອງຂ້າພຣະອົງຈະບໍ່ເຫັນສິ່ງໃດອີກເລີຍ
8 ຕາຂອງຜູ້ທີ່ເຫັນຂ້າພຣະອົງຈະບໍ່ໄດ້ເບິ່ງຂ້າພຣະອົງອີກຕໍ່ໄປ ຝ່າຍພຣະເນດຂອງພຣະອົງມອງຫາຂ້າພຣະ
ອົງ ຂ້າພຣະອົງກໍໄປເສັຽແລ້ວ
9 ເມກຈາງ ແລະຫາຍໄປສັນໃດ ບຸກຄົນທີ່ລົງໄປຍັງພິພົບຄົນຕາຍກໍບໍ່ໄດ້ກັບມາສັນນັ້ນ
10 ເຂົາບໍ່ກັບໄປເຮືອນຂອງເຂົາອີກ ຫລືທີ່ຢູ່ຂອງເຂົາກໍບໍ່ຮູ້ຈັກເຂົາອີກເລີຍ
11 “ເພາະສະນັ້ນ ຂ້າພຣະອົງຈຶ່ງບໍ່ຍັງຍັ້ງປາກຂອງຂ້າພຣະອົງ ຂ້າພຣະອົງຈະເວົ້າດ້ວຍຄວາມແສນລະທົມ
ແຫ່ງຈິດໃຈຂອງຂ້າພຣະອົງ ຂ້າພຣະອົງຈະຈົ່ມດ້ວຍຄວາມຂົມຂື່ນແຫ່ງຈິດໃຈຂອງຂ້າພຣະອົງ
12 ຂ້າພຣະອົງເປັນທະເລ ຫລືເປັນມັງກອນຫລື ພຣະອົງຈຶ່ງຊົງວາງຍາມເຝົ້າຂ້າພຣະອົງ
13 ເມື່ອຂ້າພຣະອົງເວົ້າວ່າ “ຕຽງຂອງຂ້າພະເຈົ້າຈະເລົ້າໂລມຂ້າພະເຈົ້າ ບ່ອນນອນຂອງຂ້າພະເຈົ້າຈະບັນ
ເທົາການຮ້ອງທຸກຂອງຂ້າພະເຈົ້າ”
14 ແລ້ວພຣະອົງກໍທໍາໃຫ້ຂ້າພຣະອົງຢ້ານດ້ວຍຄວາມຝັນ ແລະທໍາໃຫ້ຂ້າພຣະອົງຫວາດກົວດ້ວຍນິມິດ
15 ຈິດໃຈຂອງຂ້າພຣະອົງຈຶ່ງເລືອກທີ່ຈະອຶດອັດຕາຍ ຍິ່ງກວ່າເຫລືອແຕ່ກະດູກຢ່າງນີ້
16 ຂ້າພຣະອົງເບື່ອຊີວິດ ຂ້າພຣະອົງຈະບໍ່ຢູ່ຄໍ້າຟ້າ ປ່ອຍຂ້າພຣະອົງແຕ່ລໍາພັງເຖີດ ເພາະວັນຄືນຂອງຂ້າ
ພຣະອົງເປັນແຕ່ພຽງລົມຫາຍໃຈ
17 ມະນຸດເປັນຫຍັງ ພຣະອົງຈຶ່ງຊົງຖືວ່າເຂົາສໍາຄັນ ແລະທີ່ພຣະອົງໃສ່ພຣະທັຍເຂົາ
18 ຊົງຢ້ຽມເຂົາທຸກເຊົ້າ ຊົງທົດລອງເບິ່ງເຂົາທຸກຂນະ
19 ອີກດົນປານໃດພຣະອົງຈຶ່ງຈະບໍ່ຊົງມອງເບິ່ງຂ້າພຣະອົງ ຫລືປ່ອຍຂ້າພຣະອົງແຕ່ລໍາພັງ ຈົນຂ້າພຣະອົງຈະ
ກືນນໍ້າລາຍຂອງຕົນໄດ້
20 ຂ້າແຕ່ພຣະອົງຜູ້ເຝົ້າມະນຸດ ຖ້າຂ້າພຣະອົງທໍາບາບ ຂ້າພຣະອົງທໍາສິ່ງໃດແກ່ພຣະອົງ ເປັນຫຍັງພຣະອົງ
ຈຶ່ງຊົງທໍາໃຫ້ຂ້າພຣະອົງເປັນເປົ້າຫມາຍຂອງພຣະອົງ ເປັນຫຍັງຂ້າພຣະອົງຈຶ່ງເປັນພາຣະຂ4ອງພຣະອົງ

21 ເປັນຫຍັງພຣະອົງບໍ່ຊົງປະທານອະໄພແກ່ການທໍຣະຍົດຂອງຂ້າພຣະອົງ ແລະນຳເອົາບາບຂອງຂ້າພຣະອົງ
ໄປເສັຽ ເພາະບັດນີ້ຂ້າພຣະອົງຈະນອນລົງໃນຝຸ່ນຂີ້ດິນ ພຣະອົງຈະຊົງຊອກຫາຂ້າພຣະອົງ ແຕ່ຂ້າພຣະ
ອົງຈະບໍ່ຢູ່ແລ້ວ”

## 8. ບິນດັດຢືນຢັນຄວາມຍຸດຕິທັມຂອງພຣະເຈົ້າ

1 ແລ້ວບີນດັດຕະກູນຊູອາຕອບວ່າ,
2 “ທ່ານຈະເວົ້າຢ່າງນີ້ຢູ່ດົນປານໃດ ແລະຄຳເວົ້າຂອງທ່ານຈະເປັນພະຍຸນານປານໃດ
3 ພຣະເຈົ້າຊົງບິດເບືອນຄວາມຍຸດຕິທັມຫລື ຫລືອົງຜູ້ມີອຳນາດຍິ່ງໃຫຍ່ບິດເບືອນຄວາມຍຸດຕິທັມຫລື
4 ຖ້າລູກຂອງທ່ານໄດ້ກະທຳບາບຕໍ່ພຣະອົງ ພຣະອົງກໍຊົງມອບເຂົາທັງຫລາຍໄວ້ໄວ້ໃນອຳນາດຂອງການທໍ
ຣະຍົດຂອງເຂົາ
5 ຖ້າທ່ານຈະຫມັ່ນສແວງຫາພຣະເຈົ້າ ແລະອ້ອນວອນຕໍ່ອົງຜູ້ມີອຳນາດຍິ່ງໃຫຍ່
6 ຖ້າທ່ານບໍຣິສຸດ ແລະທ່ຽງທັມ ແນ່ນອນ ແລ້ວພຣະອົງຈະຊົງຕື່ນຂຶ້ນເພື່ອທ່ານ ແລະຊົງຄືນທີ່ອາໄສແຫ່ງ
ຄວາມຊອບທັມໃຫ້
7 ເຖິງແມ່ນວ່າການເລີ້ມຕົ້ນຊີວິດຂອງທ່ານຈະເລັກນ້ອຍ ແຕ່ຕໍ່ໄປປາຍໆຈະໃຫຍ່ໂຕຂຶ້ນ
8 “ຂ້າພະເຈົ້າຂໍຮ້ອງ ໃຫ້ທ່ານຖາມຄົນບູຮານເບິ່ງ ແລະຄິດເບິ່ງວ່າບັນພະບຸຣຸດຄົ້ນພົບສິ່ງໃດແດ່
9 ເພາະສ່ວນເຮົາ ຊີວິດສັ້ນເຫມືອນຢ່າງເກີດມື້ວານນີ້ ບໍ່ຮູ້ຈັກຫຍັງເລີຍ ເພາະວັນຄືນຂອງເຮົາເທິງແຜ່ນດິນ
ໂລກປຽບເຫມືອນເງົາ
10 ເຂົາຈະບໍ່ສອນທ່ານແລະບອກທ່ານ ແລະກ່າວຄຳຈາກຄວາມເຂົ້າໃຈຂອງເຂົາຫລື
11 “ຕົ້ນອໍ້ຈະງອກຂຶ້ນໃນບ່ອນທີ່ບໍ່ມີຕົມໄດ້ຫລື ແລະຈະງອກງາມໃນບ່ອນທີ່ບໍ່ມີນໍ້າໄດ້ຫລື
12 ຂນະທີ່ມີດອກຍັງບໍ່ໄດ້ຕັດລົງ ມັນກໍຫ່ຽວແຫ້ງໄປກ່ອນຕົ້ນໄມ້ອື່ນໆ
13 ທາງຂອງບັນດາຜູ້ທີ່ລືມພຣະເຈົ້າກໍເປັນຢ່າງນັ້ນແຫລະ ຄວາມຫວັງຂອງຄົນທີ່ບໍ່ນັບຖືພຣະເຈົ້າຈະພິນາດໄປ
14 ສິ່ງທີ່ເຂົາໄວ້ໃຈຫັກສະບັ້ນລົງ ແລະສິ່ງທີ່ເຂົາວາງໃຈຍຸ່ຍເຫມືອນດັ່ງໃຍແມງມຸມ
15 ເຂົາເອື່ອຍອີງເຮືອນຂອງເຂົາ ແຕ່ມັນທົນທານບໍ່ໄຫວ ເຂົາຍຶດມັນໄວ້ ແຕ່ມັນກໍບໍ່ທົນຢູ່ບໍ່ໄດ້
16 ຄົນຊົ່ວຂຽວສົດຢູ່ຕໍ່ຫນ້າດວງຕາເວັນ ດັ່ງຕົ້ນຫຍ້າແຜ່ຂະຫຍາຍທົ່ວທັງສວນນັ້ນ
17 ຮາກຂອງມັນເລື້ອຍໄປເກາະກອງຫີນ ແລະຫຍັ່ງລົງໄປໃນອ້ອມກ້ອນຫີນ
18 ຖ້າມັນຖືກທຳລາຍໄປຈາກບ່ອນຂອງມັນ ແລ້ວທີ່ນັ້ນຈະປະຕິເສດວ່າ “ຂ້າບໍ່ເຄີຍເຫັນເຈົ້າ”
19 ເບິ່ງແມ່ ນີ້ເປັນຄວາມຊື່ນບານແຫ່ງທາງຂອງມັນ ແລະສິ່ງອື່ນຈະງອກອອກມາຈາກດິນ
20 ເບິ່ງແມ່ ພຣະເຈົ້າຈະບໍ່ຊົງປະຖິ້ມຄົນດີຮອບຄອບ ຫລືຄໍ້າຈູນຜູ້ກະທຳຄວາມຊົ່ວຮ້າຍ
21 ພຣະອົງຍັງຈະຊົງໃຫ້ປາກຂອງທ່ານຫົວເລາະ ແລະທຳໃຫ້ຮີມຝີປາກຂອງທ່ານໂຮ່ຮ້ອງສເນີ
22 ຄົນເຫລົ່ານັ້ນທີ່ກຽດຊັງທ່ານ ຈະຫົ່ມຄວາມອັບ ອາຍ ແລະເຕັນຂອງຄົນອະທັມຈະບໍ່ມີຕໍ່ໄປອີກເລີຍ

# 9. ໂຢບບໍ່ສາມາດທີ່ຈະທູນຕອບພຣະເຈົ້າໄດ້

1 ແລ້ວໂຢບຕອບວ່າ,

2 "ແມ່ນແທ້ ຂ້າພະເຈົ້າຊາບວ່າເປັນຢ່າງນັ້ນ ແຕ່ຄົນເຮົາຈະຊອບທັມຈຳເພາະພຣະພັກພຣະເຈົ້າໄດ້ຢ່າງໃດ

3 ຖ້າຄົນນຶ່ງຄົນໃດປາຖນາຈະໂຕ້ຖຽງກັບພຣະອົງ ໃນພັນຄັ້ງຜູ້ນັ້ນກໍຕອບພຣະອົງບໍ່ໄດ້ຈັກຄັ້ງດຽວ

4 ພຣະອົງສລາດຢູ່ໃນພຣະທັຍ ແລະພຣະກຳລັງກໍແຂງແຮງ ຜູ້ໃດເຄີຍໄດ້ແຂງຕໍ່ພຣະອົງ ແລະຊນະພຣະອົງ

5 ພຣະອົງຜູ້ຊົງເຄື່ອນພູເຂົາ ແລະພູເຂົາທັງຫລາຍກໍບໍ່ຮູ້ ເມື່ອພຣະອົງຊົງຄວ່ຳມັນເສັຽດ້ວຍພຣະພິໂຣດຂອງພຣະອົງ

6 ຜູ້ຊົງສັ່ນແຜ່ນດິນໂລກໃຫ້ອອກຈາກທີ່ຂອງມັນ ແລະເສົາຂອງມັນກໍສັ່ນສະເທືອນ

7 ຜູ້ຊົງບັນຊາດວງຕາເວັນ ແລະມັນບໍ່ຂຶ້ນ ຜູ້ຊົງຜະນຶກເກັບດວງດາວໄວ້

8 ຜູ້ຊົງຄຶງຟ້າສວັນອອກແຕ່ພຣະອົງດຽວ ແລະຊົງຢ່ຳຄື້ນຂອງທະເລ

9 ຜູ້ຊົງສ້າງດາວແຂ້ແລະດາວໄຖ ດາວລູກໄກ່ ແລະຫມູ່ດາວທິດໃຕ້

10 ຜູ້ຊົງກະທຳຣິດອຳນາດເຫລືອທີ່ຈະເຂົ້າໃຈໄດ້ ແລະການອັດສະຈັນຢ່າງນັບບໍ່ຖ້ວນ

11 ພຣະອົງຊົງຜ່ານໄປ ແລະຂ້າພະເຈົ້າບໍ່ສາມາດສັງເກດເຫັນພຣະອົງໄດ້

12 ເບິ່ງແມ໋ ພຣະອົງຊົງເອົາໄປ ໃຜຈະຫ້າມພຣະອົງໄດ້ ໃຜຈະທູນພຣະອົງວ່າ "ພຣະອົງຊົງກະທຳສິ່ງໃດນັ້ນ"

13 "ພຣະເຈົ້າຈະບໍ່ບິດເບືອນພຣະພິໂຣດຂອງພຣະອົງ ໃຜຊ່ອຍຣາຮາບ ມັງກອນທະເລຕໍ່ຕ້ານພຣະອົງໄດ້

14 ແລ້ວຂ້າພະເຈົ້າຈະຕອບພຣະອົງໄດ້ຢ່າງໃດ ຈະເລືອກຖ້ອຍຄຳອັນໃດມາໂຕ້ຕອບພຣະອົງ

15 ແມ່ນວ່າຂ້າພະເຈົ້າປາສຈາກຄວາມຜິດ ຂ້າພະເຈົ້າກໍຕອບພຣະອົງບໍ່ໄດ້ ຂ້າພະເຈົ້າຈະຕ້ອງຂໍພຣະກະຣຸນາຕໍ່ໂຈດຂອງຂ້າພະເຈົ້າ

16 ຖ້າຂ້າພະເຈົ້າຮ້ອງທູນຕໍ່ພຣະອົງ ແລະພຣະອົງຊົງຕອບຂ້າພະເຈົ້າ ຂ້າພະເຈົ້າຈະບໍ່ເຊື່ອວ່າພຣະອົງຊົງຟັງສຽງຂອງຂ້າພະເຈົ້າ

17 ເພາະພຣະອົງຊົງຂະຍີ້ຂ້າພະເຈົ້າດ້ວຍພະຍຸ ແລະທະວີບາດແຜຂອງຂ້າພະເຈົ້າໂດຍບໍ່ມີເຫດ

18 ພຣະອົງຈະບໍ່ຊົງໃຫ້ຂ້າພະເຈົ້າຫາຍໃຈໄດ້ ແຕ່ເຕີມຄວາມຂົມຂື່ນໃຫ້ຂ້າພະເຈົ້າເຕັມ

19 ຖ້າເປັນການປະລອງກຳລັງ ກໍເບິ່ງພຣະອົງແມ໋ ຖ້າເປັນເຣື່ອງການພິພາກສາໃຜຈະນັດຟ້ອງພຣະອົງໄດ້

20 ເຖິງແມ່ນວ່າຂ້າພະເຈົ້າຊອບທັມ ປາກຂອງຂ້າພະເຈົ້າຈະກ່າວໂທດຂ້າພະເຈົ້າ ແມ່ນວ່າຂ້າພະເຈົ້າຈະດີຮອບຄອບ ພຣະອົງຈະພິສູດວ່າຂ້າພະເຈົ້າບົກພ່ອງ

21 ຂ້າພະເຈົ້າດີຮອບຄອບ ຂ້າພະເຈົ້າບໍ່ໄຍດີໃນຕົວຂ້າພະເຈົ້າ ຂ້າພະເຈົ້າກຽດຊັງຊີວິດຂອງຂ້າພະເຈົ້າ

22 ກໍເຫມືອນກັນຫມົດ ເພາະສະນັ້ນຂ້າພະເຈົ້າຈິ່ງວ່າ ພຣະອົງຊົງທຳລາຍທັງຄົນດີຮອບຄອບແລະຄົນອະທັມ

23 ເມື່ອໄພວິບັດນຳຄວາມຕາຍມາໂດຍບໍ່ຄາດຝັນ ພຣະອົງຊົງເຍາະເຍີ້ຍຄວາມທຸກລຳບາກຂອງຜູ້ປາສຈາ
ກຄວາມຜິດ
24 ແຜ່ນດິນໂລກນີ້ຊົງມອບໄວ້ໃນມືຂອງຄົນອະທັມ ພຣະອົງຊົງປິດຫນ້າບັນດາຜູ້ປົກຄອງໂລກ ຖ້າບໍ່ແມ່ນ
ພຣະອົງ ແລ້ວໃຜຫນໍທີ່ຈະທຳສິ່ງເຫລົ່ານີ້
25 "ວັນທັງຫລາຍຂອງຂ້າພຣະອົງໄວກວ່ານັກແລ່ນ ມັນຜ່ານພົ້ນໄປ ມັນບໍ່ເຫັນມີສິ່ງໃດດີ
26 ມັນຜ່ານໄປຢ່າງກັບເຮືອໄວ ດັ່ງນົກອິນຊີເຈີດລົງຊຸບເຫຍື່ອ
27 ຖ້າຂ້າພຣະອົງວ່າ, "ຂ້າພະຈົ້າຈະລືມຄຳຮ້ອງທຸກຂອງຂ້າພະເຈົ້າ ຂ້າພະເຈົ້າຈະຖິ້ມຫນ້າໂສກເສົ້າຂອງຂ້າ
ພະເຈົ້າເສັຽ ແລະເບີກບານມ່ວນຊື່ນ"
28 ຂ້າພຣະອົງເກີດຄວາມຢ້ານບັນດາຄວາມທຸກຂອງຂ້າພຣະອົງ ເພາະຂ້າພຣະອົງຮູ້ວ່າ ພຣະອົງຈະບໍ່ຖືວ່າ
ຂ້າພຣະອົງປາສຈາກຄວາມຜິດ
29 ຂ້າພຣະອົງຈະຖືກກ່າວໂທດ ແລະເປັນຫຍັງຈະຕ້ອງມາຮັບກວນຂ້າພຣະອົງ
30 ຖ້າຂ້າພຣະອົງຊຳຣະຕົວຂອງຂ້າພຣະອົງດ້ວຍສະບູ ແລະລ້າງມືຂອງຂ້າພຣະອົງຈາກການບາບ
31 ພຣະອົງຍັງຈະຊົງຈຸ່ມຂ້າພຣະອົງລົງໄປໃນບໍ່ ເສື້ອຜ້າຂອງຂ້າພຣະອົງຈະລັງກຽດຂ້າພຣະອົງ
32 ພຣະອົງບໍ່ແມ່ນມະນຸດຢ່າງຂ້າພຣະອົງ ທີ່ຂ້າພຣະອົງຈະຕອບພຣະອົງ ຊຶ່ງເຮົາຈະມາສູ້ຄະດີດ້ວຍກັນ
33 ບໍ່ມີຄົນກາງລະຫວ່າງເຮົາ ຜູ້ຊຶ່ງຈະຕັດສິນຄວາມເຮົາທັງສອງໄດ້
34 ຂໍໃຫ້ພຣະອົງຊົງນຳໄມ້ແສ້ໄປຈາກຂ້າພຣະອົງເສັຽ ແລະຂໍຈົ່ງເອົາຄວາມຢ້ານອັນໃຫຍ່ໄປຈາກຂ້າພຣະອົງ
35 ແລ້ວຂ້າພະອົງຈະເວົ້າ ແລະບໍ່ຢ້ານພຣະອົງ ເພາະໃຈຈິງຂອງຂ້າພຣະອົງບໍ່ເປັນຢ່າງນັ້ນ

## 10. ໂຢບຄ່ຳຄວນເຖິງສະພາບຂອງຕົນ

1 "ຂ້າພະເຈົ້າເບື່ອຊີວິດຂອງຂ້າພະເຈົ້າ ຂ້າພະເຈົ້າຈະຮ້ອງທຸກຢ່າງບໍ່ຢັບຢັ້ງ ຂ້າພະເຈົ້າຈະເວົ້າດ້ວຍຈິດໃຈ
ຂົມຂື່ນຂອງຂ້າພະເຈົ້າ
2 ຂ້າຈະທູນພຣະເຈົ້າວ່າ ຂໍຢ່າຊົງກ່າວໂທດຂ້າພຣະອົງ ຂໍໃຫ້ຂ້າພຣະອົງຮູ້ວ່າເປັນຫຍັງພຣະອົງຈຶ່ງຊົງກ່າວ
ຟ້ອງກັບຂ້າພຣະອົງ
3 ພຣະອົງຊົງເຫັນຊອບແລ້ວຫລືທີ່ຈະບີບບັງຄັບ ທີ່ຈະຫມິ່ນພຣະຫັດຖະກິດຂອງພຣະອົງ ແລະຊົງໂຜດແຜນ
ການຂອງຄົນອະທັມ
4 ພຣະອົງຊົງມີພຣະເນດຢ່າງຕາຄົນຫລື ພຣະອົງຊົງເຫັນຢ່າງມະນຸດເຫັນຫລື
5 ວັນຂອງພຣະອົງເຫມືອນວັນຂອງມະນຸດຫລື ປີຂອງພຣະອົງເຫມືອນວັນຄືນຂອງຄົນເຮົາຫລື
6 ທີ່ພຣະອົງຊົງຄອຍຈັບຜິດຂ້າພຣະອົງ ແລະຊອກຫາບາບຂອງຂ້າພຣະອົງ
7 ພຣະອົງຊົງຮູ້ດີວ່າຂ້າພຣະອົງບໍ່ໄດ້ເປັນຄົນຊອບທັມ ແລະບໍ່ມີໃຜຊ່ອຍຂ້າພຣະອົງໃຫ້ຫວິດອອກຈາກພຣະ
ຫັດຂອງພຣະອົງໄດ້

8 ພຣະຫັດຂອງພຣະອົງປັ້ນ ແລະຊົງສ້າງຂ້າພຣະອົງ ແລະບັດນີ້ພຣະອົງຊົງກັບຄືນມາທຳລາຍຂ້າພຣະອົງ
9 ຂໍຊົງຣະລຶກເຖີງວ່າພຣະອົງຊົງສ້າງຂ້າພຣະອົງດ້ວຍດິນ ພຣະອົງຈະຊົງນຳຂ້າພຣະອົງໃຫ້ກັບຄືນເປັນຝຸ່ນຂີ້ດິນອີກຫລື
10 ພຣະອົງບໍ່ໄດ້ຊົງຖອກເທຂ້າພຣະອົງອອກຢ່າງນ້ຳນົມ ແລະທຳຂ້າພຣະອົງໃຫ້ແຂງເຫມືອນເນີຍແຂງຫລື
11 ພຣະອົງຊົງຫົ່ມຂ້າພຣະອົງໄວ້ດ້ວຍຫນັງແລະເນື້ອ ແລະຊົງສານຂ້າພຣະອົງດ້ວຍກະດູກ ແລະເສັ້ນເອັນ
12 ພຣະອົງຊົງໄດ້ໃຫ້ຊີວິດ ແລະຄວາມຮັກຫມັ້ນຄົງແກ່ຂ້າພຣະອົງ ແລະຄວາມດູແລຮັກສາຂອງພຣະອົງໄດ້ສວມຈິດວິນຍານຂ້າພຣະອົງໄວ້
13 ແຕ່ສິ່ງຕໍ່ໄປນີ້ພຣະອົງຊົງເຊື່ອງໄວ້ໃນພຣະທັຍຂອງພຣະອົງ ຂ້າພຣະອົງຮູ້ວ່ານີ້ເປັນພຣະປະສົງຂອງພຣະອົງ
14 ຖ້າຂ້າພຣະອົງທຳບາບ ພຣະອົງຊົງຫມາຍຂ້າພຣະອົງໄວ້ ແລະບໍ່ຊົງປ່ອຍຕົວຂ້າພຣະອົງໃຫ້ພົ້ນໂທດຄວາມຜິດບາບຂອງຂ້າພຣະອົງ
15 ຖ້າຂ້າພຣະອົງຊົ່ວຮ້າຍ ວິບັດແກ່ຂ້າພຣະອົງ ຖ້າຂ້າພຣະອົງຊອບທັມ ຂ້າພຣະອົງຍັງເງີຍສີສະຂອງຂ້າພຣະອົງຂຶ້ນບໍ່ໄດ້ ເພາະຂ້າພຣະອົງເຕັມໄປດ້ວຍຄວາມອັບອາຍ ແລະມອງເບິ່ງຄວາມທຸກໃຈຂອງຂ້າພຣະອົງ
16 ແລະຖ້າຂ້າພຣະອົງຈະຍົກຕົວຂຶ້ນ ພຣະອົງຈະຊົງໄລ່ຊຸບຂ້າພຣະອົງເຫມືອນດັ່ງສິງທີ່ດຸຮ້າຍ ແລະຊົງທຳການອັດສະຈັນສູ້ຂ້າພຣະອົງອີກ
17 ພຣະອົງຊົງມີພຍານຂອງພຣະອົງປັກປຳຂ້າພຣະອົງໃຫມ່ ແລະຊົງເພີ້ມຄວາມຮ້ອນພຣະທັຍຂອງພຣະອົງໃນຂ້າພຣະອົງພຣະອົງຊົງນຳພົນໂຍທາໃຫມ່ໆມາສູ້ຂ້າພຣະອົງ
18 "ເປັນຫຍັງພຣະອົງຊົງນຳຂ້າພຣະອົງອອກມາຈາກທ້ອງແມ່ ບໍ່ດັ່ງນັ້ນຂ້າພຣະອົງຄົງຕາຍກ່ອນຕາໃດໆໄດ້ເຫັນຂ້າພຣະອົງ
19 ເຫມືອນຢ່າງກັບວ່າຂ້າພຣະອົງບໍ່ໄດ້ເກີດມາ ຂ້າພຣະອົງຄົງຖືກນຳຈາກທ້ອງແມ່ໄປເຖີງຫລຸມຝັງສົບແລ້ວ
20 ວັນຄືນຊີວິດຂອງຂ້າພຣະອົງບໍ່ຫນ້ອຍຫລື ຂໍໃຫ້ຂ້າພຣະອົງຢູ່ຄົນດຽວ ເພື່ອຂ້າພຣະອົງຈະຍິນດີກັບເວລາທີ່ຍັງເຫລືອຫນ້ອຍນື່ງ
21 ກ່ອນທີ່ຂ້າພຣະອົງຈະໄປຍັງບ່ອນທີ່ຂ້າພຣະອົງບໍ່ກັບເຖິງແຜ່ນດິນແຫ່ງຄວາມມືດແລະເງົາມັດຈຸຣາຊ
22 ແຜ່ນດິນແຫ່ງຄວາມມືດເຫຍີງຫຍຸ່ງເຕັມແຕ່ເງົາມັດຈຸຣາຊບໍ່ມີລະບຽບ ທີ່ຄວາມສວ່າງເປັນເຫມືອນຄວາມມືດດຳຄລອດ

## 11. ໂຊຟາກ່າວໂທດໂຢບ

1 ແລ້ວໂຊຟາ ຊາວນາອາມາຕອບວ່າ,
2 "ຄວນທີ່ຈະຟັງມວນຖ້ອຍຄຳໂດຍບໍ່ມີໃຜຕອບຫລື ແລະຄົນທີ່ເວົ້າຫລາຍຄວນຖືວ່າຊອບທັມຫລື

3 ຄວນທີ່ຄຳເວົ້າອັນປາສຈາກເຫດຜົນຂອງທ່ານເຮັດໃຫ້ຄົນມິດ ແລະເມື່ອທ່ານເຍາະເຍີ້ຍບໍ່ຄວນມີຜູ້ໃດ
ເຮັດໃຫ້ທ່ານອັບອາຍຫລື
4 ເພາະທ່ານວ່າ "ຄຳສອນຂອງຂ້າພະເຈົ້າບໍຣິສຸດ ແລະຂ້າພະເຈົ້າກໍສະອາດໃນສາຍພຣະເນດພຣະເຈົ້າ"
5 ແຕ່ວ່າ ໂອ ຢາກໃຫ້ພຣະເຈົ້າບອກ ແລະຊົງເປີດຮີມພຣະໂອດຂອງພຣະອົງສັ່ງກັບທ່ານ
6 ຢາກຈະໃຫ້ພຣະອົງຊົງສຳແດງສິ່ງເລິກລັບຂອງສະຕິປັນຍາໃຫ້ທ່ານ ເພາະຄວາມເຂົ້າໃຈຂອງພຣະອົງມີ
ຫລາຍສິ່ງເລິກໂພດສຳລັບມະນຸດທີ່ຈະເຂົ້າໃຈ ຈົ່ງຮູ້ເຖີດວ່າພຣະເຈົ້າຊົງຮຽກຮ້ອງຈາກທ່ານໜ້ອຍກວ່າກັມ
ຊົ່ວຂອງທ່ານຄວນຈະໄດ້ຮັບ
7 "ທ່ານຈະຢັ່ງຮູ້ສະພາບຂອງພຣະເຈົ້າໄດ້ຫລື ທ່ານຢັ່ງຮູ້ອົງຜູ້ມີອຳນາດຍິ່ງໃຫຍ່ໄດ້ໝົດຫລື
8 ນັ້ນສູງກວ່າຟ້າສວັນ ທ່ານຈະທຳສິ່ງໃດໄດ້ ເລິກກວ່າແດນມໍຣະນາ ທ່ານຈະຮູ້ໄດ້ຢ່າງໃດ
9 ວັດແທກເບິ່ງກໍຍາວກວ່າໂລກ ແລະກວ້າງກວ່າທະເລ
10 ຖ້າພຣະອົງຊົງຜ່ານໄປ ແລະຊົງຄຸມຂັງ ແລະຊົງເອີ້ນມາພິພາກສາ ໃຜຈະຂັດຂວາງພຣະອົງໄດ້
11 ເພາະພຣະອົງຊົງຮູ້ຄົນໄຮ້ຄ່າ ເມື່ອພຣະອົງຊົງເຫັນຄວາມຜິດບາບ ພຣະອົງຈະບໍ່ຊົງພິຈາຣະນາຫລື
12 ແຕ່ຄົນໂງ່ຈະໄດ້ຄວາມເຂົ້າໃຈກໍເມື່ອລູກລໍປ່າເກີດມາເປັນຄົນ
13 "ຖ້າທ່ານຕຽມໃຈຂອງທ່ານໄວ້ ແລະທ່ານຢຽດແຂນຂອງທ່ານອອກໄປຫາພຣະອົງ
14 ຖ້າຄວາມບາບຊົ່ວຢູ່ໃນມືຂອງທ່ານຖິ້ມເສັຽໃຫ້ໄກ ແລະຢ່າໃຫ້ຄວາມອະທັມອາໄສຢູ່ໃນເຕັນຂອງທ່ານ
15 ແລ້ວທ່ານຈະເງີຍໜ້າຂຶ້ນໂດຍປາສຈາກຕຳໜິ ທ່ານຈະປອດໄພ ແລະບໍ່ຕ້ອງຢ້ານ
16 ທ່ານຈະລືມຄວາມຍາກລຳບາກຂອງທ່ານ ທ່ານຈະຈົດຈຳໄດ້ເໝືອນນ້ຳທີ່ໄດ້ໄຫລຜ່ານພົ້ນໄປ
17 ແລ້ວຊີວິດຂອງທ່ານຈະສຸກໃສຍິ່ງກວ່າເວລາທ່ຽງວັນ ເຖິງແມ່ນຈະມີຄວາມມືດກໍຈະເໝືອນເວລາຮຸ່ງເຊົ້າ
18 ແລະທ່ານຈະຮູ້ສຶກປອດໄພ ເພາະມີຄວາມຫວັງ ທ່ານຈະສຳລວດເບິ່ງ ແລະນອນພັກຢ່າງປອດໄພ
19 ທ່ານຈະນອນລົງ ແລະບໍ່ມີໃຜທຳໃຫ້ທ່ານຢ້ານ ຄົນເປັນຈຳນວນຫລາຍຈະມາອ້ອນວອນຂໍຄວາມຊ່ອຍ
ເຫລືອຈາກທ່ານ
20 ແຕ່ຕາຂອງຄົນອະທັມຈະມືດມົວ ຫົນທາງທີ່ລອດພົ້ນຈະອັນຕະທານຫາຍໄປຈາກເຂົາ ແລະຄວາມຫວັງ
ຂອງເຂົາກໍຄືຄວາມຕາຍນັ້ນເອງ"

## 12. ໂຢບຢືນຢັນເຖິງພຣະກຳລັງ ແລະພຣະສະຕິປັນຍາຂອງພຣະເຈົ້າ

1 ແລ້ວໂຢບຕອບວ່າ,
2 "ບໍ່ຕ້ອງສົງໄສເລີຍວ່າທ່ານທັງຫລາຍເປັນສຽງຂອງປະຊາຊົນ ແລະສະຕິປັນຍາຈະຕາຍໄປພ້ອມກັບທ່ານ
3 ແຕ່ຂ້າພະເຈົ້າກໍມີຄວາມເຂົ້າໃຈຢ່າງກັບທ່ານ ຂ້າພະເຈົ້າກໍບໍ່ດ້ອຍກວ່າທ່ານ ເຣື່ອງຢ່າງນີ້ໃຜຈະບໍ່ຮູ້
4 ຂ້າພະເຈົ້າເປັນຄົນທີ່ໃຫ້ເພື່ອນຂອງຂ້າພະເຈົ້າເຍາະເຍີ້ຍ ຂ້າພະເຈົ້າຜູ້ຮ້ອງທູນພຣະເຈົ້າ ແລະພຣະອົງຊົງ
ຕອບຂ້າພະເຈົ້າ ຄົນຊອບທັມແລະຄົນດີຮອບຄອບເປັນທີ່ໃຫ້ເຂົາຫົວຫຍໍ້ຫຍັນ

5 ໃນຄວາມຄິດຂອງຜູ້ທີ່ຢູ່ຢ່າງສະບາຍມີຄວາມປມາດຕໍ່ການເຄາະຮ້າຍ ຊຶ່ງມີພ້ອມຢູ່ສຳລັບບັນດາຜູ້ທີ່ເທົ້າພລາດລົ້ມ
6 ເຕັນຂອງໂຈນກໍຢູ່ຢ່າງສງົບສຸກ ແລະບຸກຄົນທີ່ຍົວະເຍົ້າພຣະເຈົ້າກໍປອດໄພ ຄືຜູ້ທີ່ນຳພຣະຂອງເຂົາຕິດມືມາ
7 "ແຕ່ ຂໍຖາມສັດເດັງຣະສານ ແລະມັນຈະສອນທ່ານ ຖາມນົກໃນອາກາດເບິ່ງ ແລະມັນຈະບອກທ່ານ
8 ຫລືເວົ້າກັບແຜ່ນດິນໂລກ ແລະມັນຈະສອນທ່ານ ແລະຖາມປາທະເລ ມັນຈະປະກາດແກ່ທ່ານ
9 ໃນສິ່ງເຫລົ່ານີ້ມີສິ່ງໃດທີ່ບໍ່ຮູ້ວ່າ ພຣະຫັດຂອງພຣະເຈົ້າຊົງກະທຳໃຫ້ເປັນໄປຢ່າງນັ້ນ
10 ຊີວິດຂອງສິ່ງທີ່ມີຊີວິດທຸກຢ່າງຢູ່ໃນພຣະຫັດຂອງພຣະອົງ ທັງລົມຫາຍໃຈຂອງມະນຸດທັງປວງ
11 ຫູບໍ່ໄດ້ທົດລອງຖ້ອຍຄຳ ເຫມືອນດັ່ງລີ້ນຊີມຣົດອາຫານຫລື
12 ສະຕິປັນຍາຢູ່ກັບຄົນມີອາຍຸຫລາຍ ແລະອາຍຸຍືນຍາວທຳໃຫ້ເກີດຄວາມເຂົ້າໃຈ
13 "ສະຕິປັນຍາ ແລະຣິດທານຸພາບຢູ່ກັບພຣະເຈົ້າ ພຣະອົງຊົງມີຄຳແນະນຳແລະຄວາມເຂົ້າໃຈ
14 ຖ້າພຣະອົງຊົງພັງທະລາຍລົງກໍບໍ່ມີຜູ້ໃດສ້າງໃຫມ່ໄດ້ ຖ້າພຣະອົງຊົງກັກຂັງມະນຸດຄົນນຶ່ງໄວ້ ກໍບໍ່ມີໃຜເປີດໄດ້
15 ຖ້າພຣະອົງຊົງຍຶດນໍ້າໄວ້ ມັນກໍແຫ້ງໄປ ຖ້າພຣະອົງຊົງສົ່ງມັນອອກໄປ ມັນກໍຖ້ວມແຜ່ນດິນ
16 ພຣະກຳລັງແລະພຣະສະຕິປັນຍາຢູ່ກັບພຣະອົງ ຜູ້ຖືກລວງທັງຜູ້ລວງເປັນຂອງພຣະອົງ
17 ພຣະອົງຊົງເອົາປັນຍາໄປຈາກພວກຜູ້ປຶກສາ ແລະພຣະອົງຊົງກະທຳໃຫ້ຜູ້ພິພາກສາເປັນຄົນໂງ່
18 ພຣະອົງຊົງແກ້ພັນທະນາການຂອງພຣະຣາຊາ ແລະຊົງຜູກມັດເອວຂອງກະສັດເຫລົ່ານັ້ນ
19 ພຣະອົງກະທຳໃຫ້ປະໂຣຫິດຍ່າງໄປເທົ້າເປົ່າ ແລະຊົງຄວໍ່າຜູ້ມີກຳລັງເສັຽ
20 ພຣະອົງຊົງເອົາຄຳເວົ້າໄປເສັຽຈາກຜູ້ທີ່ເຂົາວາງໃຈ ແລະຊົງນຳການພິນິດພິຈາຣະນາໄປເສັຽຈາກພວກຜູ້ໃຫຍ່
21 ພຣະອົງຊົງຖອກເທຄວາມຢຽດຫຍາມໃສ່ເທິງເຈົ້ານາຍ ແລະຂະຫຍາຍສາຍແອວຂອງຜູ້ທີ່ແຂງແຮງ
22 ພຣະອົງຊົງເປີດສິ່ງທີ່ເລິກອອກມາຈາກຄວາມມືດ ແລະຊົງນຳເງົາມັດຈຸຣາຊມາສູ່ຄວາມສວ່າງ
23 ພຣະອົງຊົງກະທຳປະຊາຊາດໃຫ້ໃຫຍ່ຂຶ້ນ ແລະພຣະອົງຊົງທຳລາຍເສັຽ ພຣະອົງຊົງຂະຫຍາຍບັນດາປະຊາຊາດ ແລະຊົງນຳເຂົາທັງຫລາຍໄປເປັນຊະເລີຍ
24 ພຣະອົງຊົງນຳຄວາມເຂົ້າໃຈໄປເສັຽຈາກຫົວຫນ້າຊາວໂລກ ແລະຊົງກະທຳໃຫ້ເຂົາພະເນຈອນໄປໃນຖິ່ນກັນດານຊຶ່ງບໍ່ມີຫົນທາງ
25 ເຂົາທັງຫລາຍງົມທາວຢູ່ໃນຄວາມມືດປາສຈາກຄວາມສວ່າງ ແລະພຣະອົງຊົງທຳໃຫ້ເຂົາໂຊເຊເຫມືອນຢ່າງຄົນເມົາ

# 13.

1 ເບິ່ງແມ່ ຕາຂອງຂ້າພະເຈົ້າໄດ້ເຫັນສິ່ງທັງຫມົດນີ້ແລ້ວ ຫູຂອງຂ້າພະເຈົ້າໄດ້ຍິນແລະເຂົ້າໃຈເຣື່ອງນີ້ແລ້ວ
2 ສິ່ງໃດທີ່ທ່ານທັງຫລາຍຮູ້ ຂ້າພະເຈົ້າກໍຮູ້ເຫມືອນກັນ ຂ້າພະເຈົ້າບໍ່ດ້ອຍກວ່າທ່ານ
3 ແຕ່ຂ້າພະເຈົ້າຢາກທູນຕໍ່ອົງຜູ້ມີອຳນາດຍິ່ງໃຫຍ່ ແລະປາຖນາຈະສູ້ຄະດີຂອງຂ້າພະເຈົ້າກັບພຣະອົງ
4 ສ່ວນທ່ານ ທ່ານປິດບັງຄວາມໂງ່ດ້ວຍການມຸສາ ທ່ານທັງປວງເປັນຫມໍທີ່ໃຊ້ບໍ່ໄດ້
5 ໂອ ທ່ານຫນ້າຈະມິດງຽບຢູ່ ແລະຄວາມງຽບນັ້ນຈະເປັນສະຕິປັນຍາຂອງທ່ານ
6 ບັດນີ້ຂໍຟັງການຫາເຫດຜົນຂອງຂ້າພະເຈົ້າ ແລະຂໍຟັງຄຳອ້ອນວອນແຫ່ງຮີມຝີປາກຂອງຂ້າພະເຈົ້າ
7 ທ່ານທັງຫລາຍຈະເວົ້າເທັດເພື່ອພຣະເຈົ້າຫລື ແລະເວົ້າລວງເພື່ອພຣະອົງຫລື
8 ທ່ານທັງຫລາຍຈະສະແດງຄວາມລຳອຽງເຂົ້າຂ້າງພຣະອົງຫລື ທ່ານຈະວ່າຄວາມຝ່າຍພຣະເຈົ້າຫລື
9 ເມື່ອພຣະອົງຊົງຄົ້ນທ່ານພົບ ຈະດີແກ່ທ່ານບໍ ຫລືທ່ານຈະລວງພຣະອົງໄດ້ ເຫມືອນດັ່ງຜູ້ນຶ່ງຜູ້ໃດລວງມະນຸດຫລື
10 ພຣະອົງຈະຊົງຕຳຫນິທ່ານທັງຫລາຍແນ່ນອນ ຖ້າທ່ານສະແດງຄວາມລຳອຽງຢ່າງລັບໆ
11 ຣິດອຳນາດຂອງພຣະອົງຈະບໍ່ກະທຳໃຫ້ທ່ານຢ້ານກົວ ແລະຄວາມຢ້ານກົວຕໍ່ພຣະອົງຈະບໍ່ຕົກເຫນືອທ່ານຫລື
12 ຄຳເປັນຄະຕິຂອງທ່ານເປັນທຸພາສິດ ເຄື່ອງປ້ອງກັນຕົວຂອງທ່ານເປັນເຫມືອນດັ່ງດິນດາກ
13 “ຈົ່ງມິດ ແລະຂ້າພະເຈົ້າຈະເວົ້າ ແລະສິ່ງໃດຈະເກີດແກ່ຂ້າພະເຈົ້າກໍຂໍໃຫ້ເກີດເຖີດ
14 ຂ້າພະເຈົ້າພ້ອມແລ້ວທີ່ຈະປະເຊີນທຸກສິ່ງ ແມ່ນຈະສ່ຽງຊີວິດຂອງຕົນກໍຍິນຍອມທັງນັ້ນ
15 ເບິ່ງແມ່ ພຣະອົງຈະຊົງປະຫານເສັຽຂ້າພະເຈົ້າເສັຽ ຂ້າພະເຈົ້າບໍ່ມີຄວາມຫວັງໃຈ ແຕ່ຂ້າພະເຈົ້າຍັງຈະແກ້ຕົວຂອງຂ້າພະເຈົ້າຕໍ່ພຣະພັກພຣະອົງ
16 ຂໍ້ນີ້ຈະເປັນຄວາມລອດຂອງຂ້າພະເຈົ້າດ້ວຍ ຄືຄົນທີ່ບໍ່ນັບຖືພຣະເຈົ້າຈະບໍ່ໄດ້ເຂົ້າມາຕໍ່ເບື້ອງພຣະພັກພຣະອົງ
17 ຂໍຟັງຖ້ອຍຄຳຂອງຂ້າພະເຈົ້າຢ່າງລະມັດລະວັງ ແລະໃຫ້ຄຳກ່າວຂອງຂ້າພະເຈົ້າຢູ່ໃນຫູຂອງທ່ານ
18 ເບິ່ງແມ່ ຂ້າພະເຈົ້າຕຽມຄະດີຂອງຂ້າພະເຈົ້າແລ້ວ ຂ້າພະເຈົ້າຮູ້ວ່າຈະປາກົດວ່າຂ້າພະເຈົ້າບໍຣິສຸດ
19 ແມ່ນໃຜຈະສູ້ຄະດີກັບຂ້າພະເຈົ້າ ຖ້າຢ່າງນັ້ນຂ້າພະເຈົ້າຈະມິດເສັຽ ແລະຕາຍ
20 ຂໍຊົງໂຜດສອງສິ່ງແກ່ຂ້າພຣະອົງ ແລ້ວຂ້າພຣະອົງຈະບໍ່ປິດບັງຈາກພຣະພັກພຣະອົງ
21 ຂໍຊົງຫົດພຣະຫັດໃຫ້ໄກຈາກຂ້າພຣະອົງ ແລະຂໍຢ່າຢຽບຢຳຂ້າພຣະອົງໃຫ້ຕ້ອງຢ້ານກົວພຣະອົງ
22 ຂໍພຣະອົງຊົງເອີ້ນເຖີດ ແລ້ວຂ້າພຣະອົງຈະທູນຕອບ ຫລືຂໍໃຫ້ຂ້າພຣະອົງທູນ ແລະຂໍພຣະອົງຊົງຕອບແກ່ຂ້າພຣະອົງ
23 ບັນດາຄວາມຜິດຂອງຂ້າພຣະອົງມີເທົ່າໃດ ຂໍຊົງໂຜດໃຫ້ຂ້າພຣະອົງຮູ້ເຖິງການທໍຣະຍົດ ແລະບາບຂອງຂ້າພຣະອົງ

24 ເປັນຫຍັງພຣະອົງຊົງປິ່ນພຣະພັກຫນີ ແລະຊົງນັບວ່າຂ້າພຣະອົງເປັນສັດຕູຂອງພຣະອົງ
25 ພຣະອົງຈະຊົງໃຫ້ໃບໄມ້ທີ່ຖືກລົມພັດຕົກໃຈຫລື ແລະຈະຊົງໄລ່ຕິດຕາມເຟືອງແຫ້ງຫລື
26 ເພາະພຣະອົງຊົງຈາຣຶກສິ່ງຂົມຂື່ນຕໍ່ສູ້ກັບຂ້າພຣະອົງ ແລະຊົງກະທໍາໃຫ້ຂ້າພຣະອົງຮັບໂທດຄວາມຜິດ
ບາບທີ່ຂ້າພຣະອົງກະທໍາເມື່ອຍັງຫນຸ່ມຢູ່
27 ພຣະອົງຊົງໃສ່ເທົ້າຂອງຂ້າພຣະອົງໄວ້ໃນໂສ້ ແລະຊົງເຝົ້າເບິ່ງທາງທັງສິ້ນຂອງຂ້າພຣະອົງ ພຣະອົງ
ຊົງຈໍາກັບເຂດໃຫ້ແກ່ບາດກ້າວຂອງຂ້າພຣະອົງ
28 ມະນຸດຊຸດໂຊມໄປເຫມືອນຂອງເນົ່າ ເຫມືອນຜ້າທີ່ມອດກັດກິນລາມໄປທົ່ວ

## 14.

1 “ມະນຸດທີ່ເກີດມາໂດຍຜູ້ຍິງກໍຢູ່ແຕ່ຫນ້ອຍວັນ ແລະເຕັມໄປດ້ວຍຄວາມຫຍຸ້ງຍາກໃຈ
2 ເຂົາອອກມາເຫມືອນດອກໄມ້ ແລະກໍຫ່ຽວແຫ້ງໄປ ເຂົາລີ້ໄປຢ່າງເງົາແລະບໍ່ຢູ່ຕໍ່ໄປອີກ
3 ແລະພຣະອົງຊົງລືມພຣະເນດເບິ່ງຄົນຢ່າງນີ້ຫລື ແລະນໍາເຂົາມາໃນການພິພາກສາຂອງພຣະອົງຫລື
4 ໃຜຈະເອົາສິ່ງສະອາດອອກມາຈາກສິ່ງທີ່ບໍ່ສະອາດໄດ້ ບໍ່ມີຈັກຄົນ
5 ວັນເວລາຂອງເຂົາຖືກກໍາຫນົດໄວ້ເສັ້ງແລ້ວ ແລະຈໍານວນເດືອນຂອງເຂົາກໍຢູ່ກັບພຣະອົງ ພຣະອົງຊົງກໍາ
ຫນົດຂອບເຂດຂອງເຂົາບໍ່ໃຫ້ເຂົາຜ່ານໄປໄດ້
6 ສະນັ້ນ ຂໍຊົງປິ່ນພຣະພັກຫນີໄປຈາກເຂົາ ແລະຊົງລືມເຖີດ ພຣະເຈົ້າຂ້າ ເພື່ອໃຫ້ເຂົາຊື່ນບານໃຈດ້ວຍວັນ
ຂອງເຂົາຢ່າງລູກຈ້າງ
7 “ເພາະສໍາລັບຕົ້ນໄມ້ກໍມີຄວາມຫວັງ ຖ້າມັນຖືກຕັດລົງ ມັນກໍແຕກຫນໍ່ອີກ ແລະຫນໍ່ອ່ອນຂອງມັນຈະບໍ່ຢຸດ
ຢັ້ງ
8 ເຖິງຮາກຂອງມັນຈະແກ່ຢູ່ໃນດິນ ແລະຕໍຂອງມັນຈະຕາຍຢູ່ໃນຝຸ່ນຂີ້ດິນ
9 ແຕ່ພໍໄດ້ກິ່ນໄອຂອງນໍ້າ ມັນຈະງອກຂຶ້ນ ແລະແຕກກິ່ງອອກເຫມືອນຕົ້ນໄມ້ອ່ອນ
10 ແຕ່ມະນຸດຕາຍແລ້ວແມ່ນໄປສູ່ຈຸດຈົບ ມະນຸດສິ້ນລົມຫາຍໃຈແລະເຂົາຢູ່ທີ່ໃດ
11 ນໍ້າຂາດຈາກທະເລສາບໄປ ແລະແມ່ນໍ້າກໍເຫືອດແລະແຫ້ງໄປສັນໃດ
12 ດັ່ງນັ້ນແຫລະ ມະນຸດກໍນອນລົງແລະບໍ່ລຸກຂຶ້ນອີກ ຈົນທ້ອງຟ້າບໍ່ມີອີກ ເຂົາກໍບໍ່ຕື່ນຂຶ້ນ ແລະປຸກເຂົາກໍບໍ່ໄດ້
13 ໂອ ຫາກພຣະອົງຊົງເຊື່ອງຂ້າພຣະອົງໄວ້ໃນພິພົບຄົນຕາຍກໍຈະດີ ຢາກຈະໃຫ້ພຣະອົງຊົງປົກປິດຂ້າພຣະ
ອົງໄວ້ຈົນພຣະພິໂຣດຂອງພຣະອົງພົ້ນໄປ ຢາກຈະໃຫ້ພຣະອົງຊົງກໍາຫນົດເວລາໃຫ້ຂ້າພຣະອົງ ແລະຊົງ
ລະຣຶກເຖິງຂ້າພຣະອົງ
14 ຖ້າມະນຸດຕາຍແລ້ວ ເຂົາຈະມີຊີວິດອີກຫລື ຂ້າພຣະອົງຈະຄອຍຢູ່ຄລອດວັນ ປະຈໍາການຂອງຂ້າພຣະອົງ
ຈົນກວ່າການປົດປ່ອຍຂອງຂ້າພຣະອົງຈະມາເຖິງ

15 ພຣະອົງຈະຊົງເອີ້ນ ແລະຂ້າພຣະອົງຈະທູນຕອບພຣະອົງ ພຣະອົງຈະຊົງອາໄລອາວອນພຣະຫັດຖະກິດ
ຂອງພຣະອົງ
16 ແຕ່ພຣະອົງຊົງນັບບາດກ້າວຂອງຂ້າພຣະອົງ ພຣະອົງບໍ່ໄດ້ຊົງຊອມຈັບຜິດຂ້າພຣະອົງຫລື
17 ການທໍຣະຍົດຂອງຂ້າພຣະອົງນັ້ນຊົງໃສ່ໄວ້ໃນຖົງທີ່ມີຕຣາ ແລະພຣະອົງຊົງມັດຄວາມບາບຜິດຂອງຂ້າ
ພຣະອົງໄວ້
18 "ແຕ່ພູເຂົາກໍທະລາຍລົງ ແລະເພພັງໄປ ແລະກ້ອນຫີນກໍຖືກຍ້າຍໄປຈາກບ່ອນຂອງມັນ
19 ນໍ້າເຊາະຫີນໄປເສັຽ ກະແສນໍ້າພັດພາດິນແຫ່ງແຜ່ນດິນໂລກໄປ ພຣະອົງຊົງທໍາລາຍຄວາມຫວັງຂອງມະ
ນຸດເຊັ່ນກັນ
20 ພຣະອົງຊົງຊນະເຂົາສເມີ ແລະເຂົາກໍລ່ວງລັບໄປ ພຣະອົງຊົງປ່ຽນໃບຫນ້າຂອງເຂົາ ແລະຊົງສົ່ງເຂົາໄປ
ເສັຽ
21 ບັນດາບຸດຂອງເຂົາໄດ້ຮັບກຽດ ແລະເຂົາກໍບໍ່ຮູ້ ເຂົາທັງຫລາຍຕົກຕໍ່າລົງ ແຕ່ເຂົາບໍ່ຢັ່ງຮູ້ໄດ້
22 ເຂົາຮູ້ສຶກພຽງຄວາມເຈັບໃນຮ່າງກາຍຂອງຕົນ ແລະເຂົາຄໍ່າຄວນເພື່ອຕົວເຂົາເອງ"

## 15. ເອລີຟັສວ່າກ່າວໂຢບ

1 ແລ້ວເອລີຟັສ ຊາວເຕມານຕອບວ່າ,
2 "ຄວນທີ່ຄົນມີປັນຍາຈະຕອບດ້ວຍ ຄວາມຮູ້ລົມໆແລ້ງໆຫລື ແລະບັນຈຸລົມຕາເວັນອອກໃຫ້ເຕັມ
3 ຄວນທີ່ເຂົາຈະໂຕ້ຖຽງກັນໃນການເວົ້າອັນໄຮ້ປໂຍດ ຫລືດ້ວຍຖ້ອຍຄໍາຊຶ່ງບໍ່ໄດ້ຜົນຫລື
4 ແຕ່ທ່ານກໍາລັງຂະຈັດຄວາມຢໍາເກງພຣະເຈົ້າ ແລະຂັດຂວາງການອ້ອນວອນຕໍ່ພຣະພັກພຣະເຈົ້າ
5 ເພາະຄວາມບາບຊົ່ວຂອງທ່ານສອນປາກຂອງທ່ານ ແລະທ່ານເລືອກເອົາລີ້ນຂອງຄົນສລາດແກມໂກງ
6 ປາກຂອງທ່ານກ່າວໂທດທ່ານເອງ ບໍ່ແມ່ນຂ້າພະເຈົ້າ ແລະຮີມຝີປາກຂອງທ່ານປະນາມທ່ານເອງ
7 "ທ່ານເປັນມະນຸດຄົນແຣກທີ່ເກີດມາຫລື ຫລືທ່ານເກີດມາກ່ອນພູຜາຫລື
8 ທ່ານໄດ້ຟັງໃນຫມູ່ຊາວສວັນຄົນສນິດຂອງພຣະເຈົ້າຫລື ແລະທ່ານຈໍາກັດສະຕິປັນຍາໄວ້ສະເພາະຕົວທ່ານ
ຫລື
9 ທ່ານຮູ້ສິ່ງໃດທີ່ພວກເຮົາບໍ່ຮູ້ແດ່ ທ່ານເຂົ້າໃນສິ່ງໃດທີ່ບໍ່ກະຈ່າງແກ່ເຮົາ
10 ໃນພວກເຮົາມີຄົນຜົມຫງອກ ແລະຄົນສູງອາຍຸເຖົ້າແກ່ຍິ່ງກວ່າບິດາຂອງທ່ານ
11 ທ່ານເຫັນຄໍາເລົ້າໂລມຂອງພຣະເຈົ້າເປັນຂອງເລັກນ້ອຍໄປຫລື ຖືຖ້ອຍຄໍາທີ່ເວົ້າກັບທ່ານຢ່າງສຸພາບນັ້ນ
12 ເຫດໃດທ່ານຈຶ່ງປ່ອຍຕົວໄປຕາມໃຈ ເປັນຫຍັງຕາຂອງທ່ານຈຶ່ງລຸກເປັນໄຟ
13 ຄືທີ່ທ່ານຫັນຈິດໃຈຂອງທ່ານຕໍ່ສູ້ພຣະເຈົ້າ ແລະໃຫ້ຖ້ອຍຄໍາຢ່າງນີ້ອອກຈາກປາກຂອງທ່ານ
14 ມະນຸດເປັນຫຍັງ ເຂົາຈຶ່ງຈະສະອາດໄດ້ ຫລືເຂົາຜູ້ເກີດມາໂດຍຜູ້ຍິງເປັນຫຍັງ ເຂົາຈຶ່ງຊອບທັມໄດ້
15 ພຣະເຈົ້າບໍ່ໄດ້ຊົງວາງໃຈໃນທູດຂອງພຣະອົງ ໃນສາຍພຣະເນດຂອງພຣະອົງ ຟ້າສວັນກໍບໍ່ສະອາດ

16 ຜູ້ທີ່ຫນ້າກຽດຊັງ ແລະເສື່ອມຊາມ ຜູ້ດື່ມຄວາມບາບຜິດເຫມືອນດື່ມນ້ຳຈະສະອາດນ້ອຍຍິ່ງກວ່ານັ້ນເທົ່າໃດ

17 "ຟັງຂ້າພະເຈົ້າ ຂ້າພະເຈົ້າຈະສະແດງແກ່ທ່ານ ສິ່ງໃດທີ່ຂ້າພະເຈົ້າໄດ້ເຫັນ ຂ້າພະເຈົ້າຈະກ່າວ

18 (ສິ່ງທີ່ຄົນມີປັນຍາໄດ້ບອກກັນມາ ຕັ້ງແຕ່ບັນພະບຸຣຸດຂອງເຂົາ ແລະບໍ່ໄດ້ປິດບັງໄວ້

19 ຜູ້ທີ່ໄດ້ຮັບພຣະຣາຊທານແຜ່ນດິນແຕ່ພວກດຽວ ແລະບໍ່ມີຄົນຕ່າງດ້າວຜ່ານໄປຖ້າມກາງເຂົາທັງຫລາຍ)

20 ຄົນອະທັມທົນທຸກທໍລະມານຕລອດອາຍຸຂອງເຂົາ ຕລອດປີທັງປວງທີ່ໄດ້ກຳຫນົດໄວ້ສຳລັບຜູ້ບີບບັງຄັບ

21 ສຽງທີ່ຫນ້າຢ້ານກົວຢູ່ໃນຫູຂອງເຂົາ ຜູ້ທຳລາຍຈະມາເຫນືອເຂົາໃນຍາມຮັ່ງມີ

22 ເຂົາບໍ່ເຊື່ອວ່າເຂົາຈະກັບອອກມາຈາກຄວາມມືດ ເຂົາຈະຕ້ອງຕາຍດ້ວຍດາບ

23 ເຂົາພະເນຈອນໄປເພື່ອຫາອາຫານ ກ່າວວ່າ "ມັນຢູ່ໃສ" ເຂົາຮູ້ຢູ່ວ່າວັນແຫ່ງຄວາມມືດຢູ່ແຄ່ເອື້ອມ

24 ຄວາມທຸກໃຈ ແລະຄວາມແສນລະທົມ ທຳໃຫ້ເຂົາຢ້ານກົວ ມັນຊນະເຂົາເຫມືອນຢ່າງພຣະຣາຊາຕຽມພ້ອມແລ້ວສຳລັບການເສິກ

25 ເພາະເຂົາໄດ້ຢຽດມືຂອງເຂົາອອກສູ້ພຣະເຈົ້າ ແລະຕັ້ງຕົວທ້າທາຍອົງຜູ້ມີອຳນາດຍິ່ງໃຫຍ່

26 ເຂົາແລ່ນເຂົ້າໃສ່ພຣະອົງຢ່າງດື້ດຶງພ້ອມກັບໂລ່ທີ່ຫນາ

27 ເພາະວ່າເຂົາໄດ້ປົກຫນ້າຂອງເຂົາດ້ວຍຄວາມອ້ວນຂອງເຂົາແລ້ວ ແລະຮວບຮວມໄຂມັນມາໄວ້ທີ່ບັ້ນແອວຂອງເຂົາ

28 ແລະໄດ້ອາໄສຢູ່ໃນຫົວເມືອງຮ້າງເປົ່າ ໃນເຮືອນຊຶ່ງຊົງກຳຫນົດໄວ້ໃຫ້ເປັນກອງສະລັກຫັກພັງ

29 ເຂົາຈະບໍ່ຮັ່ງມີ ແລະຊັບສົມບັດຂອງເຂົາຈະບໍ່ທົນຢູ່ ແລະສິ່ງຂອງຂອງເຂົາຈະບໍ່ເພີ້ມພູນໃນແຜ່ນດິນໂລກ

30 ເຂົາຈະຫນີຈາກຄວາມມືດບໍ່ພົ້ນ ແປວໄຟຈະທຳໃຫ້ຫນໍ່ຂອງເຂົາແຫ້ງໄປ ແລະໂດຍລົມພຣະໂອດເຂົາຈະຕ້ອງຈາກໄປເສັຽ

31 ຢ່າໃຫ້ເຂົາວາງໃຈໃນຄວາມອະນິດຈັງລວງຕົວເຂົາເອງ ເພາະຄວາມອະນິດຈັງເປັນສິ່ງຕອບແທນເຂົາ

32 ຈະຊຳຣະໃຫ້ເຂົາເຕັມກ່ອນເວລາຂອງເຂົາ ແລະກິ່ງຂອງເຂົາຈະບໍ່ຂຽວ

33 ເຂົາຈະເປັນເຫມືອນເຄືອອະງຸ່ນທີ່ຫມາກອະງຸ່ນດິບຫລົ່ນ ແລະເປັນດັ່ງຕົ້ນຫມາກກອກເທດທີ່ດອກບານຫລົ່ນ

34 ເພາະວ່າພວກອະທັມນັ້ນເປັນຫມັນ ແລະໄຟເຜົາຜານເຕັນແຫ່ງສິນບົນ

35 ເຂົາທັງຫລາຍຕັ້ງທ້ອງຄວາມຊົ່ວ ແລະເກີດຄວາມຮ້າຍອອກມາ ແລະຈິດໃຈຂອງເຂົາທັງຫລາຍກະຕຽມການລໍ່ລວງ

## 16. ໂຢບຮ້ອງທຸກເຖິງການກະທຳຂອງພຣະເຈົ້າ

1 ແລ້ວໂຢບຕອບວ່າ,

2 "ຂ້າພະເຈົ້າເຄີຍໄດ້ຍິນເຣື່ອງຢ່າງນີ້ມາຫລາຍແລ້ວ ທ່ານທຸກຄົນເປັນຜູ້ເລົ້າໂລມທີ່ກວນໃຈ

3 ຄຳລົມໆແລ້ງໆຈະຈົບສິ້ນເມື່ອໃດຫນໍ ທ່ານເປັນຫຍັງໄປ ທ່ານຈຶ່ງຕອບຢ່າງນີ້

4 ຂ້າພະເຈົ້າເວົ້າຢ່າງທ່ານທັງຫລາຍເວົ້າໄດ້ເຫມືອນກັນ ຖ້າຈິດໃຈທ່ານຢູ່ໃນທີ່ຂອງຈິດໃຈຂ້າພະເຈົ້າ ຂ້າພະ
ເຈົ້າສາມາດຮວບຮວມຖ້ອຍຄຳຕໍ່ສູ້ທ່ານທັງຫລາຍໄດ້ ແລະສັ່ນສີສະຂອງຂ້າພະເຈົ້າເຍີ້ຍທ່ານ
5 ຂ້າພະເຈົ້າຈະຫນຸນກຳລັງຂອງທ່ານທັງຫລາຍດ້ວຍປາກຂອງຂ້າພະເຈົ້າກໍໄດ້ ແລະເຄື່ອງບັນເທົາທຸກແຫ່ງ
ຮີມຝີປາກຂອງຂ້າພະເຈົ້າຈະລະງັບຄວາມເຈັບປວດຂອງທ່ານກໍໄດ້ດ້ວຍ
6 "ຖ້າຂ້າພະເຈົ້າເວົ້າ ຄວາມເຈັບປວດຂອງຂ້າພະເຈົ້າກໍບໍ່ລະງັບ ແລະຖ້າຂ້າພະເຈົ້າມິດມັນກໍບໍ່ຊ່ອຍໃຫ້ຂ້າ
ພະເຈົ້າທຸເລົາຄວາມເຈັບປວດໄດ້
7 ແນ່ນອນ ດຽວນີ້ພຣະເຈົ້າຊົງໃຫ້ຂ້າພະເຈົ້າຊຸດໂຊມລົງ ພຣະອົງຊົງກະທຳໃຫ້ພັກພວກທັງສິ້ນຂອງຂ້າພະ
ເຈົ້າຖືກຂ້າ
8 ແລ້ວພຣະອົງໄດ້ໃຫ້ຂ້າຫົດຫູ່ລົງ ຊຶ່ງສະພາບນີ້ເປັນພຍານປັກປຳຂ້າພະເຈົ້າ ແລະຄວາມຜ່າຍຜອມຂອງຂ້າ
ພະເຈົ້າລຸກຂຶ້ນປັກປຳຂ້າພະເຈົ້າ ມັນເປັນພຍານໃສ່ຫນ້າຂ້າພະເຈົ້າ
9 ພຣະອົງຊົງຈີກຂ້າພະເຈົ້າດ້ວຍພຣະພິໂຣດຂອງພຣະອົງແລະຊົງກຽດຊັງຂ້າພຣະອົງ ພຣະອົງຊົງຂົບແຂ້ວ
ໃສ່ຂ້າພະເຈົ້າ ປໍຣະປັກຂອງຂ້າພະເຈົ້າຄຶງຕາສູ້ຂ້າພະເຈົ້າ
10 ມີຄົນອ້າປາກໃສ່ຂ້າພະເຈົ້າ ເຂົາຕົບແກ້ມປະຈານຂ້າພະເຈົ້າ ເຂົາສຸມຫົວກັນປັກປຳຂ້າພະເຈົ້າ
11 ພຣະເຈົ້າຊົງມອບຂ້າພະເຈົ້າໃຫ້ແກ່ຄົນອະທັມ ແລະຊົງແກວ່ງຂ້າພະເຈົ້າໄວ້ໃນມືຂອງຄົນຊົ່ວຮ້າຍ
12 ຂ້າພະເຈົ້າຢູ່ສະບາຍ ແລະພຣະອົງຊົງຫັກຂ້າພະເຈົ້າສະບັ້ນ ພຣະອົງຊົງຈັບຄໍຂ້າພະເຈົ້າແລະຕີຂ້າພະເຈົ້າ
ລົງ ພຣະອົງຊົງຕັ້ງຂ້າໃຫ້ເປັນເປົ້າຂອງພຣະອົງ ນັກທະນູຂອງພຣະອົງລ້ອມຂ້າພະເຈົ້າ
13 ພຣະອົງຊົງທະລວງເປີດໄຕຂອງຂ້າພະເຈົ້າ ແລະບໍ່ເມດຕາເລີຍ ພຣະອົງຊົງເທນ້ຳດີຂອງຂ້າພະເຈົ້າລົງ
ເທິງດິນ
14 ພຣະອົງຊົງພັງເຂົ້າໄປເປັນປ່ອງໆ ພຣະອົງຊົງແລ່ນເຂົ້າໃສ່ຂ້າພະເຈົ້າຢ່າງນັກຮົບ
15 ຂ້າພະເຈົ້າຫຍິບຜ້າກະສອບຕິດຫນັງຂ້າພະເຈົ້າ ແລະວາງກຳລັງຂອງຂ້າພະເຈົ້າລົງໃນຝຸ່ນຂີ້ດິນ
16 ຫນ້າຂອງຂ້າພະເຈົ້າແດງດ້ວຍການຮ້ອງໄຫ້ ເງົາແຫ່ງຄວາມຕາຍຢູ່ທີ່ຫນັງຕາຂອງຂ້າພະເຈົ້າ
17 ເຖິງແມ້ວ່າໃນມືຂອງຂ້າພະເຈົ້າບໍ່ມີຄວາມທາຣຸນເລີຍ ແລະຄຳອ້ອນວອນຂອງຂ້າພະເຈົ້າກໍບໍຣິສຸດ
18 "ໂອ ແຜ່ນດິນໂລກເອີຍ ຢ່າປົດບັງໂລຫິດຂອງຂ້າພະເຈົ້າ ຢ່າໃຫ້ສຽງຮ້ອງຂອງຂ້າພະເຈົ້າມີທີ່ຢຸດພັກ
19 ດຽວນີ້ເອງພຍານຂອງຂ້າພະເຈົ້າກໍຢູ່ໃນຟ້າສວັນ ແລະທ່ານທີ່ຮັບຮອງຂ້າພະເຈົ້າກໍຢູ່ໃນທີ່ສູງ
20 ເພື່ອນຂອງຂ້າພະເຈົ້າດ່າຂ້າພະເຈົ້າ ຕາຂອງຂ້າພະເຈົ້າເທນ້ຳຕາອອກຖວາຍພຣະເຈົ້າ
21 ຂໍໃຫ້ພຍານນັ້ນຮ້ອງຂໍຄວາມຊອບທັມຂອງມະນຸດຕໍ່ພຣະເຈົ້າ ເຫມືອນດັ່ງທີ່ມະນຸດກະທຳຕໍ່ເພື່ອນບ້ານຂອງ
ເຂົາ
22 ເພາະວ່າຕໍ່ໄປອີກບໍ່ຫລາຍປີ ຂ້າພະເຈົ້າຈະໄປຕາມທາງອັນບໍ່ມີວັນກັບມາອີກ

## 17.

1 ຈິດວິນຍານຂອງຂ້າພະເຈົ້າໄດ້ແຕກດັບ ວັນເວລາຂອງຂ້າພະເຈົ້າກໍຈົບລົງ ຫລຸມຝັງສົບພ້ອມສຳລັບຂ້າພະເຈົ້າແລ້ວ
2 ແນ່ນອນ ຄົນມັກເຍາະເຍີ້ຍກໍຢູ່ຮອບຂ້າພະເຈົ້ານີ້ເອງ ແລະຕາຂອງຂ້າພະເຈົ້າກໍຈ້ອງເບິ່ງຢູ່ທີ່ການຍົວະເຍົ້າຂອງເຂົາ
3 "ໂຜດຊົງວາງປະກັນໄວ້ສຳລັບຂ້າພຣະອົງກັບພຣະອົງ ໃຜຢູ່ທີ່ນັ້ນທີ່ຈະໃຫ້ປະກັນສຳລັບຂ້າພຣະອົງໄດ້
4 ເພາະພຣະອົງຊົງປິດໃຈຂອງເຂົາທັງຫລາຍໄວ້ຈາກຄວາມເຂົ້າໃຈ ສະນັ້ນພຣະອົງຈະບໍ່ຊົງຫນຸນເຂົາ
5 ຜູ້ທີ່ປັກປຳເພື່ອນຂອງເຂົາເພື່ອຈະໄດ້ສ່ວນແບ່ງ ນັຍຕາຂອງລູກຫລານຂອງເຂົາມົວມືດໄປ
6 "ພຣະອົງຊົງກະທຳໃຫ້ຂ້າພະເຈົ້າເປັນຂີ້ປາກຂອງຊົນຊາດທັງຫລາຍ ແລະເຂົາຖົ່ມນ້ຳລາຍໃສ່ຫນ້າຂອງຂ້າພະເຈົ້າ
7 ນັຍຕາຂອງຂ້າພະເຈົ້າໄດ້ມົວມືດໄປດ້ວຍຄວາມເສົ້າໂສກສລົດ ແລະອະວັຍຍະວະທັງສິ້ນຂອງຂ້າພະເຈົ້າກໍເຫມືອນກັບເງົາ
8 ຄົນທ່ຽງທັມກໍຈະຕົກຕະລຶງດ້ວຍເຣື່ອງນີ້ ແລະຄົນປາສຈາກຜິດກໍຈະເຮົ້າຕົວຂຶ້ນປັກປຳຄົນອະທັມ
9 ຄົນຊອບທັມຍັງຈະຍຶດຫມັ້ນຢູ່ກັບທາງຂອງເຂົາ ແລະຜູ້ທີ່ມີມືສະອາດກໍຈະແຂງແຮງຂຶ້ນ
10 ແຕ່ທ່ານ ທ່ານທຸກຄົນກັບມາອີກ ຂ້າພະເຈົ້າຈະບໍ່ພົບຄົນທີ່ມີປັນຍາໃນພວກທ່ານ
11 ວັນຂອງຂ້າພະເຈົ້າກໍຜ່ານພົ້ນໄປ ແຜນງານຂອງຂ້າພະເຈົ້າກໍແຕກຫັກ ຄືຄວາມຄິດໃນໃຈຂອງຂ້າພະເຈົ້ານັ້ນ
12 ເຂົາເຫລົ່ານັ້ນທຳກາງຄືນໃຫ້ເປັນກາງເວັນ ຄວາມສວ່າງນັ້ນກໍໃກ້ເປັນຄວາມມືດ
13 ຖ້າຂ້າພະເຈົ້າຈະເບິ່ງພິພົບຄົນຕາຍໃຫ້ເປັນບ້ານຂອງຂ້າພະເຈົ້າ ຖ້າຂ້າພະເຈົ້າຈະກາງທີ່ນອນອອກໃນຄວາມມືດ
14 ຖ້າຂ້າພະເຈົ້າເວົ້າກັບປາກພິພົບຄົນຕາຍວ່າ "ເຈົ້າເປັນພໍ່ຂອງຂ້ອຍ" ແລະເວົ້າກັບຫນອນວ່າ "ແມ່ຂອງຂ້ອຍ" ແລະ "ເອື້ອຍຂອງຂ້ອຍ"
15 ແລ້ວກໍຄວາມຫວັງຂອງຂ້າພະເຈົ້າຢູ່ທີ່ໃດ ສ່ວຍຄວາມຫວັງຂອງຂ້າພະເຈົ້ານັ້ນໃຜຈະເຫັນໄດ້
16 ຄວາມຫວັງນັ້ນຈະລົງໄປທີ່ປະຕູພິພົບແຫ່ງຄົນຕາຍ ເຮາຈະລົງໄປດ້ວຍກັນໃນຝຸ່ນຂີ້ດິນ

## 18. ບິນດັດບັນຍາຍເຖິງຜົນກັມຂອງຄົນຊົ່ວຮ້າຍ

1 ແລ້ວບິນດັດຕະກູນຊູອາຕອບວ່າ,
2 "ທ່ານທັງຫລາຍຈະຄົ້ນຫາຖ້ອຍຄຳດົນປານໃດ ຈົ່ງຄິດຄວນເບິ່ງແລ້ວພວກເຮົາຈະເວົ້າ
3 ເປັນຫຍັງເຮົາຈຶ່ງຖືກນັບໃຫ້ເປັນສັດ ເປັນຫຍັງເຮົາຈຶ່ງເປັນຊົ່ວໃນສາຍຕາຂອງທ່ານທັງຫລາຍ

4 ທ່ານຜູ້ທຳລາຍຕົວຂອງທ່ານດ້ວຍຄວາມໂກດຂອງທ່ານ ຂໍໃຫ້ແຜ່ນດິນໂລກຖືກປະຖິ້ມເພາະເຫັນແກ່ທ່ານ
ຫລື ຫລືຈະໃຫ້ກ້ອນຫີນເຄື່ອນຍ້າຍຈາກບ່ອນຂອງມັນ
5 ແນ່ນອນ ຄວາມສວ່າງແຫ່ງຄົນອະທັມຈະຖືກດັບເສັຽ ແລະແປວໄຟຂອງເຂົາບໍ່ສ່ອງແສງອີກ
6 ດວງສວ່າງໃນເຕັນຂອງເຂົາມືດ ແລະຕະກຽງທີ່ຢູ່ເຫນືອເຂົາກໍດັບ
7 ກ້າວອັນແຂງແຮງຂອງເຂົາກໍສັ້ນເຂົ້າ ແລະຄວາມຄິດອ່ານຂອງເຂົາເອງກໍຄວ່ຳເຂົາລົງ
8 ເພາະເຂົາຖືກແກວ່ງເຂົ້າໄປໃນຕາຫນ່າງດ້ວຍເທົ້າຂອງເຂົາເອງ ແລະເຂົາຍ່າງຢູ່ເທິງບ້ວງແຮ້ວ
9 ກັບອັນນຶ່ງທີ່ວາງໄວ້ນັ້ນຈະຈັບຂະຫນ່ອງຂອງເຂົາໄວ້ ບ້ວງແຮ້ວຈະຮັດເຂົາໄວ້
10 ມີບ້ວງເຊື່ອງຢູ່ໃນດິນໄວ້ດັກຈັບເຂົາ ມີກັບຢູ່ໃນທາງໄວ້ດັກຈັບເຂົາ
11 ສິ່ງທີ່ຫນ້າຫວາດກົວທຳໃຫ້ເຂົາຕົກໃຈຢູ່ຮອບດ້ານ ແລະໄລ່ຕິດຂະຫນ່ອງຂອງເຂົາຢູ່
12 ກຳລັງຂອງເຂົາກໍອ່ອນໄປເພາະຄວາມຫິວ ແລະໄພວິບັດກໍຄອຍພ້ອມຢູ່ທີ່ຂ້າງເຂົາ
13 ຜິວຫນັງຂອງເຂົາໂຣກກໍກິນເສັຽ ໂຣກລະບາດກໍກິນແຂນຂາຂອງເຂົາ
14 ຂາຖືກຖອນອອກຈາກເຕັນທີ່ເຂົາໄວ້ວາງໃຈ ຖືກນຳມາຍັງພຣະຣາຊາແຫ່ງຄວາມຫນ້າຫວາດກົວ
15 ສິ່ງທີ່ບໍ່ແມ່ນຂອງເຂົາອາໄສຢູ່ໃນເຕັນຂອງເຂົາ ມີນາດເຕັມທົ່ວໄປເຫນືອທີ່ຢູ່ຂອງເຂົາ
16 ຮາກຂອງເຂົາແຫ້ງໄປ ແລະກິ່ງຂອງເຂົາຫ່ຽວໄປ
17 ການລະນຶກເຖິງເຂົາພິນາດໄປຈາກໂລກ ແລະເຂົາບໍ່ມີຊື່ຢູ່ຖນົນ
18 ເຂົາຖືກຜັກໄສຈາກຄວາມສວ່າງເຂົ້າສູ່ຄວາມມືດ ແລະຖືກໄລ່ອອກໄປຈາກແຜ່ນດິນໂລກ
19 ເຂົາບໍ່ມີລູກຫລືຫລານຖ້າມກາງວົງຕະກູນຂອງເຂົາ ແລະບໍ່ມີຄົນລອດຕາຍໃນທີ່ຊຶ່ງເຂົາເຄີຍອາໄສຢູ່
20 ຊາວຕາເວັນຕົກກໍຕົກຕະລຶງດ້ວຍວັນຂອງເຂົາ ແລະຊາວຕາເວັນອອກກໍຫວາດກົວດ້ວຍ
21 ແນ່ນອນ ທີ່ຢູ່ຂອງຄົນອະທັມເປັນຢ່າງນີ້ແຫລະ ແລະທີ່ຢູ່ຂອງຄົນຊຶ່ງບໍ່ຮູ້ຈັກພຣະເຈົ້າກໍເປັນຢ່າງນີ້ແຫລະ"

## 19. ຄຳຕອບຂອງໂຢບ

1 ຄັນແລ້ວໂຢບຕອບວ່າ,
2 "ເປັນຫຍັງພວກທ່ານຈຶ່ງເວົ້າທໍຣະມານຂ້າພະເຈົ້າ
3 ທ່ານໄດ້ຫມິ່ນປມາດຂ້າພະເຈົ້າຄລອດເວລາ ແລະທ່ານໄດ້ດ່າຂ້າພະເຈົ້າຢ່າງບໍ່ລະອາຍເລີຍ
4 ສົມມຸດວ່າຂ້າພະເຈົ້າທຳຜິດ ຄວາມຜິດນັ້ນຈະທຳໃຫ້ທ່ານເສັຽຫາຍຫຍັງ
5 ທ່ານຄິດວ່າທ່ານດີກວ່າຂ້າພະເຈົ້າ ແລະເຝົ້າເບິ່ງຄວາມຍາກລຳບາກຂອງຂ້າພະເຈົ້າເຫມືອນເປັນຜູ້ພິສູດ
ຄວາມຜິດຂອງຂ້າພະເຈົ້າ
6 ທ່ານບໍ່ຮູ້ບໍວ່າແມ່ນພຣະເຈົ້າທີ່ທຳດັ່ງນີ້ ແລະໄດ້ຊຶງວາງແຮ້ວດັກຈັບຂ້າພະເຈົ້າ
7 ຂ້າພະເຈົ້າໄດ້ຄັດຄ້ານການໃຊ້ອຳນາດອັນຮຸນແຮງຂອງພຣະອົງ ແຕ່ບໍ່ມີໃຜຟັງ ຂ້າພະເຈົ້າຮ້ອງຫາຄວາມ
ຍຸດຕິທັມແຕ່ບໍ່ມີເລີຍ

8 ພຣະເຈົ້າໄດ້ຊົງຕັນທາງໄວ້ ຂ້າພະເຈົ້າຈຶ່ງເຂົ້າໄປບໍ່ໄດ້ ພຣະອົງຊົງປົກປິດທາງຂ້າພະເຈົ້າດ້ວຍຄວາມມືດ
9 ພຣະອົງຊົງຍຶດເອົາຊັບສິນທັງຫມົດຂອງຂ້າພະເຈົ້າໄປ ແລະຊົງທຳລາຍຊື່ສຽງຂອງຂ້າພະເຈົ້າ
10 ພຣະອົງຊົງທຳລາຍຂ້າພະເຈົ້າໃນທຸກດ້ານ ພຣະອົງຊົງຮື້ຖອນຄວາມຫວັງຂອງຂ້າພະເຈົ້າຖິ້ມ ຊົງປະປ່ອຍ
ຂ້າພະເຈົ້າໃຫ້ຫ່ຽວແຫ້ງແລະຕາຍເສັຽ
11 ພຣະເຈົ້າຊົງພຣະພິໂຣດຂ້າພະເຈົ້າຢ່າງຮຸນແຮງ ຊົງທຳກັບຂ້າພະເຈົ້າເຫມືອນສັດຕູຜູ້ຮ້າຍກາດຂອງພຣະ
ອົງ
12 ພຣະອົງຊົງໃຊ້ທະຫານຂອງພຣະອົງມາໂຈມຕີຂ້າພະເຈົ້າ ພວກທະຫານໄດ້ຂຸດຂຸມກຳບັງແລະປິດລ້ອມ
ເຕັນຂອງຂ້າພະເຈົ້າໄວ້
13 ພຣະເຈົ້າຊົງທຳໃຫ້ພີ່ນ້ອງຂອງຂ້າພະເຈົ້າຖິ້ມຂ້າພະເຈົ້າ ຜູ້ທີ່ຂ້າພະເຈົ້າລື້ງເຄີຍກໍຫັນຫນີຈາກຂ້າພະເຈົ້າ
14 ຍາດພີ່ນ້ອງກັບເພື່ອນຝູງຂອງຂ້າພະເຈົ້າໄດ້ລະລືມຂ້າພະເຈົ້າ
15 ແຂກທີ່ຂ້າພະເຈົ້າເຄີຍຮັບຕ້ອນໃນເຮືອນຂອງຂ້າພະເຈົ້າກໍລືມຂ້າພະເຈົ້າເສັຽ ສາວໃຊ້ຂອງຂ້າພະເຈົ້າກໍທຳ
ຕໍ່ຂ້າພະເຈົ້າເຫມືອນຄົນຕ່າງຫນ້າແລະຕ່າງຖິ່ນ
16 ເຖິງແມ່ນຂ້າພະເຈົ້າເອີ້ນຮ້ອງຂໍໃຫ້ຄົນໃຊ້ຊ່ອຍ ເຂົາກໍບໍ່ຕອບ
17 ເມັຽຂອງຂ້າພະເຈົ້າກໍທົນເຫມັນກິ່ນຫາຍໃຈຂອງຂ້າພະເຈົ້າບໍ່ໄດ້ ອ້າຍນ້ອງຂອງຂ້າພະເຈົ້າກໍບໍ່ມາໃກ້ຂ້າພະ
ເຈົ້າ
18 ພວກເດັກນ້ອຍກໍກຽດຊັງຂ້າພະເຈົ້າ ແລະຫົວຂວັນເມື່ອເຂົາເຫັນຂ້າພະເຈົ້າ
19 ເພື່ອນສນິດຂອງຂ້າພະເຈົ້າໄດ້ເບິ່ງຂ້າພະເຈົ້າດ້ວຍຄວາມເປີດຫນ່າຍ ຄົນທັງຫລາຍທີ່ຂ້າພະເຈົ້າຮັກແພງກໍ
ຫັນຫນ້າຕໍ່ສູ້ຂ້າພະເຈົ້າ
20 ຂ້າພະເຈົ້າຈ່ອຍຜອມຈົນເຫັນແຕ່ຫນັງຕິດກະດູກ ເກືອບຈະເອົາຊີວິດໄປບໍ່ລອດ
21 ທ່ານເປັນເພື່ອນຂອງຂ້າພະເຈົ້າ ຈົ່ງສົງສານຂ້າພະເຈົ້າແດ່ ພຣະຫັດຂອງພຣະເຈົ້າໄດ້ທຸບຕີຂ້າພະເຈົ້າ
ແລ້ວ
22 ເປັນຫຍັງທ່ານຈຶ່ງຕິດຕາມທຳຮ້າຍຂ້າພະເຈົ້າເຫມືອນຢ່າງພຣະເຈົ້າ ເປັນຫຍັງທ່ານຈຶ່ງບໍ່ພໍເສັຽການທໍລະ
ມານຂ້າພະເຈົ້ານັ້ນ
23 ຂ້າພະເຈົ້າຢາກໃຫ້ບາງຄົນບັນທຶກຄຳທີ່ຂ້າພະເຈົ້າເວົ້ານີ້ໄວ້ ແລະຂຽນຄຳເວົ້າຂອງຂ້າພະເຈົ້າໄວ້ໃນປື້ມ
24 ຫລືໃຊ້ເຫລັກຂຽນໄວ້ໃນຫີນ ເພື່ອມັນຈະໄດ້ຢູ່ຄລອດໄປ
25 ແຕ່ຂ້າພະເຈົ້າຮູ້ວ່າມີພຣະຄຸ້ມຄອງອົງນຶ່ງຢູ່ໃນຟ້າສວັນ ຜູ້ຊຶ່ງຈະມາຕໍ່ສູ້ຄະດີໃຫ້ຂ້າພະເຈົ້າໃນເວລາສຸດທ້າຍ
26 ເຖິງແມ່ນວ່າເຊື້ອໂຣກກັດກິນຜິວຫນັງຂອງຂ້າພະເຈົ້າແລ້ວ ໃນຊີວິດນີ້ຂ້າພະເຈົ້າຍັງຈະເຫັນພຣະເຈົ້າຢູ່
27 ຂ້າພະເຈົ້າຈະເຫັນພຣະອົງດ້ວຍຕາຂອງຂ້າພະເຈົ້າເອງ ແລະພຣະອົງຈະບໍ່ເປັນຜູ້ແປກຫນ້າ ຂ້າພະເຈົ້າໄດ້
ເສັຽກຳລັງໃຈຍ້ອນທ່ານເວົ້າວ່າ
28 “ພວກເຮົາໄດ້ທໍລະມານເຂົາຢ່າງໃດ” ທ່ານໄດ້ຊອກຫາເຫດຜົນບາງຢ່າງເພື່ອໂຈມຕີຂ້າພະເຈົ້າ

29 ແຕ່ບັດນີ້ຈົ່ງຢ້ານກົວບາບ ພຣະພິໂຣດຂອງພຣະເຈົ້າຈະນຳດາບມາລົງໂທດ ເພື່ອທ່ານຈະຮູ້ວ່າມີຜູ້ນື່ງຈະພິ
ພາກສາ

## 20. ໂຊຟາຣ໌ວາດພາບຄວາມຍາກລຳບາກຂອງຄົນຊົ່ວຮ້າຍ

1 ແລ້ວໂຊຟາຣ໌ຊາວນາອາມາຕອບວ່າ,
2 "ເພາະສະນັ້ນຄວາມຄິດຂອງຂ້າພະເຈົ້າຕອບຂ້າພະເຈົ້າ ເຫດດ້ວຍອາຣົມພາຍໃນຂ້າພະເຈົ້າ
3 ຂ້າພະເຈົ້າຕ້ອງຟັງຄຳຕິຕຽນທີ່ສົບປມາດ ແລະທ່ານຕອບຂ້າພະເຈົ້າຢ່າງລົມໆແລ້ງໆປາສຈາກຄວາມເຂົ້າ
ໃຈ
4 ຕັ້ງແຕ່ດຶກດຳບັນມາ ຕັ້ງແຕ່ມະນຸດຖືກວາງໄວ້ເທິງແຜ່ນດິນໂລກ ທ່ານບໍ່ຮູ້ຫລືວ່າ
5 ສຽງໄຊໂຍຂອງຄົນອະທັມນັ້ນສັ້ນ ແລະຄວາມຊື່ນບານຂອງຄົນທີ່ບໍ່ນັບຖືພຣະເຈົ້ານັ້ນເປັນແຕ່ບຸດດຽວ
6 ແມ່ນແຕ່ຄວາມສູງຂອງເຂົາເດັ່ນຂຶ້ນໄປເຖິງຟ້າສວັນ ແລະສີສະຂອງເຂົາໄປເຖິງຫມູ່ເມກ
7 ເຂົາຈະພິນາດເປັນນິດຢ່າງຜົງຂີ້ດິນ ບັນດາຄົນທີ່ເຄີຍເຫັນເຂົາ ຈະເວົ້າວ່າ "ເຂົາຢູ່ໃສ"
8 ເຂົາຈະບິນໄປເສັຽເຫມືອນຄວາມຝັນ ແລະຈະບໍ່ມີໃຜພົບອີກ ເຂົາຈະຖືກໄລ່ໄປເສັຽຢ່າງນິມິດໃນກາງຄືນ
9 ນັຍຕາຊຶ່ງໄດ້ເຫັນເຂົາຈະບໍ່ເຫັນເຂົາອີກ ຫລືບ່ອນທີ່ເຂົາເຄີຍຢູ່ກໍຈະບໍ່ເຫັນເຂົາອີກເລີຍ
10 ລູກຫລານຂອງເຂົາຈະຊອກຫາຄວາມຊ່ອຍເຫລືອຈາກຄົນຍາກຈົນ ແລະມືຂອງເຂົາຈະຄືນຊັບສົມບັດຂອງ
ເຂົາ
11 ກະດູກຂອງເຂົາເຕັມໄປດ້ວຍເຫື່ອແຮງຂອງຄົນຫນຸ່ມ ແຕ່ເຫື່ອແຮງນັ້ນຈະນອນລົງກັບເຂົາໃນຝຸ່ນຂີ້ດິນ
12 "ເຖິງແມ້ວ່າຄວາມອະທັມຈະຫວານຢູ່ໃນປາກຂອງເຂົາ ເຖິງເຂົາເຊື່ອງໄວ້ໃຕ້ລີ້ນຂອງເຂົາ
13 ເຖິງເຂົາບໍ່ຢາກຈະປ່ອຍ ແລະອົມໄວ້ໃນປາກຂອງເຂົາ
14 ອາຫານຂອງເຂົາຍັງປ່ຽນໃນທ້ອງຂອງເຂົາ ເຫມືອນພິດຂອງງູເຫົ່າໃນຕົວເຂົາ
15 ເຂົາກືນຊັບສົມບັດລົງໄປ ແຕ່ຈະອາຈຽນມັນອອກມາອີກ ພຣະເຈົ້າຊົງແກວ່ງມັນອອກມາຈາກທ້ອງຂອງ
ເຂົາ
16 ເຂົາຈະດູດພິດຂອງງູເຫົ່າ ລີ້ນຂອງເຂົາຈະຂ້າເຂົາໃຫ້ຕາຍເຫມືອນຖືກງູພິດຕອດ
17 ເຂົາຈະບໍ່ມອງຊົມລຳນ້ຳ ຄືລຳທານທີ່ມີນ້ຳເຜີ້ງແລະນົມທີ່ໄຫລຢູ່
18 ເຂົາຈະຄືນຜົນງານຂອງເຂົາ ແລະຈະບໍ່ກືນກິນເສັຽ ເຂົາຈະບໍ່ໄດ້ຄວາມຊື່ນບານເລີຍຈາກກຳໄຣແຫ່ງການ
ຄ້າຂອງເຂົາ
19 ເພາະເຂົາໄດ້ຂະຍີ້ແລະປະຖິ້ມຄົນຍາກຈົນ ເຂົາໄດ້ຍຶດເອົາບ້ານຊຶ່ງເຂົາບໍ່ໄດ້ສ້າງ
20 "ເພາະຄວາມໂລບຂອງເຂົາບໍ່ຮູ້ຈັກຢຸດຢັ້ງ ເຂົາຈະເກັບສິ່ງທີ່ເຂົາພໍໃຈໄວ້ບໍ່ໄດ້ເລີຍ
21 ເມື່ອເຂົາກິນແລ້ວບໍ່ມີຫຍັງເຫລືອ ເຫດສະນັ້ນຄວາມຈະເຣີນຂອງເຂົາຈະບໍ່ຖາວອນ
22 ໃນຂນະທີ່ເຂົາອີ່ມຫນຳສຳຣານ ເຂົາຈະຕົກໃນສະພາບຂັດສົນ ຣິດເດດຂອງຄວາມທຸກຍາກຈະມາຫາເຂົາ

23 ເພື່ອເຕີມທ້ອງຂອງເຂົາໃຫ້ເຕັມ ພຣະເຈົ້າຈະຊົງສົ່ງຄວາມພິໂຣດອັນດຸເດືອດມາເຖິງເຂົາ ແລະຫລັ່ງລົງມາ
ເທິງເຂົາໃຫ້ເປັນອາຫານຂອງເຂົາ
24 ເຂົາຈະລີ້ຈາກອາວຸດເຫລັກ ທະນູທອງສຳຣິດຈະແທງເຂົາຊອດ
25 ເຂົາດຶງມັນອອກ ແລະມັນອອກມາຈາກຮ່າງກາຍຂອງເຂົາ ປາຍອັນວັບແວບກໍອອກມາຈາກນ້ຳດີຂອງເຂົາ
ຄວາມຢ້ານກົວກໍມາສິງສູ່ເຂົາ
26 ຄວາມມືດມົນອັນເຫລືອລົ້ນໄດ້ສະສົມໄວ້ເປັນຊັບຂອງເຂົາ ໄຟທີ່ບໍ່ຕ້ອງເປົ່າຈະກືນເຂົາເສັຽ ສິ່ງໃດທີ່ເຫລືອ
ຢູ່ໃນເຕັນຂອງເຂົາຈະຖືກເຜົາຜານ
27 ຟ້າສວັນຈະສຳແດງຄວາມຜິດບາບຂອງເຂົາ ແລະແຜ່ນດິນໂລກຈະລຸກຂຶ້ນປັກປຳເຂົາ
28 ສິ່ງຂອງແຫ່ງຄົວເຮືອນຂອງເຂົາຈະຖືກນຳໄປເສັຽ ຖືກກວາດໄປໃນວັນແຫ່ງພຣະພິໂຣດຂອງພຣະເຈົ້າ
29 ນີ້ເປັນສ່ວນຂອງຄົນອະທັມຈາກພຣະເຈົ້າ ແລະເປັນມໍຣະດົກທີ່ພຣະເຈົ້າຊົງກຳຫນົດໃຫ້ເຂົາ”

## 21. ໂຢບກ່າວຢືນຢັນຄວາມຈະເຣີນຂອງຄົນອະທັມ

1 ແລ້ວໂຢບກ່າວວ່າ,
2 “ຂໍຟັງຖ້ອຍຄຳຂອງຂ້າພະເຈົ້າຢ່າງລະມັດລະວັງ ແລະໃຫ້ຄຳນີ້ເລົ້າໂລມໃຈທ່ານ
3 ຂໍຈົ່ງອົດທົນແລະຂ້າພະເຈົ້າຈະເວົ້າ ແລະເມື່ອຂ້າພະເຈົ້າເວົ້າແລ້ວ ກໍເຍາະເຍີ້ຍຕໍ່ໄປເຖີດ
4 ສ່ວນຂ້າພະເຈົ້ານີ້ ຈະຕໍ່ວ່າມະນຸດຫລື ເປັນຫຍັງຂ້າພະເຈົ້າຈຶ່ງບໍ່ຄວນຫຸນຫັນ
5 ມອງເບິ່ງຂ້າພະເຈົ້າ ແລະຈົ່ງຕະລຶງເຖີດ ແລະທ່ານຈົ່ງເອົາມືປິດປາກຂອງທ່ານ
6 ເມື່ອຂ້າພະເຈົ້າລະຣຶກເຖິງເຣື່ອງທີ່ຂ້າພະເຈົ້າເວົ້ານີ້ ຂ້າພະເຈົ້າກໍຕົກໃຈ ແລະຄວາມສັ່ນສະທ້ານກໍຈັບເນື້ອ
ຂອງຂ້າພະເຈົ້າ
7 ເປັນຫຍັງຄົນອະທັມຈຶ່ງມີຊີວິດຢູ່ ຈົນເຖິງເຖົ້າແກ່ ແລະຈະເຣີນມີກຳລັງຫລາຍຂຶ້ນ
8 ລູກຫລານຂອງເຂົາກໍຕັ້ງຫມັ້ນຄົງຢູ່ຕໍ່ຫນ້າຕໍ່ຕາເຂົາ ແລະເຊື້ອສາຍຂອງເຂົາກໍຢູ່ຕໍ່ຫນ້າຕໍ່ຕາເຂົາ
9 ເຮືອນຂອງເຂົາທັງຫລາຍກໍປອດໄພຢູ່ເຢັນເປັນສຸກ ແລະໄມ້ແສ້ຂອງພຣະເຈົ້າບໍ່ຢູ່ເທິງເຂົາ
10 ງົວເຖິກຂອງເຂົາເກີດພັນບໍ່ມີຂາດ ງົວແມ່ຂອງເຂົາອອກລູກແລະບໍ່ມີແທ້ງ
11 ເຂົາສົ່ງເດັກນ້ອຍອອກໄປຢູ່ຢ່າງຝູງແບ້ແກະ ແລະລູກຫລານນ້ອຍຂອງເຂົາກໍເຕັ້ນຣຳ
12 ເຂົາຮ້ອງເພງປະສານສຽງຣຳມະນາ ແລະພິນເຂົາຄູ່ ແລະມ່ວນຊື່ນໄປຕາມສຽງປີ່
13 ຕລອດວັນເວລາຂອງເຂົາ ເຂົາກໍຈະເຣີນ ແລະເຂົາລົງໄປທີ່ແດນມໍຣະນາໃນພິບຕາດຽວ
14 ເຂົາທູນພຣະເຈົ້າວ່າ “ຂໍຈາກເຮົາໄປເສັຽ ເພາະເຮົາບໍ່ປາຖນາຄວາມຮູ້ໃນທາງຂອງທ່ານ
15 ອົງຜູ້ມີອຳນາດຍິ່ງໃຫຍ່ຄືຫຍັງ ທີ່ເຮົາຈະຕ້ອງປະຕິບັດເຂົາ ຖ້າເຮົາອ້ອນວອນຕໍ່ເຂົາ ເຮົາຈະໄດ້ປໂຍດ
ຫຍັງ”

16 ຄວາມຈຳເຣີນຂອງເຂົາທັງຫລາຍບໍ່ຢູ່ໃນກຳມືຂອງເຂົາຫລື ຄຳປຶກສາຂອງຄົນອະທັມຢູ່ຫ່າງໄກຈາກຂ້າພະ
ເຈົ້າ
17 "ຕະກຽງຂອງຄົນອະທັມດັບເລື້ອຍໆບໍ ຄວາມທຸກລຳບາກມາເຫນືອເຂົາເລື້ອຍຊ່ຳໃດ ພຣະເຈົ້າຊົງແຈກ
ຈ່າຍຄວາມເຈັບປວດດ້ວຍພຣະພິໂຣດເລື້ອຍຊ່ຳໃດ
18 ເຂົາເປັນເຫມືອນເຟືອງເຂົ້າຫນ້າລົມ ແລະເປັນຫມືອນແກບທີ່ພະຍຸພັດໄປເລື້ອຍຊ່ຳໃດ
19 ທ່ານວ່າ "ພຣະເຈົ້າຊົງສະສົມຄວາມບາບຊົ່ວຂອງເຂົາໄວ້ໃຫ້ລູກຫລານຂອງເຂົາ" ຂໍພຣະອົງຊົງຕອບແທນ
ແກ່ເຂົາທັງຫລາຍເອງ ເພື່ອເຂົາທັງຫລາຍຈະໄດ້ຮູ້
20 ຂໍໃຫ້ນັຍຕາຂອງເຂົາເຫັນຄວາມພິນາດຂອງເຂົາ ແລະໃຫ້ເຂົາດື່ມພຣະພິໂຣດຂອງອົງຜູ້ມີອຳນາດຍິ່ງໃຫຍ່
21 ເພາະເຂົາສົນໃຈຫຍັງໃນເຣື່ອງວົງວານທີ່ຕາມເຂົາມາ ເມື່ອຈຳນວນເດືອນຂອງເຂົາຖືກຕັດຂາດເສັຽແລ້ວ
22 ມີຜູ້ໃດຈະສອນພຣະເຈົ້າໄດ້ຫລື ເມື່ອພຣະອົງຊົງພິພາກສາເທວະຊີພ
23 ຄົນນຶ່ງຕາຍເມື່ອຍັງແຂງແຮງຢູ່ ຕາຍງ່າຍທັງສຸກໃຈ ແລະຮ່າງກາຍກໍອ້ວນພີຢູ່
24 ຖົງກາຍຂອງເຂົາເຕັມດ້ວຍນ້ຳນົມ ແລະມັນກະດູກຂອງເຂົາກໍຊຸ່ມ
25 ອີກຄົນນຶ່ງຕາຍດ້ວຍໃຈຂົມຂື່ນ ບໍ່ເຄີຍໄດ້ຊີມຂອງດີ
26 ເຂົາທັງສອງນອນລົງໃນຝຸ່ນຂີ້ດິນເຫມືອນກັນ ແລະຕົວຫນອນກໍຄຸມເຂົາທັງສອງໄວ້
27 ໂອ ຂ້າພະເຈົ້າຮູ້ຄວາມຄິດຂອງທ່ານ ແລະອຸບາຍຂອງທ່ານທີ່ຈະທຳຜິດຕໍ່ຂ້າພະເຈົ້າ
28 ເພາະທ່ານວ່າ "ວັງຂອງເຈົ້ານາຍຢູ່ໃສ" ເຕັນຊຶ່ງຄົນອະທັມອາໄສນັ້ນຢູ່ໃສ"
29 ທ່ານບໍ່ໄດ້ຖາມນັກທ່ອງທ່ຽວ ແລະທ່ານບໍ່ໄດ້ຮັບສັກຂີພິຍານຂອງເຂົາຫລື
30 ວ່າໃນຄາວທີ່ເກີດໄພວິບັດນັ້ນຄົນອະທັມມັກລອດໄດ້ ແລະເຂົາໄດ້ຮັບການຊ່ອຍເຫລືອໃຫ້ພົ້ນໃນວັນແຫ່ງ
ພຣະພິໂຣດ
31 ໃຜແຈ້ງວິທີການຂອງເຂົາໃຫ້ເຂົາຟັງ ແລະຜູ້ໃດສນອງເຂົາໃນສິ່ງທີ່ເຂົາໄດ້ກະທຳ
32 ແລະເມື່ອຄົນຫາມເຂົາໄປຍັງຫລຸມສົບກໍມີຍາມເຝົ້າທີ່ອຸໂມງ
33 ສຳລັບເຂົາກ້ອນດິນທີ່ຮ່ອມພູກໍເບົາສະບາຍ ຄົນທັງປວງກໍຕາມເຂົາໄປ ແລະຄົນທີ່ໄປຂ້າງຫນ້າກໍນັບບໍ່ຖ້ວນ
34 ແລ້ວເປັຫຍັງທ່ານຈະມາເລົ້າໂລມໃຈຂ້າພະເຈົ້າດ້ວຍສິ່ງທີ່ວ່າງເປົ່າ ຄຳຕອບຂອງທ່ານບໍ່ມີຫຍັງເຫລືອແລ້ວ
ນອກຈາກຫລອກລວງ"

## 22. ເອລີຟັສກ່າວໂທດໂຢບ

1 ແລ້ວເອລີຟັສ ຊາວເຕມານຕອບວ່າ,
2 "ຄົນຈະເປັນປໂຍດຫຍັງແກ່ພຣະເຈົ້າໄດ້ຫລື ຜູ້ໃດສລາດກໍເປັນປໂຍດໃຫ້ແກ່ຕົນເອງຕ່າງຫາກ
3 ຖ້າທ່ານເປັນຄົນຊອບທັມ ຈະເປັນທີ່ພໍພຣະທັຍແກ່ອົງຜູ້ມີອຳນາດຍິ່ງໃຫຍ່ຫລື ຫລືຖ້າທ່ານເປັນຄົນດີຮອບ
ຄອບຈະເປັນປໂຍດຫຍັງແກ່ພຣະອົງ

4 ເປັນເພາະທ່ານຢຳເກງພຣະອົງຫລື ພຣະອົງຈິ່ງຊົງຕັກເຕືອນທ່ານ ແລະຊົງສູ້ຄວາມກັບທ່ານ

5 ຄວາມອະທັມຂອງທ່ານໃຫຍ່ໂຕບໍ່ແມ່ນຫລື ຄວາມຜິດບາບຂອງທ່ານບໍ່ມີທີ່ສິ້ນສຸດ

6 ເພາະທ່ານຍຶດຂອງປະກັນໄປຈາກພີ່ນ້ອງເປົ່າໆ ແລະຍຶດເສື້ອຜ້າຂອງຄົນທີ່ເປືອຍກາຍ

7 ທ່ານບໍ່ໄດ້ໃຫ້ນ້ຳແກ່ຄົນຫິວກະຫາຍດື່ມ ແລະທ່ານຫນ່ວງຫນ່ຽວເຂົ້າຈີ່ໄວ້ບໍ່ໃຫ້ຄົນທີ່ຫິວ

8 ຄົນທີ່ມີອຳນາດບາດໃຫຍ່ຍ່ອມໄດ້ທີ່ດິນເປັນກຳມະສິດ ແລະຄົນທີ່ມີຫນ້າມີຕາກໍໄດ້ເຂົ້າອາໄສຢູ່

9 ທ່ານໄລ່ແມ່ຫມ້າຍອອກໄປມືເປົ່າ ແລະແຂນຂອງລູກກຳພ້າພໍ່ກໍຫັກ

10 ເພາະສະນັ້ນກັບດັກຢູ່ຮອບທ່ານ ແລະໃນທັນໃດນັ້ນຄວາມສະຍົດສະຍອງກໍຖ້ວມທັບທ່ານ

11 ຄວາມສວ່າງຂອງທ່ານກໍມືດລົງ ຈົນທ່ານບໍ່ເຫັນຫຍັງ ແລະນ້ຳທີ່ຖ້ວມກໍຄຸມທ່ານໄວ້

12 "ພຣະເຈົ້າບໍ່ໄດ້ຊົງສະຖິດຢູ່ໃນທີ່ສູງໃນຟ້າສວັນຫລື ເບິ່ງດາວທີ່ສູງທີ່ສຸດເຖີດ ມັນສູງແທ້ໆ

13 ເພາະສະນັ້ນທ່ານວ່າ "ພຣະເຈົ້າຊົງຮູ້ຫຍັງ ພຣະອົງຈະຊົງທະລຸຄວາມມືດທຶບໄປພິພາກສາໄດ້ຫລື

14 ເມກທຶບຄຸມພຣະອົງໄວ້ ພຣະອົງຊົງມອງສິ່ງໃດບໍ່ເຫັນ ແລະພຣະອົງຊົງດຳເນີນຢູ່ເທິງພື້ນຟ້າ"

15 ທ່ານຈະເດີນທາງເກົ່າຫລື ຊຶ່ງຄົນອະທັມເຄີຍດຳເນີນນັ້ນ

16 ຜູ້ທີ່ຖືກເອົາໄປກ່ອນເວລາກຳຫນົດຂອງເຂົາ ຮາກຖານຂອງເຂົາຖືກກວາດລ້າງໄປ

17 ຜູ້ທູນພຣະເຈົ້າວ່າ "ຂໍຊົງໄປຈາກຂ້າພຣະອົງທັງຫລາຍ" ແລະ "ອົງຜູ້ມີອຳນາດຍິ່ງໃຫຍ່ຈະຊົງທຳສິ່ງໃດແກ່
ຂ້າພຣະອົງທັງຫລາຍໄດ້"

18 ແຕ່ພຣະອົງຊົງໃຫ້ເຮືອນຂອງເຂົາເຕັມດ້ວຍຂອງດີ ແຕ່ຄຳປຶກສາຂອງຄົນອະທັມຫ່າງໄກຈາກຂ້າພະເຈົ້າ

19 ຄົນຊອບທັມເຫັນແລະຍິນດີ ຄົນປາສຈາກຜິດຫົວຂວັນ

20 ກ່າວວ່າ "ປໍຣິປັກຂອງເຮົາຖືກຕັດຂາດແນ່ແລ້ວ ແມ່ນຫຍັງທີ່ເຂົາມີເຫລືອໄຟກໍເຜົາເສັຽ"

21 "ຈົ່ງປອງດອງກັບພຣະເຈົ້າ ແລະຢູ່ຢ່າງສັນຕິ ດັ່ງນັ້ນສິ່ງທີ່ດີຈະມາເຖິງທ່ານ

22 ຂໍຈົ່ງຮັບຄຳສັ່ງສອນຈາກພຣະໂອດຂອງພຣະອົງ ແລະເກັບພຣະຄຳຂອງພຣະອົງໄວ້ໃນໃຈຂອງທ່ານ

23 ຖ້າທ່ານກັບມາຫາອົງຜູ້ມີອຳນາດຍິ່ງໃຫຍ່ ແລະຖ່ອມຕົວລົງ ຖ້າທ່ານຖິ້ມຄວາມອະທັມໃຫ້ໄກຈາກເຕັນຂອງ
ທ່ານ

24 ຖ້າທ່ານວາງແຮ່ທອງຄຳໄວ້ໃນຝຸ່ນຂີ້ດິນ ແລະທອງຄຳເມືອງໂອຟີຣໄວ້ຖ້າມກາງຫ້ວຍທີ່ແລ້ງນ້ຳ

25 ຖ້າອົງຜູ້ມີອຳນາດຍິ່ງໃຫຍ່ເປັນສົມບັດຂອງທ່ານ ແລະເປັນເງິນທີ່ປະເສີດຂອງທ່ານ

26 ແລ້ວທ່ານຈະປິຕິຍິນດີໃນອົງຜູ້ມີອຳນາດຍິ່ງໃຫຍ່ ແລະເງີຍຫນ້າຂອງທ່ານຫາພຣະເຈົ້າ

27 ທ່ານຈະອ້ອນວອນຕໍ່ພຣະອົງ ແລະພຣະອົງຈະຊົງຟັງທ່ານ ແລະທ່ານຈະແກ້ບົນຂອງທ່ານ

28 ທ່ານຈະຕັດສິນໃຈໃນເຣື່ອງໃດ ແລະເຣື່ອງນັ້ນຈະສຳເຣັດສົມປະສົງ ແລະຈະມີແສງສວ່າງສ່ອງທາງໃຫ້
ທ່ານ

29 ເພາະພຣະເຈົ້າຊົງຢຽກຜູ້ທີ່ເຍີ່ຫຍິ່ງລົງມາ ແຕ່ພຣະອົງຊົງຊ່ອຍຄົນຖ່ອມໃຈໃຫ້ລອດ

30 ພຣະອົງຊົງຊ່ອຍຜູ້ທີ່ໄຮ້ຄວາມຜິດໃຫ້ພົ້ນ ທ່ານຈະໄດ້ຮັບການຊ່ອຍໃຫ້ພົ້ນໂດຍຄວາມສະອາດແຫ່ງມືຂອງ
ທ່ານ

## 23. ໂຢບຢາກຈະສູ້ຄະດີຂອງຕົນກັບພຣະເຈົ້າ

1 ແລ້ວໂຢບຕອບວ່າ,
2 "ຄຳຮ້ອງທຸກຂອງຂ້າພະເຈົ້າກໍຂົມຂື່ນໃນວັນນີ້ດ້ວຍ ມືຂອງຂ້າພະເຈົ້າກໍຫນັກ ເພາະການຮ້ອງຄາງຂອງຂ້າ
ພະເຈົ້າ
3 ໂອ ຂ້າພະເຈົ້າຢາກຮູ້ວ່າຈະພົບພຣະອົງໄດ້ທີ່ໃດ ເພື່ອຂ້າພະເຈົ້າຈະມາເຖິງພຣະທີ່ນັ່ງຂອງພຣະອົງ
4 ຂ້າພະເຈົ້າຈະຍື່ນຄະດີຂອງຂ້າພະເຈົ້າຕໍ່ພຣະພັກພຣະອົງ ແລະບັນຈຸຂໍ້ໂຕ້ຖຽງໃຫ້ເຕັມປາກຂ້າພະເຈົ້າ
5 ຂ້າພະເຈົ້າຈະຮູ້ວ່າ ພຣະອົງຈະຕອບຂ້າພະເຈົ້າວາຢ່າງໃດ ແລະເຂົ້າໃຈສິ່ງທີ່ພຣະອົງຈະກ່າວກັບຂ້າພະ
ເຈົ້າ
6 ພຣະອົງຈະຊົງໂຕ້ຖຽງກັບຂ້າພະເຈົ້າດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງຫລື ບໍ່ດອກ ພຣະອົງຈະ
ຊົງຟັງຂ້າພະເຈົ້າ
7 ໃນທີ່ນັ້ນຄົນທ່ຽງທັມຈະສູ້ຄວາມກັບພຣະອົງໄດ້ ແລະຂ້າພະເຈົ້າຈະຮັບການຊ່ອຍໃຫ້ພົ້ນຈາກຜູ້ພິພາກສາ
ຂອງຂ້າພະເຈົ້າເປັນນິດ
8 ຂ້າພະເຈົ້າຍ່າງໄປຂ້າງຫນ້າ ແຕ່ພຣະອົງບໍ່ໄດ້ຊົງສະຖິດທີ່ນັ້ນ ແລະຂ້າງຫລັງ ແຕ່ຂ້າພະເຈົ້າກໍບໍ່ສັງເກດ
ເຫັນພຣະອົງ
9 ຂ້າງຊ້າຍມືທີ່ພຣະອົງຊົງກະທຳກິດ ຂ້າພະເຈົ້າກໍບໍ່ເຫັນພຣະອົງ ຂ້າງຂວາມືພຣະອົງຊົງເຊື່ອງຢູ່ ຂ້າພະ
ເຈົ້າຊອກຫາພຣະອົງບໍ່ພົບ
10 ດ້ວຍວ່າພຣະອົງຊົງຮູ້ທາງທີ່ຂ້າພະເຈົ້າໄປ ເມື່ອພຣະອົງຊົງທົດສອບຂ້າພະເຈົ້າແລ້ວ ຂ້າພະເຈົ້າກໍຈະເປັນ
ເຫມືອນຢ່າງທອງຄຳ
11 ເທົ້າຂອງຂ້າພະເຈົ້າຕິດຮອຍພຣະບາດຂອງພຣະອົງແຫນ້ນ ຂ້າພະເຈົ້າຕາມມັນຄາຂອງພຣະອົງ ແລະບໍ່
ໄດ້ຫັນຫນີໄປຂ້າງໃດເລີຍ
12 ຂ້າພະເຈົ້າບໍ່ໄດ້ພາກຈາກພຣະບັນຍັດແຫ່ງຣິມພຣະໂອດຂອງພຣະອົງ ຂ້າພະເຈົ້າຕີຣາຄາພຣະຄຳພຣະອົງ
ສູງກວ່າເຈຕນາຂອງຂ້າພະເຈົ້າ
13 ແຕ່ພຣະອົງຊົງປ່ຽນແປງບໍ່ໄດ້ ແລະຜູ້ໃດຈະປີ່ນພຣະອົງໄດ້ ພຣະອົງມີພຣະປະສົງສິ່ງໃດພຣະອົງກໍຊົງກະ
ທຳສິ່ງນັ້ນ
14 ເພາະວ່າ ພຣະອົງຈະຊົງກະທຳສິ່ງທີ່ພຣະອົງຊົງກຳຫນົດໃຫ້ຂ້າພະເຈົ້ານັ້ນຄົບຖ້ວນ ແລະສິ່ງຢ່າງນັ້ນ
ຫລວງຫລາຍຢູ່ໃນແຜນການຂອງພຣະອົງ

15 ເພາະສະນັ້ນຂ້າພະເຈົ້າຈຶ່ງສັ່ນເຊັນຕໍ່ພຣະພັກພຣະອົງ ເມື່ອຂ້າພະເຈົ້າຄິດຕຶກຕອງ ຂ້າພະເຈົ້າກໍຍິ່ງຢ້ານຕໍ່ພຣະອົງ

16 ພຣະອົງຊົງກະທຳໃຫ້ຂ້າໃຈຂອງຂ້າພະເຈົ້າອ່ອນເພັຽ ອົງຜູ້ມີອຳນາດຍິ່ງໃຫຍ່ໄດ້ກະທຳໃຫ້ຂ້າພະເຈົ້າຢ້ານກົວ

17 ເພາະຂ້າພະເຈົ້າບໍ່ໄດ້ຖືກຕັດຂາດຈາກຄວາມມືດ ແລະພຣະອົງບໍ່ໄດ້ຊົງປິດຄວາມມືດທຶບໄວ້ຈາກຂ້າພະເຈົ້າ

## 24. ໂຢບປັບທຸກທີ່ພຣະເຈົ້າຊົງເມີນເສີຍຕໍ່ຄວາມຊົ່ວຮ້າຍ

1 "ເມື່ອເວລາກຳຫນົດບໍ່ປິດບັງໄວ້ຈາກອົງຜູ້ມີອຳນາດຍິ່ງໃຫຍ່ ເປັນຫຍັງບັນດາຜູ້ທີ່ຮູ້ຈັກພຣະອົງບໍ່ເຫັນວ່າກຳຫນົດຂອງພຣະອົງ

2 ມີຄົນທີ່ຍ້າຍຫລັກເຂດ ເຂົາຍຶດຝູງແກະພາໄປລ້ຽງ

3 ເຂົາໄລ່ຕ້ອນລໍຂອງຄົນກຳພ້າໄປ ເຂົາຍຶດງົວຂອງຍິງຫມ້າຍຈົນນາງຫາເງິນມາໃຊ້ຫນີ້

4 ເຂົາຊຸກຄົນຂັດສົນອອກນອກຖນົນ ຄົນຍາກຈົນແຫ່ງແຜ່ນດິນໂລກຕ່າງກໍລີ້ຊ່ອນຕົວຫມົດ

5 ເຫມືອນລໍປ່າຢູ່ໃນຖິ່ນກັນດານ ຄົນຍາກຈົນນັ້ນອອກໄປທຳງານພະຍາຍາມຫາອາຫານ ຖິ່ນແຫ້ງແລ້ງໃຫ້ອາຫານແກ່ບຸດຂອງເຂົາ

6 ເຂົາທັງຫລາຍເກັບຫຍ້າແຫ້ງທີ່ໃນທົ່ງ ແລະເຂົາເລັມສວນອະງຸ່ນຂອງຄົນອະທັມ

7 ເຂົານອນເປືອຍກາຍບໍ່ມີເສື້ອຜ້າຄລອດຄືນ ແລະບໍ່ມີຜ້າຫົ່ມກັນຫນາວ

8 ເຂົາປຽກຝົນແຫ່ງພູເຂົາ ແລະບຽດຢູ່ຂ້າງໂງ່ນຫີນເພາະຂາດທີ່ກຳບັງ

9 ມີຜູ້ເອົາເດັກກຳພ້າໄປຈາກເອິກ ແລະເອົາລູກນ້ອຍຂອງຄົນຍາກຈົນໄປເປັນຄ່າຈ່າຍຫນີ້

10 ເຂົາທັງຫລາຍຈຶ່ງເດີນເປືອຍກາຍໄປບໍ່ມີເສື້ອຜ້າ ທັງທີ່ຫິວ ເຂົາກໍແບກເຟືອງເຂົ້າໄປ

11 ເຂົາທຳນ້ຳມັນຢູ່ຖ້າມກາງແຖວຕົ້ນຫມາກກອກເທດຂອງຄົນອະທັມ ເຂົາຢ່ຳຢູ່ທີ່ບໍ່ຢ່ຳອະງຸ່ນແຕ່ເຂົາຕ້ອງທົນຄວາມກະຫາຍ

12 ຄົນທີ່ກຳລັງຈະຕາຍຄ່ຳຄວນອອກມາຈາກທີ່ໃນເມືອງ ແລະຈິດໃຈຂອງຄົນບາດເຈັບຮ້ອງຂໍຄວາມຊ່ວຍເຫລືອ ແຕ່ພຣະເຈົ້າບໍ່ໄດ້ສົນພຣະທັຍໃນຄຳອ້ອນວອນຂອງເຂົາ

13 "ມີຜູ້ທີ່ກະບົດຕໍ່ຄວາມສວ່າງ ຜູ້ທີ່ບໍ່ຄຸ້ນເຄີຍກັບທາງຂອງຄວາມສວ່າງນັ້ນ ແລະບໍ່ໄດ້ຢູ່ໃນທາງຂອງຄວາມສວ່າງນັ້ນ

14 ຜູ້ທຳຄາດຕະກັມລຸກຂຶ້ນມາແຕ່ເດິກ ເຂົາຂ້າຄົນຍາກຈົນ ແລະຄົນຂັດສົນ ແລະໃນກາງຄືນເຂົາເປັນເຫມືອນຂະໂມຍ

15 ຕາຂອງຜູ້ລ່ວງປະເວນີຄອຍເວລາຍາມຄ່ຳ ກ່າວວ່າ "ບໍ່ມີຕາໃດຈະເຫັນຂ້າ" ແລະເຂົາກໍປອມຫນ້າຂອງເຂົາ

16 ໃນຍາມມືດເຂົາຂຸດເຂົ້າໄປໃນເຮືອນ ກາງເວັນເຂົາກໍເກັບຕົວ ເຂົາບໍ່ຮູ້ຈັກຄວາມສວ່າງ

17 ເພາະຄວາມມືດທຶບເປັນເຫມືອນເວລາເຊົ້າແກ່ເຂົາທຸກຄົນ ເພາະເຂົາຄຸ້ນເຄີຍກັບຄວາມສະຍົດສະຍອງຂອງ
ຄວາມມືດທຶບ
18 "ເຂົາລອຍໄປເທິງຫນ້ານ້ຳ ສ່ວນແບ່ງຂອງເຂົາຖືກສາບໃນແຜ່ນດິນ ເຂົາບໍ່ຫັນຫນ້າໄປສູ່ສວນອະງຸ່ນຂອງ
ເຂົາ
19 ຄວາມແຫ້ງແລ້ງແລະຄວາມຮ້ອນໄດ້ເອົານ້ຳຫິມມະໄປສັນໃດ ແດນຄົນຕາຍກໍໄດ້ເອົາຜູ້ກະທຳບາບໄປສັນ
ນັ້ນ
20 ທ້ອງທີ່ໃຫ້ກຳເນີດຈະລືມເຂົາ ຕົວຫນອນຈະກິນເຂົາ ບໍ່ມີໃຜຈຳຊື່ເຂົາໄດ້ຕໍ່ໄປຄວາມອະທັມຈິ່ງຫັກລົງ
ເຫມືອນຕົ້ນໄມ້
21 "ເຂົາກົດຂີ່ຈາກຍິງຫມັນທີ່ບໍ່ມີລູກ ແລະບໍ່ທຳດີໃຫ້ແກ່ຍິງຫມ້າຍ
22 ພຣະເຈົ້າຍັງຊົງດຳຣົງຊີວິດຂອງຄົນມີກຳລັງດ້ວຍຣິດທານຸພາບຂອງພຣະອົງ ເຖິງແມ່ນວ່າເຂົາສິ້ນຫວັງໃນ
ຊີວິ ເຂົາກໍລຸກຂຶ້ນໄດ້
23 ພຣະອົງປະທານຄວາມປອດໄພໃຫ້ເຂົາ ແລະເຂົາກໍເພິ່ງຢູ່ ແລະພຣະເນດຂອງພຣະອົງຢູ່ເທິງຫົນທາງຂອງ
ເຂົາ
24 ເຂົາທັງຫລາຍຖືກຍົກຍ້ອງຂຶ້ນບຸດນຶ່ງແລ້ວກໍສິ້ນໄປ ເຂົາຫ່ຽວແຫ້ງ ແລະສິ້ນໄປເຫມືອນຄົນອື່ນໆ ເຂົາຖືກ
ຕັດອອກເຫມືອນຍອດຮວງເຂົ້າ
25 ຖ້າບໍ່ເປັນເຊັ່ນນັ້ນ ໃຜຈະພິສູດໄດ້ວ່າຂ້າພະເຈົ້າມຸສາ ແລະສຳແດງວ່າສິ່ງທີ່ຂ້າພະເຈົ້າກ່າວນັ້ນໄຮ້ສາຣະ"

## 25. ບີນດັດປະຕິເສດຂໍ້ທີ່ວ່າ "ຕໍ່ພຣະເຈົ້າມະນຸດຈະເປັນຝ່າຍຖືກໄດ້

1 ແລ້ວບີນດັດຕະກູນຊູອາຕອບວ່າ,
2 "ພຣະເຈົ້າຊົງອຳນາດໃນການຄອບຄອງແລະຊົງໃຫ້ຢຳເກງ ພຣະອົງຊົງກະທຳສັນຕິພາບໃນສວັນເບື້ອງສູງ
ຂອງພຣະອົງ
3 ກອງທັບຂອງພຣະອົງມີຈຳນວນ ຫລືຄວາມສວ່າງຂອງພຣະອົງບໍ່ໄດ້ສ່ອງມາເຫນືອຜູ້ໃດແດ່
4 ແລ້ວມະນຸດຈະຊອບທັມຕໍ່ພຣະພັກພຣະເຈົ້າໄດ້ຢ່າງໃດ ຄົນທີ່ເກີດຈາກຜູ້ຍິງຈະສະອາດໄດ້ຢ່າງໃດ
5 ເບິ່ງແມ໋ ເຖິງແມ່ນດວງຈັນກໍບໍ່ມີຄວາມສຸກໃສ ແລະດວງດາວກໍບໍ່ສະອາດໃນສາຍພຣະເນດຂອງພຣະອົງ
6 ມະນຸດຈະຍິ່ງສະອາດນ້ອຍກວ່ານັ້ນເທົ່າໃດ ຜູ້ເປັນພຽງຕົວດັກແດ້ ແລະບຸດຂອງມະນຸດ ຜູ້ເປັນພຽງໂຕ
ຫນອນ"

## 26. ໂຢບກ່າວວ່າພຣະເຈົ້າຊົງມີອຳນາດຄອບຄອງ

1 ແລ້ວໂຢບຕອບວ່າ,
2 "ທ່ານໄດ້ຊ່ວຍຜູ້ບໍ່ມີກຳລັງຫລາຍຈິງຫນໍ ທ່ານໄດ້ຊ່ວຍແຂນທີ່ບໍ່ມີແຮງແລ້ວຫນໍ

3 ທ່ານໃຫ້ຄຳປຶກສາແກ່ຄົນທີ່ບໍ່ມີສະຕິປັນຍາ ແລະໄດ້ໃຫ້ຄວາມຮູ້ຫລາຍທີ່ສຳຣິດຜົນ ຈິງຫນໍ
4 ທ່ານເປັ່ງວາຈາອອກມາດ້ວຍຄວາມຊ່ອຍເຫລືອຂອງໃຜ ແລະວິນຍານຂອງໃຜໄດ້ອອກມາຈາກທ່ານ
5 ຊາວພິພົບຄົນຕາຍເບື້ອງລຸ່ມກໍສັ່ນເຊັນໃຕ້ນ້ຳແລະຊາວນ້ຳນັ້ນ
6 ພິພົບຄົນຕາຍເປີດແບອອກຕໍ່ພຣະພັກພຣະເຈົ້າ ແລະແດນພິນາດບໍ່ມີຜ້າປົກຄຸມບັງ
7 ພຣະອົງຊົງພືທ້ອງຟ້າອອກສູ່ທາງທິດເຫນືອ ແລະແຂວນໂລກໄວ້ເຫນືອທີ່ວ່າງເປົ່າ
8 ພຣະອົງຊົງມັດນ້ຳໄວ້ໃນເມກທຶບຂອງພຣະອົງ ແລະເມກນັ້ນກໍບໍ່ຂາດວິ່ນໄປ
9 ພຣະອົງຊົງຄຸມຫນ້າຂອງພຣະທີ່ນັ່ງ ແລະພືເມກຂອງພຣະອົງອອກຄຸມມັນໄວ້
10 ພຣະອົງຊົງຂີດປະຣິມົນທົນໄວ້ເທິງພື້ນນ້ຳໃນເຂດລະຫວ່າງຄວາມສວ່າງແລະຄວາມມືດ
11 ເສົາຟ້າກໍຫວັ່ນໄຫວ ແລະເສົານັ້ນກໍຄ່ອນແຄນສັ່ນເຊັນດ້ວຍຄວາມຢ້ານ
12 ພຣະອົງຊົງປາບທະເລໃຫ້ສງົບດ້ວຍອະນຸພາບຂອງພຣະອົງ ພຣະອົງຊົງຕີຣາຮາບດ້ວຍຄວາມເຂົ້າພຣະທັຍ
ຂອງພຣະອົງ
13 ພຣະອົງຊົງກະທຳໃຫ້ຟ້າສວັນຜ່ອງໃສດ້ວຍວາຍຸຂອງພຣະອົງ ພຣະຫັດຂອງພຣະອົງແທງພະຍານາກທີ່ກຳ
ລັງຫນີໄປ
14 ແຕ່ສິ່ງເຫລົ່ານີ້ເປັນພຽງເອີ່ຍເຖິງພຣະຣາຊກິດຂອງພຣະອົງ ເຮົາຊາບເຖິງພຣະອົງກໍເປັນພຽງສຽງກະຊິບ
ໃຜຈະເຂົ້າໃຈເຖິງຣິດເດດຄວາມຍິ່ງໃຫຍ່ອັນແທ້ຈິງຂອງພຣະອົງໄດ້

## 27. ໂຢບບັນຍາຍເຖິງຄວາມທຸກລຳບາກຂອງຄົນຊົ່ວຮ້າຍ

1 ແລະໂຢບໄດ້ກ່າວກອນພາສິດຂອງຕົນອີກວ່າ,
2 "ພຣະເຈົ້າຊົງພຣະຊົນຢູ່ແນ່ສັນໃດ ຄືພຣະອົງຜູ້ຊົງນຳຄວາມຍຸດຕິທັມອັນຄວນຕົກແກ່ຂ້າພະເຈົ້າໄປເສັຽ
ແລະອົງຜູ້ມີອຳນາດຍິ່ງໃຫຍ່ຊົງພຣະຊົນຢູ່ສັນໃດ ຄືຜູ້ຊົງທຳໃຈຂ້າພະເຈົ້າໃຫ້ຂົມຂື່ນ
3 ເພາະລົມຫາຍໃຈຍັງຢູ່ໃນຕົຍຂ້າພະເຈົ້າຕາບໃດ ແລະລົມປານຈາກພຣະເຈົ້າຍັງຢູ່ໃນຮູດັງຂອງຂ້າພະເຈົ້າ
ຕາບໃດ
4 ຮີມຝີປາກຂອງຂ້າພະເຈົ້າຈະບໍ່ເວົ້າຄວາມເທັດ ແລະລີ້ນຂອງຂ້າພະເຈົ້າຈະບໍ່ເປັ່ງຄຳຫລອກລວງ
5 ຂ້າພະເຈົ້າຈະບໍ່ເວົ້າວ່າ ທ່ານເປັນຝ່າຍຖືກ ຂ້າພະເຈົ້າຈະບໍ່ຖິ້ມຄວາມສັດຊື່ຂອງຂ້າພະເຈົ້າຈົນວັນຕາຍ
6 ຂ້າພະເຈົ້າຍຶດຄວາມຊອບທັມຂອງຂ້າພະເຈົ້າໄວ້ຫມັ້ນບໍ່ຍອມປ່ອຍໄປ ຈິດໃຈຂອງຂ້າພະເຈົ້າບໍ່ຕຳຫນິຂ້າ
ພະເຈົ້າ ບໍ່ວ່າວັນໃດໃນຊີວິດຂອງຂ້າພະເຈົ້າ
7 "ຂໍໃຫ້ສັດຕູຂອງຂ້າພະເຈົ້າເປັນເຫມືອນຄົນອະທັມ ແລະຂໍໃຫ້ຜູ້ທີ່ລຸກຂື້ນຕໍ່ສູ້ຂ້າພະເຈົ້າເປັນເຫມືອນຄົນບໍ່
ຊອບທັມ
8 ເພາະສິ່ງໃດຈະເປັນຄວາມຫວັງຂອງຄົນທີ່ບໍ່ນັບຖືພຣະເຈົ້າ ໃນເມື່ອພຣະເຈົ້າຊົງຕັດເຂົາອອກໄປເສັຽ ເມື່ອ
ພຣະເຈົ້າຊົງເອົາຊີວິດຂອງເຂົາໄປ

9 ພຣະເຈົ້າຈະຊົງຟັງສຽງຮ້ອງຂອງເຂົາຫລື ເມື່ອຄວາມທຸກລຳບາກມາສູ່ເຂົາ

10 ເຂົາຈະປິຕິຍິນດີໃນອົງຜູ້ມີອຳນາດຍິ່ງໃຫຍ່ຫລື ເຂົາຈະກາບທູນພຣະເຈົ້າທຸກເວລາຫລື

11 ຂ້າພະເຈົ້າຈະສອນທ່ານທັງຫລາຍເຖິງເຣື່ອງພຣະຫັດຂອງພຣະເຈົ້າ ຂ້າພະເຈົ້າຈະບໍ່ປິດບັງພຣະແຜນການ
ຂອງອົງຜູ້ມີອຳນາດຍິ່ງໃຫຍ່

12 ທ່ານທຸກຄົນໄດ້ເຫັນເອງແລ້ວ ເປັນຫຍັງທ່ານຈຶ່ງເວົ້າສິ່ງທີ່ເຫລວໄຫລຢ່າງນີ້

13 "ຕໍ່ພຣະເຈົ້າ ນີ້ເປັນສ່ວນຂອງຄົນອະທັມ ແລະມໍຣະດົກຊຶ່ງຜູ້ບີບບັງຄັບໄດ້ຮັບຈາກອົງຜູ້ມີອຳນາດຍິ່ງໃຫຍ່

14 ຖ້າລູກຫລານຂອງເຂົາເພີ້ມຂຶ້ນ ກໍເພື່ອຖືກດາບ ແລະເຊື້ອສາຍຂອງເຂົາກໍບໍ່ພໍກິນ

15 ຄົນຂອງເຂົາທີ່ລອດ ໂຣກລະບາດກໍຈະຝັງເຂົາເສັຽ ແລະເມັຽຫມ້າຍຂອງເຂົາຈະບໍ່ໄວ້ທຸກໃຫ້

16 ເຖິງເຂົາຈະກອບໂກຍເອົາເງິນໄວ້ຫລາຍຢ່າງຝຸ່ນຂີ້ດິນ ແລະກອງເສື້ອຜ້າໄວ້ດັ່ງດິນຫນຽວ

17 ເຂົາຈະກອງໄວ້ກໍໄດ້ ແຕ່ຄົນຊອບທັມຈະສວມ ແລະຄົນປາສຈາກຜິດຈະແບ່ງເງິນກັນ

18 ບ້ານທີ່ເຂົາສ້າງຈະເຫມືອນຮັງໄຫມຂອງດັກແດ້ ເຫມືອນຢ່າງໄຟທີ່ຄົນຍາມສ້າງ

19 ເຂົານອນລົງເປັນຄົນຮັ່ງມີ ແຕ່ເຂົາກໍເກັບສິ່ງໃດໄວ້ບໍ່ໄດ້ ເຂົາມືນຕາຂອງເຂົາຂຶ້ນ ແລະຊັບສົມບັດຂອງເຂົາ
ຫມົດໄປແລ້ວ

20 ຄວາມຢ້ານອັນຍິ່ງໃຫຍ່ຖ້ວມເຂົາເຫມືອນນ້ຳຖ້ວມ ໃນກາງຄືນພະຍຸຫອບເຂົາໄປ

21 ລົມຕາເວັນອອກຫອບເຂົາຂຶ້ນ ແລະເຂົາກໍຈາກໄປ ມັນກວາດເຂົາອອກໄປຈາກທີ່ຂອງເຂົາ

22 ມັນຈະພັດໃສ່ເຂົາໂດຍບໍ່ມີຄວາມປານີ ເຂົາຈະຫນີຈາກພຣະຫັດຂອງພຣະອົງ

23 ຄົນຕົບມືເຍາະເຍີ້ຍເຂົາ ແລະໄລ່ເຂົາອອກໄປຈາກບ່ອນຂອງເຂົາ

## 28. ການທີ່ມະນຸດສແວງຫາສະຕິປັນຍາ

1 "ແນ່ນອນ ຕ້ອງມີເຫມືອງສຳລັບແຮ່ເງິນ ແລະມີບ່ອນສຳລັບທອງຄຳທີ່ເຂົາຫລອມ

2 ເຂົາເອົາເຫລັກມາຈາກພື້ນດິນ ແລະຂຸດທອງແດງຈາກແຮ່ດິບ

3 ມະນຸດສຳລວດຄວາມມືດ ແລະຄົ້ນຫາໄປຍັງເຂດໄກທີ່ສຸດ ຄົ້ນແຮ່ດິບໃນບ່ອນມືດຄຶ້ມແລະບ່ອນມືດອັນຕຶບ
ຫນາ

4 ເຂົາຂຸດປ່ອງໄກຈາກບ່ອນຝູງຄົນອາໄສຢູ່ ຄົນສັນຈອນໄປມາລືມເຂົາແລ້ວ ເຂົາແຂວນຢູ່ແກວ່ງໄປແກວ່ງ
ມາໄກຈາກຝູງຄົນ

5 ຝ່າຍແຜ່ນດິນນັ້ນມີອາຫານອອກມາ ແຕ່ພາຍໃຕ້ກໍສັບສົນຢ່າງຖືກໄຟໄຫມ້

6 ກ້ອນຫີນບ່ອນນັ້ນເປັນບ່ອນຢູ່ຂອງແກ້ວໄພທູນ ແລະມັນມີຜົງທອງຄຳ

7 "ທາງນັ້ນບໍ່ມີແຫລວໂຕໃດຮູ້ ແລະບໍ່ມີຕາແຮ້ງມອງເຫັນ

8 ສັດປ່າທີ່ສງ່າບໍ່ເຄີຍຍ່າງບ່ອນນັ້ນ ສິງດຸຮ້າຍບໍ່ຜ່ານມາບ່ອນນັ້ນ

9 "ຄົນນັ້ນກ້າຂຸດໂງ່ນຫີນອັນແຂງ ແລະທຳລາຍພູເຂົາລົງເຖິງຮາກ

10 ເຂົາຂຸດເປັນຖ້ຳຜ່ານເງ່ນຫີນເຂົ້າໄປ ແລະຕາຂອງເຂົາເຫັນຂອງປະເສີດທຸກຢ່າງ
11 ເຂົາກັ້ນຕານ້ຳໄວ້ ເພື່ອບໍ່ໃຫ້ມີນ້ຳຍ້ອຍ ແລະສິ່ງທີ່ປິດບັງໄວ້ ອອກສູ່ແສງແຈ້ງ
12 "ແຕ່ຈະພົບພຣະປັນຍາທີ່ໃດ ແລະທີ່ຂອງຄວາມເຂົ້າໃຈຢູ່ທີ່ໃດ
13 ມະນຸດບໍ່ຮູ້ຈັກຄ່າຂອງພຣະປັນຍາ ແລະໃນແຜ່ນດິນຂອງຄົນເປັນກໍຫາບໍ່ພົບ
14 ບາດານເວົ້າວ່າ, "ທີ່ຂ້າພະເຈົ້າບໍ່ມີ" ແລະທະເລກ່າວວ່າ, "ບໍ່ຢູ່ກັບຂ້າພະເຈົ້າ"
15 ຈະເອົາທອງຄຳຊື້ກໍບໍ່ໄດ້ ແລະຈະຊັ່ງເງິນໃຫ້ຕາມຣາຄາກໍບໍ່ໄດ້
16 ຈະຕີຣາຄາເປັນທອງຄຳໂອຟີຣ໌ກໍບໍ່ໄດ້ ຫລືເປັນໂກເມນ ຫລືແກ້ວໄພທູນປະເສີດກໍບໍ່ໄດ້
17 ຈະທຽບເທົ່າທອງຄຳແລະແກ້ວກໍບໍ່ໄດ້ ຫລືຈະແລກກັບເຄື່ອງທອງຄຳປະເສີດກໍບໍ່ໄດ້
18 ຢ່າເອີ່ຍເຖິງເພັດນິນຈິນດາ ແລະທັບທິມເລີຍ ຄ່າຂອງພຣະປັນຍາສູງກວ່າມຸກດາ
19 ພອຍສີເຫລືອງນ້ຳອ່ອນແຫ່ງເມືອງເອທິໂອເປັຽ ກໍປຽບກັບພຣະປັນຍາບໍ່ໄດ້ ຫລືຈະຕີຣາຄາເປັນທອງຄຳບໍຣິ
ສຸດກໍບໍ່ໄດ້
20 "ດັ່ງນັ້ນພຣະປັນຍາມາຈາກທີ່ໃດ ແລະທີ່ຂອງຄວາມເຂົ້າໃຈຢູ່ທີ່ໃດ
21 ເປັນສິ່ງທີ່ຊ່ອນພົ້ນຈາກຕາຂອງສິ່ງທີ່ມີຊີວິດທັງປວງ ແລະປິດບັງໄວ້ຈາກນົກໃນອາກາດ
22 ແດນພິນາດແລະມັດຈຸຣາຊກ່າວວ່າ, "ເຮົາໄດ້ຍິນສຽງເລົ່າລືເຣື່ອງພຣະປັນຍາກັບຫູຂອງເຮົາ"
23 "ພຣະເຈົ້າຊົງຊາບທາງໄປຫາພຣະປັນຍານັ້ນ ແລະພຣະອົງຊົງຊາບທີ່ຢູ່ຂອງພຣະປັນຍາດ້ວຍ
24 ເພາະພຣະອົງທອດພຣະເນດໄປເຖິງທີ່ສຸດປາຍແຜ່ນດິນໂລກ ແລະຊົງເຫັນທຸກສິ່ງທີ່ໃຕ້ຟ້າສວັນ
25 ໃນເມື່ອພຣະອົງຊົງກຳຫນົດນ້ຳຫນັກໃຫ້ແກ່ລົມ ແລະຊົງກະນ້ຳດ້ວຍເຄື່ອງຜອງ
26 ເມື່ອພຣະອົງຊົງສ້າງກົດໃຫ້ຝົນ ແລະສ້າງທາງໄວ້ໃຫ້ແສງຟ້າແມບຂອງຟ້າຜ່າ
27 ແລ້ວພຣະອົງທອດພຣະເນດພຣະປັນຍາ ແລະຊົງສັນນິສູດ ຊົງສະຖາປະນາໄວ້ແລະຊົງວິຈັຍ
28 ແລະພຣະອົງກ່າວກັບມະນຸດວ່າ ເບິ່ງແມ໋ ຄວາມຢຳເກງພຣະເຈົ້າຄືພຣະປັນຍາ ແລະທີ່ຫັນຫນີຈາກຄວາມ
ຊົ່ວຄືຄວາມເຂົ້າໃຈ"

## 29. ໂຢບແກ້ຄະດີເທື່ອສຸດທ້າຍ

1 ແລະໂຢບກໍກ່າວກອນສຸພາສິດຂອງທ່ານອີກວ່າ,
2 "ໂອ ຂ້າພະເຈົ້າຢາກຈະຢູ່ເຫມືອນຢ່າງແຕ່ເກົ່າກ່ອນ ເຫມືອນໃນສະໄຫມເມື່ອພຣະເຈົ້າຊົງຮັກສາຂ້າພະເຈົ້າ
3 ເມື່ອແສງປະທີບຂອງພຣະອົງສ່ອງເຫນືອສີສະຂ້າພະເຈົ້າ
4 ເຫມືອນຂ້າພະເຈົ້າເມື່ອຄັ້ງຍັງຫນຸ່ມແຫນ້ນຢູ່ ເມື່ອພຣະເຈົ້າຊົງປົກປ້ອງເຕັນຂອງຂ້າພະເຈົ້າໄວ້
5 ເມື່ອອົງຜູ້ມີອຳນາດຍິ່ງໃຫຍ່ຍັງຢູ່ກັບຂ້າພະເຈົ້າ ແລະລູກຫລານຫ້ອມລ້ອມຂ້າພະເຈົ້າ
6 ເມື່ອເຂົາລ້າງເທົ້າຂອງຂ້າພະເຈົ້າດ້ວຍນ້ຳນົມ ແລະກ້ອນຫີນເທທານນ້ຳມັນອອກໃຫ້ຂ້າພະເຈົ້າ
7 ເມື່ອຂ້າພະເຈົ້າອອກມາຍັງປະຕູເມືອງ ເມື່ອຂ້າພະເຈົ້າຕຽມບ່ອນນັ່ງຂອງຂ້າພະເຈົ້າໃນລານເມືອງ

8 ຄົນຫນຸ່ມໆເຫັນຂ້າພະເຈົ້າແລ້ວກໍຫລີກໄປ ຄົນສູງອາຍຸລຸກຂຶ້ນຢືນ
9 ເຈົ້ານາຍຢຸດເວົ້າ ເອົາມືປິດປາກຂອງຕົນໄວ້
10 ສຽງຂອງຂຸນນາງກໍສງົບລົງ ແລະລີ້ນຂອງເຂົາກໍເກາະຕິດເຫືອກ(ເພດານ)ປາກ
11 ເມື່ອຫູໄດ້ຍິນແລ້ວ ຕ່າງກໍວ່າຂ້າພະເຈົ້າເປັນສຸກ ແລະເມື່ອຕາເບິ່ງກໍຍົກຍ້ອງຂ້າພະເຈົ້າ
12 ເພາະວ່າຂ້າພະເຈົ້າຊ່ອຍຄົນຍາກຈົນທີ່ຮ້ອງໃຫ້ຊ່ອຍ ແລະເດັກກໍາພ້າທີ່ບໍ່ມີໃຜອຸປຖັມເຂົາ
13 ພອນຂອງຄົນທີ່ໃກ້ຈະພິນາດກໍມາເຖິງຂ້າພະເຈົ້າ ແລະຂ້າພະເຈົ້າເປັນເຫດໃຫ້ຈິດໃຈຂອງຍິງຫມ້າຍຮ້ອງເພງດ້ວຍຄວາມຊື່ນບານ
14 ຂ້າພະເຈົ້າສວມຄວາມຊອບທັມ ແລະມັນກໍຫົ່ຫຸ້ມຂ້າພະເຈົ້າໄວ້ ຄວາມຍຸດຕິທັມຂອງຂ້າພະເຈົ້າເຫມືອນເສື້ອຄຸມ ແລະຜ້າປົກສີສະ
15 ຂ້າພະເຈົ້າເປັນນັຍຕາໃຫ້ຄົນຕາບອດ ແລະເປັນເທົ້າໃຫ້ຄົນງ່ອຍ
16 ຂ້າພະເຈົ້າເປັນພໍ່ໃຫ້ຄົນຂັດສົນ ແລະຂ້າພະເຈົ້າສອບສວນເຣື່ອງຂອງຜູ້ທີ່ຂ້າພະເຈົ້າບໍ່ຮູ້ຈັກ
17 ຂ້າພະເຈົ້າຫັກຂ້ຽວເລັບຂອງຄົນທີ່ບໍ່ຊອບທັມ ແລະໄດ້ດຶງເອົາເຫຍື່ອຈາກແຂ້ວຂອງເຂົາ
18 ແລ້ວຂ້າພະເຈົ້າຄິດວ່າ “ຂ້າພະເຈົ້າຈະຕາຍໃນຮັງຂອງຂ້າພະເຈົ້າ ແລະຂ້າພະເຈົ້າຈະທະວີວັນເວລາຂອງຂ້າພະເຈົ້າເຫມືອນຢ່າງດິນຊາຍ
19 ຮາກຂອງຂ້າພະເຈົ້າຈະແຜ່ໄປເຖິງນໍ້າ ມີນໍ້າຄ້າງເທິງກິ່ງຂອງຂ້າພະເຈົ້າຄລອດຄືນ
20 ສັກສີຂອງຂ້າພະເຈົ້າສົດຊື່ນຢູ່ກັບຂ້າພະເຈົ້າ ແລະຄັນທະນູຂອງຂ້າພະເຈົ້າໃຫມ່ສເມີຢູ່ໃນມືຂ້າພະເຈົ້າ”
21 “ຄົນທັງຫລາຍຟັງຂ້າພະເຈົ້າແລະຄອຍຢູ່ ແລະງຽບຢູ່ຟັງຄໍາປຶກສາຂອງຂ້າພະເຈົ້າ
22 ຫລັງຈາກທີ່ຂ້າພະເຈົ້າເວົ້າແລ້ວ ເຂົາກໍບໍ່ຢຸດອີກເລີຍ ແລະຄໍາຂອງຂ້າພະເຈົ້າກໍກັ່ນລົງມາເຫນືອເຂົາ
23 ເຂົາຄອຍຂ້າພະເຈົ້າເຫມືອນຄອຍຝົນ ເຂົາອ້າປາກຂອງເຂົາເຫມືອນຢ່າງລໍຮັບນໍ້າຝົນຍາມປາຍຣະດູ
24 ຂ້າພະເຈົ້າຍິ້ມແຍ້ມຕໍ່ເຂົາເມື່ອເຂົາທໍ້ຖອຍ ແລະໃບຫນ້າຍິ້ມແຍ້ມຂອງຂ້າພະເຈົ້າ ເຂົາບໍ່ໄດ້ທໍາໃຫ້ຫມົ່ນຫມອງ
25 ຂ້າເລືອກທາງໃຫ້ເຂົາ ແລະນັ່ງເປັນຫົວຫນ້າ ແລະຢູ່ເຫມືອນຢ່າງກະສັດຖ້າມກາງກອງທະຫານ ເຫມືອນຢ່າງຜູ້ທີ່ເລົ້າໂລມຄົນທີ່ສິ້ນຫວັງ

## 30.

1 “ແຕ່ດຽວນີ້ເຂົາເຍາະເຍີ້ຍຂ້າພະເຈົ້າ ຄືຄົນທີ່ອ່ອນກວ່າຂ້າພະເຈົ້າ ຄົນທີ່ຂ້າພະເຈົ້າຈະຢຽດຫຍາມພໍ່ຂອງເຂົາເຖິງກັບບໍ່ຍອມໃຫ້ຢູ່ກັບຫມາທີ່ເຝົ້າຝູງແບ້ແກະຂອງເຂົາ
2 ຂ້າພະເຈົ້າຈະໄດ້ສິ່ງໃດຈາກກໍາລັງມືຂອງເຂົາທັງຫລາຍ ຄືຂອງຄົນທີ່ເຫື່ອແຮງເຂົາຫມົດໄປແລ້ວ
3 ໂດຍທີ່ຂາດແຄນແລະອຶດຫິວ ເຂົາເສາະດິນທີ່ແຫ້ງແລະໃນທີ່ຮ້າງເປົ່າ
4 ເຂົາເກັບຜັກແລະໃບໄມ້ ກິນແມ່ນແຕ່ຮາກໄມ້ຈາງໆຂອງໄມ້ຍູກວາດ

5 ເຂົາຖືກຂັບໄລ່ອອກໄປຈາກຖ້າມກາງຄົນ ມີຄົນຮ້ອງຕາມເຂົາໄປຢ່າງຕາມໂຈນ
6 ສະນັ້ນ ເຂົາຄ້ອງພັກຢູ່ໃນຖ້ຳຫີນ ໃນຂຸມດິນ ແລະໂງ່ນຫີນ
7 ເຂົາຮ້ອງຢູ່ຖ້າມກາງພຸ່ມໄມ້ ເຂົາບຽດກັນຢູ່ພາຍໃຕ້ຕົ້ນໄມ້ຫນາມ
8 ເປັນພວກຄົນຖ່ອຍ ເປັນພວກຄົນເສັຽຊື່ ເຂົາຖືກກວາດອອກໄປເສັຽຈາກແຜ່ນດິນ
9 "ແລະບັດນີ້ຂ້າພະເຈົ້າກາຍເປັນເພງເຍາະເຍີ້ຍຂອງເຂົາ ຂ້າພະເຈົ້າເປັນຂີ້ປາກຂອງເຂົາ
10 ເຂົາທັງຫລາຍລັງກຽດຂ້າພະເຈົ້າ ແລະເຫີນຫ່າງຈາກຂ້າພະເຈົ້າ ຫລືຢ່າງບໍ່ລຳຄານເລີຍທີ່ຈະຖົ່ມນ້ຳລາຍ
ໃສ່ເມື່ອເຂົາເຫັນຂ້າພະເຈົ້າ
11 ເພາະພຣະເຈົ້າຊົງຫຍ່ອນສາຍທະນູຂອງຂ້າພະເຈົ້າ ແລະໃຫ້ຂ້າພະເຈົ້າຕົກຕ່ຳ ເຂົາທັງຫລາຍກໍແກວ່ງ
ຄວາມຍັ້ງຄິດເສັຽຕໍ່ຫນ້າຂ້າພະເຈົ້າ
12 ຄົນພານລຸກຂຶ້ນຂ້າງຂວາມືຂອງຂ້າພະເຈົ້າ ເຂົາກໍດັນຂ້າພະເຈົ້າອອກໄປ ເຂົາແກວ່ງທາງແຫ່ງຄວາມພິ
ນາດໄວ້ຕໍ່ສູ້ຂ້າພະເຈົ້າ
13 ເຂົາພັງທາງຢ່າງຂອງຂ້າພະເຈົ້າ ເຂົາເສີມໄພວິບັດໃຫ້ຂ້າພະເຈົ້າ ບໍ່ມີຜູ້ໃດຊ່ອຍໄດ້ເລີຍ
14 ເຂົາມາຢ່າງກັບມາທາງຊ່ອງໂຫວ່ ເຂົາກິ້ງເຂົ້າມາຖ້າມກາງສິ່ງທີ່ຫັກເພພັງ
15 ຄວາມສະຍົດສະຍອງຕ່າງໆຫັນເຂົ້າມາໃສ່ຂ້າພະເຈົ້າ ກຽດຂອງຂ້າພະເຈົ້າຖືກເຂົາຕິດຕາມຢ່າງລົມຕາມ
ແລະຄວາມຈະເຣີນຮຸ່ງເຮືອງຂອງຂ້າພະເຈົ້າສູນໄປເສັຽເຫມືອນຢ່າງເມກ
16 "ບັດນີ້ຈິດໃຈຂອງຂ້າພະເຈົ້າກໍລະລາຍໄປດ້ວຍຄວາມເສົ້າສລົດ ວັນແຫ່ງຄວາມທຸກໃຈຍຶດຕົວຂ້າພະເຈົ້າໄວ້
17 ກາງຄືນກະດູກຂ້າພະເຈົ້າຫຸໄປ ແລະຄວາມເຈັບປວດທີ່ທໍຣະມານຂ້າພະເຈົ້າບໍ່ຢຸດຈັກເທື່ອ
18 ເຄື່ອງນຸ່ງຂອງຂ້າພະເຈົ້າເສັຽຮູບໄປດ້ວຍຄວາມຮຸນແຮງ ມັນມັດຂ້າພະເຈົ້າເຫມືອນຢ່າງຜ້າຄໍເສື້ອຮັດຂ້າພະ
ເຈົ້າ
19 ພຣະເຈົ້າຊົງໂຍນຂ້າພະເຈົ້າລົງໃນຕົມ ແລະຂ້າພະເຈົ້າກໍກາຍເປັນເຫມືອນຝຸ່ນຂີ້ດິນ ແລະຂີ້ເຖົ່າ
20 ຂ້າພຣະອົງຮ້ອງທູນຂໍພຣະອົງ ແລະພຣະອົງຊົງບໍ່ໄດ້ຊົງຕອບຂ້າພຣະອົງເລີຍ ຂ້າພຣະອົງຢືນຂຶ້ນ ແລະ
ພຣະອົງບໍ່ຊົງມອງເບິ່ງ
21 ພຣະອົງທຳກັບຂ້າພຣະອົງຢ່າງໂຫດຮ້າຍທາຣຸນ ພຣະອົງຊົງຂົ່ມເຫັງຂ້າພຣະອົງດ້ວຍພຣະຫັດອັນຊົງຣິດ
ຂອງພຣະອົງ
22 ພຣະອົງຊົງຊູຂ້າພຣະອົງຂຶ້ນເຫນືອລົມ ແລະຊົງໃຫ້ຂ້າພຣະອົງຂີ່ລົມ ແລະຊົງໃຫ້ຂ້າພຣະອົງລະລາຍໄປໃນ
ພະຍຸ
23 ຂ້າພຣະອົງຮູ້ແລ້ວວ່າພຣະອົງຈະຊົງໃຫ້ຂ້າພຣະອົງຕາຍເສັຽ ແລະໃຫ້ໄປສູ່ທີ່ກຳຫນົດຂອງຄົນເປັນທັງປວງ
24 "ເຖິງປານນັ້ນຄົນໃນກອງທີ່ຫັກເພພັງບໍ່ຍື່ນມືຂອງເຂົາອອກ ຮ້ອງຂໍຄວາມຊ່ອຍເຫລືອໃນຖ້າມກາງໄພວິບັດ
ຂອງເຂົາຫລື

25 ຂ້າພະເຈົ້າບໍ່ໄດ້ຮ້ອງໄຫ້ເພື່ອຜູ້ທີ່ວັນເວລາຂອງເຂົາທຸກໄຮ້ເຂັນໃຈຫລື ຈິດໃຈຂອງຂ້າພະເຈົ້າບໍ່ໄດ້ໂສກສ
ລົດເພື່ອຄົນຂັດສົນຫລື
26 ແຕ່ເມື່ອຂ້າພະເຈົ້າຊອກຫາຂອງດີ ຂອງຮ້າຍກໍມາເຖິງ ແລະເມື່ອຂ້າພະເຈົ້າຄອຍຄວາມສວ່າງ ຄວາມມືດ
ກໍມາເຖິງ
27 ຈິດໃຈຂອງຂ້າພະເຈົ້າສັບສົນບໍ່ເຄີຍສງົບເລີຍ ວັນແຫ່ງຄວາມທຸກໃຈມາພົບຂ້າພະເຈົ້າ
28 ຂ້າພະເຈົ້າຫມອງຄ້ຳໄປ ບໍ່ແມ່ນດ້ວຍແດດ ຂ້າພະເຈົ້າຢືນຂຶ້ນໃນທີ່ຊຸມນຸມຊົນ ແລະຮ້ອງຂໍຄວາມຊ່ອຍ
ເຫລືອ
29 ຂ້າພະເຈົ້າເປັນພີ່ນ້ອງກັບຫມາປ່າ ແລະເປັນເພື່ອນກັບນົກກະຈອກເທດ
30 ຜິວຫນັງຂອງຂ້າດຳ ແລະຮ່ວງໄປຈາກຂ້າພະເຈົ້າ ກະດູກຂອງຂ້າພະເຈົ້າຮ້ອນຢ່າງໄຟໄຫມ້
31 ເພາະສະນັ້ນສຽງພິນເຂົາຄູ່ຂອງຂ້າພະເຈົ້າກາຍເປັນສຽງໂຫຍໄຫ້ ແລະສຽງປີ່ຂອງຂ້າພະເຈົ້າກາຍເປັນສຽງ
ຂອງຜູ້ທີ່ຮ້ອງໄຫ້

## 31.

1 “ຂ້າພະເຈົ້າໄດ້ສັນຍາຢ່າງເດັດຂາດວ່າຈະບໍ່ເບິ່ງຍິງສາວດ້ວຍຣາຄະຕັນຫາຈັກເທື່ອ
2 ພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງໂຜດປະທານອັນໃດແກ່ເຮົາ ພຣະອົງຊົງໃຫ້ອັນໃດຕອບແທນການກະທຳ
ຂອງມະນຸດ
3 ພຣະອົງໄດ້ສົ່ງໄພວິບັດ ແລການທຳລາຍມາຍັງຜູ້ທີ່ທຳຜິດ
4 ພຣະເຈົ້າຊົງຮູ້ທຸກສິ່ງທີ່ຂ້າພະເຈົ້າທຳ ແລະຊົງເຫັນຂ້າພະເຈົ້າຢ່າງໄປທຸກບາດກ້າວບໍ່ແມ່ນຫລື
5 ຂ້າພະເຈົ້າສາບານໄດ້ວ່າ ຂ້າພະເຈົ້າບໍ່ເຄີຍທຳຊົ່ວ ແລະບໍ່ເຄີຍຫລອກລວງຄົນອື່ນ
6 ຂໍພຣະເຈົ້າຊົງຊັ່ງເບິ່ງຂ້າພະເຈົ້າດ້ວຍຕາຊັ່ງອັນຖືກຕ້ອງ ແລະພຣະອົງຈະຮູ້ວ່າຂ້າພະເຈົ້າບໍຣິສຸດພຽງໃດ
7 ຖ້າຂ້າພະເຈົ້າຫັນຫລັງໃຫ້ທາງຊອບທັມ ຫລືປ່ອຍຕົວເອງໄປຕາມທາງຊົ່ວ ຖ້າມືຂອງຂ້າພະເຈົ້າເປິະເປື້ອນ
ດ້ວຍບາບ
8 ກໍຂໍໃຫ້ເຄື່ອງປູກຂອງຂ້າພະເຈົ້າຖືກທຳລາຍ ຫລືໃຫ້ຄົນອື່ນໆກິນຫມາກຜົນທີ່ຂ້າພະເຈົ້າປູກ
9 ຖ້າຂ້າພະເຈົ້າມີຄວາມໄຄ່ຫລົງໄຫລໃນເມັຽຂອງເພື່ອນບ້ານ ແລະຄອຍຈອບລີ້ຢູ່ນອກປະຕູເຮືອນຂອງນາງ
10 ກໍຂໍໃຫ້ເມັຽຂອງຂ້າພະເຈົ້າຮັບໃຊ້ຄົວກິນໃນເຮືອນຂອງຊາຍອື່ນ ແລະໃຫ້ຊາຍອື່ນນອນນຳນາງ
11 (ເພາະການທຳຜິດຢ່າງນີ້ຊົ່ວຮ້າຍຫລາຍ ຈະຕ້ອງຖືກໂທດເຖິງຕາຍຖ້າຂ້າພະເຈົ້າທຳຜິດຢ່າງນີ້
12 ມັນຈະເປັນໄພວິບັດ ແລະໄຟນະຮົກເຜົາຜານທຸກສິ່ງທີ່ຂ້າພະເຈົ້າມີ)
13 ເມື່ອຄົນໃຊ້ຄົນໃດຄົນນື່ງຂອງຂ້າພະເຈົ້າຮ້ອງທຸກຕໍ່ຂ້າພະເຈົ້າ ຂ້າພະເຈົ້າກໍຟັງແລະທຳຕໍ່ເຂົາໂດຍດີ
14 ຖ້າບໍ່ທຳດັ່ງນັ້ນ ຂ້າພະເຈົ້າຈະປັ່ນຫນ້າສູ້ພຣະພັກພຣະເຈົ້າໄດ້ຢ່າງໃດ ຂ້າພະເຈົ້າຈະເວົ້າແນວໃດເມື່ອພຣະ
ອົງສະເດັດມາພິພາກສາ

15 ເພາະແມ່ນພຣະເຈົ້າອົງດຽວນີ້ແຫລະ ທີ່ຊົງສ້າງຂ້າພະເຈົ້າກັບຄົນໃຊ້ຂອງຂ້າພະເຈົ້າ
16 ຂ້າພະເຈົ້າບໍ່ເຄີຍປະຕິເສດໃຫ້ຄວາມຊ່ອຍເຫລືອຄົນຍາກຈົນ ບໍ່ເຄີຍໃຫ້ພວກແມ່ຫມ້າຍຢູ່ດ້ວຍຄວາມຫມົດຫວັງ
17 ຫລືບໍ່ເຄີຍໃຫ້ລູກກຳພ້າຫິວເມື່ອຂ້າພະເຈົ້າມີອາຫານ
18 ຂ້າພະເຈົ້າໄດ້ເອົາໃຈໃສ່ດູແລເຂົາຄລອດຊີວິດຂອງຂ້າພະເຈົ້າ
19 ເມື່ອຂ້າພະເຈົ້າພົບຄົນນຶ່ງຄົນໃດທີ່ຂາດແຄນບໍ່ມີເຄື່ອງນຸ່ງ
20 ຂ້າພະເຈົ້າກໍເອົາເຄື່ອງນຸ່ງທີ່ທຳດ້ວຍຂົນແກະຂອງຂ້າພະເຈົ້າເອງໃຫ້ເຂົາ ແລ້ວເຂົາກໍກ່າວສັນລະເສີນຂ້າພະເຈົ້າດ້ວຍຄວາມເຕັມໃຈ
21 ຖ້າຂ້າພະເຈົ້າສໍ້ໂກງລູກກຳພ້າຍ້ອນເຊື່ອວ່າຈະຊນະຄະດີເຂົາໃນສານ
22 ກໍຂໍໃຫ້ລຳແຂນຂອງຂ້າພະເຈົ້າແຕກຫັກ ໃຫ້ມັນຫລຸດອອກຈາກບ່າຂອງຂ້າພະເຈົ້າເສັຽ
23 ຂ້າພະເຈົ້າບໍ່ເຄີຍປະພຶດເຊັ່ນນັ້ນ ເພາະວ່າຂ້າພະເຈົ້າຢ້ານກົວການລົງໂທດຂອງພຣະເຈົ້າ
24 ຂ້າພະເຈົ້າບໍ່ເຄີຍໄວ້ວາງໃຈໃນເງິນຄຳ
25 ຫລືພາກພູມໃຈໃນຄວາມຮັ່ງມີຂອງຂ້າພະເຈົ້າ
26 ຂ້າພະເຈົ້າບໍ່ເຄີຍຂາບໄຫວ້ດວງອາທິດສ່ອງແສງ ຫລືດວງຈັນເຕັມດວງ
27 ແມ່ນແຕ່ຄິດຈະທຳຂ້າພະເຈົ້າກໍບໍ່ເຄີຍ
28 ການທຳບາບເຊັ່ນນັ້ນຈະຕ້ອງຖືກໂທດເຖິງຕາຍ ເພາະເປັນການປະຕິເສດຜູ້ມີອຳນາດຍິ່ງໃຫຍ່
29 ຂ້າພະເຈົ້າບໍ່ເຄີຍດີໃຈເມື່ອສັດຕູເປັນທຸກ ຫລືເມື່ອພວກເຂົາປະສົບໄພວິບັດ
30 ຂ້າພະເຈົ້າບໍ່ເຄີຍທຳບາບດ້ວຍການສາບແຊ່ງໃຫ້ສັດຕູຕາຍ
31 ຄົນງານຂອງຂ້າພະເຈົ້າທັງຫມົດຮູ້ຈັກດີວ່າຂ້າພະເຈົ້າຍິນດີຕ້ອນຮັບຄົນຕ່າງຖິ່ນສເມີ
32 ຂ້າພະເຈົ້າຍິນດີຕ້ອນຮັບຄົນເດີນທາງທີ່ມາເຮືອນຂອງຂ້າພະເຈົ້າ ແລະຂ້າພະເຈົ້າບໍ່ເຄີຍໃຫ້ເຂົານອນຢູ່ຕາມທາງ
33 ຄົນອື່ນທັງຫລາຍພະຍາຍາມປົດບັງບາບຂອງຕົນໄວ້ ແຕ່ຂ້າພະເຈົ້າບໍ່ເຄີຍປົດບັງເລີຍ
34 ຂ້າພະເຈົ້າບໍ່ເຄີຍຢ້ານກົວຝູງຊົນນິນທາ ຂ້າພະເຈົ້າບໍ່ເຄີຍມິດງຽບຢູ່ໃນເຮືອນຍ້ອນຢ້ານພວກເຂົາກຽດຊັງ
35 ບໍ່ມີໃຜຈັກຄົນ ຫລືທີ່ຈະຟັງຂ້າພະເຈົ້າເວົ້າ ຂ້າພະເຈົ້າສາບານໄດ້ວ່າຄຳເວົ້າທຸກໆຄຳຂອງຂ້າພະເຈົ້າເປັນຄວາມຈິງ ຂໍໃຫ້ພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງຕອບຂ້າພະເຈົ້າ
36 ຂ້າພະເຈົ້າຈະເອົາປະດັບໄວ້ຮອບໆຄໍດ້ວຍຄວາມພູມໃຈ ແລະຍົກມັນຂຶ້ນໃຫ້ທຸກໆຄົນໄດ້ເຫັນ
37 ຂ້າພະເຈົ້າຈະກາບທູນພຣະເຈົ້າທຸກສິ່ງທີ່ຂ້າພະເຈົ້າທຳ ແລະຢູ່ຕໍ່ຫນ້າພຣະອົງດ້ວຍຄວາມກ້າຫານ
38 ຖ້ານາທີ່ຂ້າພະເຈົ້າທຳຢູ່ນີ້ ໄດ້ຍຶດເອົາມາຈາກຄົນອື່ນ
39 ຖ້າຂ້າພະເຈົ້າໄດ້ກິນຫມາກຜົນທີ່ເຂົາປູກ ແຕ່ໃຫ້ເຈົ້າຂອງນາອຶດຢາກ
40 ກໍຂໍໃຫ້ຫຍ້າແລະໄມ້ມີຫນາມງອກຂຶ້ນແທນເຂົ້າບເລ ແລະເຂົ້າເດືອຍຂອງຂ້າພະເຈົ້າຈົບຄຳເວົ້າຂອງໂຢບ

## 32. ເອລີຮູອ້າງເຫດທີ່ມີສິດທີ່ຈະຕອບໂຢບ

1 ດັ່ງນັ້ນ ຊາຍທັງສາມກໍຢຸດຕອບໂຢບ ເພາະໂຢບຊອບທັມໃນສາຍຕາຂອງຕົນເອງ

2 ແລ້ວເອລີຮູ ບຸດບາຣາເຄນ ຊາວບຸສ ຕະກູນຣາມ ກໍໂກດ ເຂົາໃຈຮ້າຍໂຢບ ເພາະທ່ານອ້າງຕົວວ່າຊອບທັມ ແລະພວມກ່າວຫາພຣະເຈົ້າ

3 ເຂົາໃຈຮ້າຍໃຫ້ສະຫາຍສາມຄົນຂອງໂຢບເຫມືອນກັນ ເພາະເຂົາທັງຫລາຍຕອບບໍ່ໄດ້ ທັງໆທີ່ເຂົາຫາວ່າໂຢບຜິດ

4 ຝ່າຍເອລີຮູຄອຍຖ້າຈະເວົ້າກັບໂຢບ ເພາະເຂົາທັງສາມແກ່ກວ່າຕົນ

5 ແລະເມື່ອເອລີຮູເຫັນວ່າບໍ່ມີຄຳຕອບໃນປາກຂອງບຸຣຸດທັງສາມນີ້ແລ້ວ ເຂົາຈຶ່ງໃຈຮ້າຍ

6 ແລະເອລີຮູ ບຸດບາຣາເກນ ຊາວບຸສ ຕະກູນຣາມເວົ້າວ່າ, “ຂ້າພະເຈົ້າຍັງຫນຸ່ມຢູ່ ແລະທ່ານສູງອາຍຸແລ້ວ ເພາະສະນັ້ນຂ້າພະເຈົ້າຢ້ານກົວທີ່ຈະກ່າວຄວາມຄິດຄວາມເຫັນຂອງຂ້າພະເຈົ້າແກ່ທ່ານ

7 ຂ້າພະເຈົ້າວ່າ “ຂໍໃຫ້ວັນເວົ້າເຖີດ ແລະໃຫ້ປີຫລາຍປີສອນສະຕິປັນຍາ”

8 ແຕ່ເປັນວິນຍານຈິດໃນມະນຸດ ລົມຫາຍໃຈຂອງອົງຜູ້ມີອຳນາດຍິ່ງໃຫຍ່ທີ່ກະທຳໃຫ້ເຂົາເຂົ້າໃຈ

9 ບໍ່ແມ່ນຄົນເຖົ້າແກ່ເທົ່ານັ້ນທີ່ເປັນຄົນສລາດ ຫລືຄົນສູງອາຍຸເຂົ້າໃຈຄວາມຍຸດຕິທັມ

10 ເພາະສະນັ້ນຂ້າພະເຈົ້າຈຶ່ງວ່າ “ຂໍຟັງຂ້າພະເຈົ້າ ຂໍໃຫ້ຂ້າພະເຈົ້າກ່າວຄວາມຄິດເຫັນຂອງຂ້າພະເຈົ້າດ້ວຍ”

11 ເບິ່ງແມ່ ຂ້າພະເຈົ້າໄດ້ຄອຍຟັງຄຳຂອງທ່ານທັງຫລາຍ ຂ້າພະເຈົ້າຄອຍຟັງເຫດຜົນຂອງທ່ານ ຂນະທີ່ທ່ານສັນຫາວ່າຈະເວົ້າສິ່ງໃດ

12 ຂ້າພະເຈົ້າສົນໃຈຟັງທ່ານ ແລະເບິ່ງແມ່ ບໍ່ມີຜູ້ໃດໃຫ້ເຫດຜົນອັນຄວນແກ່ໂຢບ ໃນພວກທ່ານບໍ່ມີຜູ້ໃດທີ່ຕອບຄຳຂອງໂຢບໄດ້

13 ຢ່າອ້າງວ່າ “ເຮົາໄດ້ພົບພຣະປັນຍາແລ້ວພຣະເຈົ້າຈະຊົງໃຫ້ເອົາຊນະເຂົາໄດ້ ບໍ່ແມ່ນມະນຸດ”

14 ເຂົາບໍ່ໄດ້ໂຕ້ຖຽງຖ້ອຍຄຳຂອງເຂົາໃສ່ຂ້າພະເຈົ້າ ແລະຂ້າພະເຈົ້າຈະບໍ່ຕອບຖ້ອຍຄຳຂອງເຂົາດ້ວຍຄຳເວົ້າຂອງທ່ານ

15 “ເຂົາທັງຫລາຍກໍຕົກຕະລຶງ ເຂົາບໍ່ຕອບອີກ ເຂົາບໍ່ມີຖ້ອຍຄຳຈະເວົ້າຈັກຄຳ

16 ແລະຂ້າພະເຈົ້າຈະຄອຍຫລື ເພາະເຂົາທັງຫລາຍບໍ່ເວົ້າ ເພາະເຂົາຢືນຢູ່ທີ່ນັ້ນ ບໍ່ຕອບອີກ

17 ຂ້າພະເຈົ້າຈະລອງໃຫ້ຄຳຕອບຂອງຂ້າພະເຈົ້າ ຂ້າພະເຈົ້າຈະສຳແດງຄວາມຄິດເຫັນຂອງຂ້າພະເຈົ້າເອງ

18 ເພາະຂ້າພະເຈົ້າມີຖ້ອຍຄຳເຕັມຕົວ ຈິດໃຈພາຍໃນຂ້າພະເຈົ້າບັງຄັບຂ້າພະເຈົ້າຢູ່

19 ຈິດໃຈຂອງຂ້າພະເຈົ້າເຫມືອນເຫລົ້າອະງຸ່ນຊຶ່ງບໍ່ມີທີ່ລະບາຍອອກ ເຫມືອນຖົງຫນັງເຫລົ້າອະງຸ່ນໃຫມ່ຈະລະເບີດຢູ່ແລ້ວ

20 ຂ້າພະເຈົ້າຕ້ອງເວົ້າຈຶ່ງຈະໄດ້ຄວາມບັນເທົາ ຂ້າພະເຈົ້າຈ້ອງເປີດຮີມຝີປາກຂຶ້ນຕອບ

21 ຂ້າພະເຈົ້າຈະບໍ່ສະແດງອະຄະຕິຕໍ່ບຸກຄົນໃດໆ ຫລືໃຊ້ການປະຈົບສໍພໍຕໍ່ຜູ້ໃດ

22 ເພາະຂ້າພະເຈົ້າປະຈົບສໍພໍບໍ່ໄດ້ ຖ້າທຳຢ່າງນັ້ນ ຜູ້ສ້າງຂອງຂ້າພະເຈົ້າຈະທຳລາຍຂ້າພະເຈົ້າເສັຽໃນບໍ່ຊ້າ"

## 33. ເອລີຮູຕໍ່ວ່າໂຢບ

1 "ທ່ານໂຢບເອີຍ ບັດນີ້ຂໍຟັງຄຳຂອງຂ້າພະເຈົ້າ ແລະຟັງຖ້ອຍຄຳທັງສິ້ນຂອງຂ້າພະເຈົ້າ
2 ຂ້າພະເຈົ້າອ້າປາກ ລີ້ນພາຍໃນປາກຂອງຂ້າພະເຈົ້າກໍເວົ້າ
3 ຖ້ອຍຄຳຂອງຂ້າພະເຈົ້າສຳແດງຄວາມທ່ຽງທັມແຫ່ງຈິດໃຈ ແລະຮີມຝີປາກຂອງຂ້າພະເຈົ້າຮູ້ສິ່ງໃດກໍເວົ້າ
ອອກມາຢ່າງຈິງໃຈ
4 ພຣະວິນຍານຂອງພຣະເຈົ້າໄດ້ຊົງສ້າງຂ້າພະເຈົ້າ ແລະລົມປານຂອງອົງຜູ້ມີອຳນາດຍິ່ງໃຫຍ່ໄດ້ໃຫ້ຊີວິດ
ແກ່ຂ້າພະເຈົ້າ
5 ຖ້າທ່ານຕອບຂ້າພະເຈົ້າໄດ້ ກໍຕອບເລີຍ ຈົ່ງລຳດັບຖ້ອຍຄຳຂອງທ່ານຕໍ່ຫນ້າຂ້າພະເຈົ້າເຊີນເຖີດ
6 ເບິ່ງແມ່ ຂ້າພະເຈົ້າຢູ່ຢ່າງທ່ານຕໍ່ພຣະພັກພຣະເຈົ້າ ພຣະອົງຊົງປັ້ນຂ້າພະເຈົ້າຂຶ້ນມາຈາກດິນກ້ອນນຶ່ງ
ດ້ວຍເຫມືອນກັນ
7 ຢ່າໃຫ້ຄວາມຢ້ານກົວຂ້າພະເຈົ້າກະທຳໃຫ້ທ່ານຕົກໃຈ ຂ້າພະເຈົ້າຈະບໍ່ຊັກຊວນທ່ານຫນັກເກີນໄປ
8 "ແນ່ນອນ ທ່ານເວົ້າໃຫ້ຂ້າພະເຈົ້າຟັງ ແລະຂ້າພະເຈົ້າໄດ້ຍິນສຽງຖ້ອຍຄຳຂອງທ່ານ
9 ທ່ານວ່າ "ຂ້າພະເຈົ້າສະອາດປາສຈາກການທໍຣະຍົດ ຂ້າພະເຈົ້າບໍຣິສຸດບໍ່ມີຄວາມບາບຜິດໃນຂ້າພະເຈົ້າ
ເລີຍ
10 ເບິ່ງແມ່ ພຣະອົງຊົງຫາເຣື່ອງກັບຂ້າພະເຈົ້າ ພຣະອົງຊົງນັບວ່າຂ້າພະເຈົ້າເປັນສັດຕູກັບພຣະອົງ
11 ພຣະອົງຊົງເອົາເທົ້າຂອງຂ້າພະເຈົ້າໃສ່ຂື່ໄວ້ ແລະຊົງເຝົ້າເບິ່ງທາງຂອງຂ້າພະເຈົ້າທຸກໆບາດກ້າວ
12 "ເບິ່ງແມ່ ໃນເຣື່ອງນີ້ທ່ານບໍ່ຍຸດຕິທັມເລີຍ ຂ້າພະເຈົ້າຈະຕອບທ່ານພຣະເຈົ້າຍິ່ງໃຫຍ່ກວ່າມະນຸດ
13 ເປັນຫຍັງທ່ານຈຶ່ງໂຕ້ຖຽງກັບພຣະອົງວ່າ "ພຣະອົງຈະບໍ່ຊົງຕອບຖ້ອຍຄຳຂອງເຂົາເລີຍ"
14 ເພາະພຣະເຈົ້າກ່າວວິທີນຶ່ງ ແລະສອງວິທີ ແຕ່ມະນຸດບໍ່ຫຍັ່ງຮູ້ໄດ້
15 ໃນຄວາມຝັນໃນນິມິດກາງຄືນ ເມື່ອຄົນຫລັບສນິດ ເມື່ອເຂົາເຄີບເຄີ້ມຢູ່ເທິງບ່ອນນອນຂອງເຂົາ
16 ແລ້ວພຣະອົງຊົງທຳໃຫ້ຫູຂອງມະນຸດ ແລະຊົງສັ່ງສອນຢ່າງລັບໆ
17 ເພື່ອວ່າພຣະອົງຈະໄດ້ປັ່ນໃຫ້ມະນຸດກັບຄືນຈາກກິຈການຂອງເຂົາ ແລະຕັດຄວາມຈອງຫອງອອກເສັຽຈາກ
ມະນຸດ
18 ພຣະອົງຊົງຍຶດຫນ່ຽວວິນຍານຂອງເຂົາໄວ້ຈາກປາກແດນຄົນຕາຍ ແລະຍຶດຊີວິດຂອງເຂົາໄວ້ຈາກການທີ່
ຈະພິນາດດ້ວຍດາບ
19 "ມະນຸດຍັງຖືກຕີສອນດ້ວຍຄວາມເຈັບປວດເທິງບ່ອນນອນຂອງເຂົາດ້ວຍ ແລະດ້ວຍການຂັດແຍ້ງສເມີໃນ
ກະດູກຂອງເຂົາ
20 ຊີວິດຂອງເຂົາຈຶ່ງໄດ້ເບື່ອອາຫານ ແລະຈິດໃຈຈຶ່ງໄດ້ເບື່ອອາຫານດີທີ່ສຸດ

21 ເນື້ອຂອງເຂົາຊຸດໂຊມໄປຫລາຍຈົນເບິ່ງບໍ່ເຫັນ ກະດູກຂອງເຂົາຊຶ່ງເບິ່ງບໍ່ເຫັນນັ້ນກໍໂຜ່ອອກມາ
22 ວິນຍານຂອງເຂົາເຂົ້າໄປໃກ້ປາກແດນຄົນຕາຍ ແລະຊີວິດຂອງເຂົາເຂົ້າໃກ້ຜູ້ທີ່ນໍາຄວາມຕາຍມາ
23 ຖ້າມີທູດສວັນອົງນຶ່ງມາເພື່ອເຂົາເປັນລ່າມ ນຶ່ງໃນພັນ ເພື່ອຖະແລງແກ່ມະນຸດວ່າອັນໃດຖືກເພື່ອເຂົາ
24 ແລະທູດນັ້ນກະຣຸນາເຂົາ ທູນວ່າ "ຂໍຊົງປ່ອຍເຂົາໃຫ້ພົ້ນຈາກບ່ອນທີ່ຈະໄປຍັງປາກແດນຄົນຕາຍ ຂ້າພະເຈົ້າພົບຄ່າໄຖ່ແລ້ວ
25 ເນື້ອຂອງເຂົາຈະອ່ອນກວ່າເນື້ອເດັກ ຂໍໃຫ້ເຂົາກັບຄືນໄປສູ່ກໍາລັງເຫມືອນເມື່ອຍັງຫນຸ່ມ"
26 ເຂົາຈຶ່ງອ້ອນວອນຕໍ່ພຣະເຈົ້າ ແລະພຣະອົງຈະຊົງພໍພຣະທັຍເຂົາ ເຂົາຈະເຂົ້າມາເຝົ້າຕໍ່ພຣະພັກພຣະອົງດ້ວຍຄວາມຊື່ນບານ
27 ແລ້ວພຣະອົງຈະຊົງໃຫ້ມະນຸດກັບຄືນສູ່ສະພາບຄວາມຊອບທັມ ແລະເຂົາຈະຮ້ອງເພງຕໍ່ຫນ້າປະຊາຊົນກ່າວວ່າ "ຂ້າພະເຈົ້າບາບແລ້ວ ແລະເຫັນຜິດເປັນຊອບ ແລະບໍ່ໄດ້ຊົງລົງໂທດສນອງຂ້າພະເຈົ້າ"
28 ພຣະອົງຊົງໄຖ່ວິນຍານຈິດຂອງຂ້າພະເຈົ້າໃຫ້ພົ້ນຈາກການລົງໄປສູ່ພິພົບຄົນຕາຍ ແລະຊີວິດຂອງຂ້າພະເຈົ້າຈະເຫັນຄວາມສວ່າງ"
29 ພຣະເຈົ້າຊົງກະທໍາສິ່ງເຫລົ່ານີ້ທັງຫມົດ ກັບມະນຸດສອງເທື່ອສາມເທື່ອ
30 ເພື່ອຈະນໍາວິນຍານຈິດຂອງເຂົາມາຈາກແດນຄົນຕາຍ ເພື່ອໃຫ້ເຂົາເຫັນຄວາມສວ່າງແຫ່ງຊີວິດ
31 ທ່ານໂຢບເອີຍ ຂໍຕັ້ງໃຈຟັງຂ້າພະເຈົ້າ ຂໍມິດຢູ່ ແລະຂ້າພະເຈົ້າຈະເວົ້າ
32 ຖ້າທ່ານມີສິ່ງໃດເວົ້າກໍຕອບຂ້າພະເຈົ້າມາເຖີດ ເພາະຂ້າພະເຈົ້າປາຖນາແກ້ຄະດີໃຫ້ທ່ານ
33 ຖ້າບໍ່ດັ່ງນັ້ນ ກໍຂໍຟັງຂ້າພະເຈົ້າ ຂໍມິດງຽບ ແລະຂ້າພະເຈົ້າຈະສອນປັນຍາໃຫ້ແກ່ທ່ານ

## 34. ເອລີຮູສະແດງວ່າພຣະເຈົ້າຊົງເປັນຝ່າຍຖືກ

1 ເອລີຮູເວົ້າຕໍ່ໄປວ່າ,
2 "ທ່ານຜູ້ມີປັນຍາ ຂໍຟັງຖ້ອຍຄໍາຂອງຂ້າພະເຈົ້າ ທ່ານຜູ້ມີຄວາມຮູ້ ຂໍງ່ຽງຫູຟັງຂ້າພະເຈົ້າ
3 ເພາະຫູກໍຊີມຖ້ອຍຄໍາ ເຫມືອນຢ່າງເຫືອກປາກຊີມອາຫານ
4 ຂໍໃຫ້ເຮົາເລືອກສິ່ງທີ່ຖືກ ຂໍໃຫ້ເຮົາຮຽນຮູ້ໃນພວກເຮົາເອງວ່າອັນໃດດີ
5 ເພາະໂຢບກ່າວວ່າ "ຂ້າພະເຈົ້າເປັນຄົນຊອບທັມ ແລະພຣະເຈົ້າຊົງເອົາຄວາມຍຸດຕິທັມທີ່ຄວນຕົກແກ່ຂ້າພະເຈົ້າໄປເສັຽ"
6 ຂ້າພະເຈົ້າຖືກນັບວ່າເປັນຄົນມຸສາ ເຖິງແມ່ນວ່າຂ້າພະເຈົ້າຊອບທັມ ແຜຂອງຂ້າພະເຈົ້າຮັກສາບໍ່ຫາຍແມ່ນວ່າຂ້າພະເຈົ້າບໍ່ມີການທໍຣະຍົດເລີຍ
7 ແມ່ນໃຜທີ່ຈະເຫມືອນໂຢບ ຜູ້ດື່ມຄວາມຢຽດຫຍາມເຫມືອນດື່ມນໍ້າ
8 ຜູ້ເຂົ້າສັງຄົມກັບຄົນກະທໍາຊົ່ວ ແລະຍ່າງໄປກັບຄົນອະທັມ
9 ເພາະທ່ານໄດ້ກ່າວວ່າ "ບໍ່ເປັນປໂຍດອັນໃດແກ່ມະນຸດເຮົາທີ່ເຂົາຈະປິຕິຍິນດີໃນພຣະເຈົ້າ"

10 “ເພາະສະນັ້ນທ່ານຜູ້ມີຄວາມເຂົ້າໃຈ ຂໍຟັງຂ້າພະເຈົ້າ ພຣະເຈົ້າຈະບໍ່ຊົງກະທຳຄວາມອະທັມ ແລະທີ່ອົງຜູ້ມີ
ອຳນາດຍິ່ງໃຫຍ່ຈະຊົງກະທຳຜິດ
11 ເພາະພຣະເຈົ້າຊົງສນອງຕາມການກະທຳຂອງມະນຸດ ແລະພຣະອົງຊົງໃຫ້ເກີດແກ່ເຂົາຕາມການກະທຳ
ຂອງເຂົາ
12 ແນ່ນອນ ພຣະເຈົ້າຈະບໍ່ຊົງກະທຳຊົ່ວ ແລະອົງຜູ້ມີອຳນາດຍິ່ງໃຫຍ່ຈະບໍ່ຊົງປ່ຽນແປງຄວາມຍຸດຕິທັມ
13 ແມ່ນໃຜແຕ່ງຕັ້ງໃຫ້ພຣະອົງປົກຄອງໂລກ ຫລືແມ່ນໃຜມອບຫມາຍທັງໂລກໄວ້ກັບພຣະອົງ
14 ຖ້າພຣະອົງຊົງໃຫ້ວິນຍານຂອງພຣະອົງກັບຄືນສູ່ພຣະອົງ ແລະຊົງຮວບຮວມລົມປານຂອງພຣະອົງກັບຄື
ນມາຫາພຣະອົງ
15 ເນື້ອຫນັງທັງຫມົດກໍຈະພິນາດໄປດ້ວຍກັນ ແລະມະນຸດກໍຈະກັບຄືນໄປເປັນຝຸ່ນຂີ້ດິນ
16 “ຖ້າທ່ານມີຄວາມເຂົ້າໃຈ ຂໍຟັງຂໍ້ນີ້ ຂໍຟັງສຽງຖ້ອຍຄຳຂອງຂ້າພະເຈົ້າ
17 ຜູ້ທີ່ກຽດຊັງຄວາມຍຸດຕິທັມຄວນຈະປົກຄອງຫລື ທ່ານຈະສະຖາປະນາຜູ້ທີ່ຊອບທັມ ແລະຊົງອານຸພາບຫລື
18 ຜູ້ກ່າວແກ່ພຣະຣາຊາວ່າ “ທ່ານຜູ້ໄຮ້ຄ່າ” ແລະແກ່ເຈົ້ານາຍວ່າ, “ທ່ານທັງຫລາຍຜູ້ອະທັມ”
19 ຜູ້ບໍ່ຊົງສະແດງອະຄະຕິແກ່ເຈົ້ານາຍ ຫລືບໍ່ຊົງເຫັນແກ່ຄົນຮັ່ງມີຫລາຍກວ່າຄົນຍາກຈົນ ເພາະຄົນທັງຫມົດ
ນີ້ເປັນພຣະຫັດຖະກິດຂອງພຣະອົງ
20 ທັນທີທັນໃດເຂົາທັງຫລາຍກໍຕາຍ ເວລາກາງຄືນ ປະຊາຊົນຕົວສັ່ນແລະຕາຍໄປເສັຽ ບໍ່ແມ່ນດ້ວຍມືມະນຸດ
21 “ເພາະພຣະເນດຂອງພຣະອົງມອງດູທາງຂອງຄົນ ພຣະອົງຊົງເຫັນບາດກ້າວຍ່າງຂອງເຂົາຫມົດ
22 ບໍ່ມີບ່ອນມືດຕື້ມຫລືບ່ອນມືດທຶບ ຊຶ່ງຄົນຊົ່ວຈະລີ້ຊ່ອນຕົວໄດ້
23 ເພາະພຣະອົງບໍ່ຕ້ອງຊົງກຳຫນົດເວລາໃຫ້ແກ່ຜູ້ໃດ ໃຫ້ເຂົ້າເຝົ້າພຣະເຈົ້າຮັບການພິພາກສາ
24 ພຣະອົງຊົງສັງຫານຜູ້ມີອານຸພາບ ໂດຍບໍ່ຕ້ອງສອບສວນ ແລະຊົງຕັ້ງຄົນອື່ນໄວ້ແທນ
25 ດັ່ງນີ້ແຫລະ ດ້ວຍຊົງຊາບກິຈການຂອງເຂົາແລ້ວ ຈຶ່ງຊົງຄວ່ຳເຂົາເສັຽໃນກາງຄືນ ເຂົາກໍແຫລກໄປ
26 ພຣະອົງຊົງຕີເຂົາເພາະຄວາມອະທັມຂອງເຂົາ ຕໍ່ຫນ້າຕໍ່ຕາມະນຸດ
27 ເພາະວ່າເຂົາທັງຫລາຍຫັນຫນີເສັຽຈາກການຕິດຕາມພຣະອົງ ແລະບໍ່ນັບຖືມັນຄາຂອງພຣະອົງແຕ່ຢ່າງໃດ
ເລີຍ
28 ເຫັນນີ້ເຂົາຈຶ່ງກະທຳໃຫ້ສຽງຮ້ອງຂອງຄົນຍາກຈົນມາເຖິງພຣະອົງ ແລະພຣະອົງຊົງຟັງສຽງຮ້ອງຂອງຜູ້ຮັບ
ຄວາມທຸກໃຈ
29 ເມື່ອພຣະອົງຊົງມິດຢູ່ ຜູ້ໃດຈະກ່າວໂທດພຣະອົງໄດ້ ຜູ້ໃດຈະເຫັນພຣະອົງໄດ້ ບໍ່ວ່າຈະທຳແກ່ປະຊາຊາດ
ຫລືແກ່ບຸກຄົນກໍເຫມືອນກັນ
30 ເພື່ອວ່າຄົນຊົ່ວຈະບໍ່ໄດ້ຄອບຄອງ ແລະເຂົາຈະບໍ່ວາງກັບດັກປະຊາຊົນ
31 “ເພາະບໍ່ມີຜູ້ໃດຮ້ອງທູນພຣະເຈົ້າວ່າ “ຂ້າພຣະອົງໄດ້ຮັບການຕີສອນແລ້ວ ຂ້າພຣະອົງຈະບໍ່ທຳຜິດຕໍ່ໄປອີກ

32 ຂໍຊົງໂຜດສອນຂ້າພຣະອົງເຖິງສິ່ງທີ່ຂ້າພຣະອົງມອງເບິ່ງບໍ່ເຫັນ ຖ້າຂ້າພຣະອົງກະທຳບາບຊົ່ວ ຂ້າພຣະ
ອົງຈະບໍ່ກະທຳອີກ"
33 ການຕອບສນອງຂອງພຣະອົງຈະຕ້ອງເປັນຢ່າງທີ່ທ່ານຕ້ອງການຫລື ທ່ານຈິ່ງບໍ່ຮັບ ທ່ານເອງຕ້ອງເລືອກ
ແລະບໍ່ແມ່ນຂ້າພະເຈົ້າ ເຫດສະນັ້ນທ່ານມີຄວາມຄິດເຫັນຢ່າງໃດ ກໍເວົ້າມາເຖີດ
34 ຄົນທີ່ເຂົ້າໃຈຈະເວົ້າກັບຂ້າພະເຈົ້າ ຄືຄົນສລາດທີ່ຟັງຂ້າພະເຈົ້າ ຈະເວົ້າວ່າ
35 "ໂຢບເວົ້າຢ່າງບໍ່ມີຄວາມຮູ້ ຖ້ອຍຄຳຂອງເຂົາບໍ່ມີແກ່ນສານເສັຽເລີຍ"
36 ຢາກຈະໃຫ້ໂຢບຖືກທົດລອງຕໍ່ໄປເຖິງທີ່ສຸດ ເພາະວ່າເຂົາຕອບເຫມືອນຢ່າງຄົນອະທັມ
37 ເພາະເຂົາເພີ້ມຄວາມທໍຣະຍົດເຂົ້າກັບບາບຂອງເຂົາ ເຂົາຕົບມືເຍີ້ຍຢູ່ຖ້າມກາງເຮົາ ແລະທະວີຖ້ອຍຄຳ
ຂອງເຂົາກ່າວຮ້າຍພຣະເຈົ້າ"

## 35.

1 ເອລີຮູເວົ້າຕໍ່ໄປວ່າ,
2 "ທ່ານຄິດວ່ານີ້ຍຸດຕິທັມຫລື ທ່ານເວົ້າຫລືວ່າ "ຄວາມຊອບທັມຂອງຂ້າພະເຈົ້າຍິ່ງກວ່າຂອງພຣະເຈົ້າ"
3 ທີ່ທ່ານຖາມວ່າ "ຂ້າພະເຈົ້າຈະໄດ້ປໂຍດອັນໃດ ຂ້າພະເຈົ້າມີຫຍັງດີຂື້ນກວ່າຂ້າພະເຈົ້າທຳບາບ"
4 ຂ້າພະເຈົ້າຈະຕອບທ່ານກັບມິດສະຫາຍຂອງທ່ານດ້ວຍ
5 ຈົ່ງມອງເບິ່ງທ້ອງຟ້າ ເບິ່ງເມກຊຶ່ງຢູ່ສູງກວ່າທ່ານ
6 ຖ້າທ່ານທຳບາບ ທ່ານຈະໄດ້ອັນໃດທີ່ກະທົບກະເທືອນພຣະອົງ ຖ້າການທໍຣະຍົດຂອງທ່ານທະວີຂື້ນ ທ່ານ
ທຳອັນໃດແກ່ພຣະອົງ
7 ຖ້າທ່ານເປັນຄົນຊອບທັມ ທ່ານຖວາຍອັນໃດແກ່ພຣະອົງ ຫລືພຣະອົງຊົງຮັບສິ່ງໃດຈາກມືຂອງທ່ານ
8 ຄວາມອະທັມຂອງທ່ານກໍເປັນອັນຕະຣາຍແກ່ຄົນຢ່າງທ່ານ ແລະຄວາມຊອບທັມຂອງທ່ານກໍເປັນປໂຍດແກ່
ມະນຸດ
9 "ເຫດດ້ວຍການຖືກບີບບັງຄັບເຂົາກໍໄດ້ແຕ່ຄວນຄາງ ເຂົາຮ້ອງຂໍຄວາມຊ່ອຍເຫລືອເນື່ອງດ້ວຍແຂນຂອງຜູ້
ຊົງອຳນາດ
10 ແຕ່ບໍ່ມີຈັກຄົນເວົ້າວ່າ "ພຣະເຈົ້າຜູ້ຊົງສ້າງຂ້າພະເຈົ້າ ຜູ້ຊົງປະທານເພງໃນເວລາກາງຄືນ ຊົງຢູ່ທີ່ໃດ
11 ຜູ້ຊົງສອນເຮົາຫລາຍກວ່າສອນສັດແຫ່ງແຜ່ນດິນໂລກ ແລະຊົງກະທຳໃຫ້ເຮົາສລາດກວ່ານົກໃນຟ້າອາ
ກາດ"
12 ເຂົາຮ້ອງທຸກໃນທີ່ນັ້ນ ແຕ່ພຣະອົງບໍ່ໄດ້ຊົງຕອບ ເຫດຄວາມຈອງຫອງຂອງຄົນຊົ່ວ
13 ແນ່ນອນ ພຣະເຈົ້າບໍ່ໄດ້ຟັງສຽງລົມໆແລ້ງໆ ແລະອົງຜູ້ຊົງມີອຳນາດຍິ່ງໃຫຍ່ກໍບໍ່ໄດ້ຊົງນັບຖືສຽງນັ້ນ
14 ຈະຍິ່ງນ້ອຍກວ່ານັ້ນຈັກເທົ່າໃດ ເມື່ອທ່ານວ່າ ທ່ານບໍ່ເຫັນພຣະອົງ ແລະເມື່ອວ່າ ຄະດີນັ້ນກໍຢູ່ຕໍ່ພຣະພັກ
ພຣະອົງ ແລະທ່ານຄອຍພຣະອົງຢູ່

15 ບັດນີ້ ເພາະພຣະພິໂຣດຂອງພຣະອົງບໍ່ໄດ້ລົງໂທດ ແລະພຣະອົງບໍ່ໄດ້ສົນພຣະທັຍການລະເມີດອັນເລັກ
ນ້ອຍ
16 ເພາະສະນັ້ນໂຢບຈຶ່ງອ້າປາກເວົ້າຄຳລົມໆແລ້ງໆ ແລະທະວີຄຳເວົ້າໂດຍປາສຈາກຄວາມຮູ້"

## 36. ເອລີຮູຢົກຍ້ອງຄວາມຍິ່ງໃຫຍ່ຂອງພຣະເຈົ້າ

1 ແລະເອລີຮູເວົ້າຕໍ່ໄປດ້ວຍວ່າ,
2 "ຂໍທົນຢູ່ກັບຂ້າພະເຈົ້າອີກໜ້ອຍນຶ່ງ ແລະຂ້າພະເຈົ້າຈະສຳແດງແກ່ທ່ານ ເພາະຂ້າພະເຈົ້າມີບາງສິ່ງທີ່ຈະ
ເວົ້າແທນພຣະເຈົ້າອີກ
3 ຂ້າພະເຈົ້າຈະເອົາຄວາມຮູ້ມາຈາກໄກ ແລະຖວາຍຄວາມຊອບທັມແກ່ຜູ້ຊົງສ້າງຂ້າພະເຈົ້າ
4 ເພາະທີ່ຈິງຖ້ອຍຄຳຂອງຂ້າພະເຈົ້າບໍ່ໄດ້ເທັດ ທ່ານຜູ້ຊົງຄວາມຮູ້ຮອບຄອບສະຖິດກັບທ່ານ
5 ແນ່ນອນ ພຣະເຈົ້າຊົງອານຸພາບ ແລະບໍ່ໄດ້ຊົງຢຽດຫຍາມຜູ້ໃດເລີຍ ພຣະອົງຊົງອານຸພາບໃນເຣື່ອງກຳລັງ
ແຫ່ງຄວາມເຂົ້າໃຈ
6 ພຣະອົງບໍ່ໄດ້ສງວນຊີວິດຄົນອະທັມ ແຕ່ຊົງປະທານຄວາມຍຸດຕິທັມແກ່ຜູ້ທຸກໃຈ
7 ພຣະອົງບໍ່ໄດ້ຊົງຫັນພຣະເນດຂອງພຣະອົງໜີຈາກຄົນຊອບທັມ ແຕ່ກັບບັນດາພຣະຣາຊາເທິງພຣະທີ່ນັ່ງ
ພຣະອົງຊົງຕັ້ງເຂົາໄວ້ເປັນນິດ ແລະເຂົາກໍຢູ່ໃນທີ່ສູງ
8 ແລະຖ້າເຂົາຖືກຈຳດ້ວຍພັນທະນາການ ແລະຕິດຢູ່ໃນບ້ວງແຫ່ງຄວາມທຸກໃຈ
9 ພຣະອົງກໍຊົງສຳແດງກິຈກັມຂອງເຂົາທັງຫລາຍແກ່ເຂົາ ແລະການທໍຣະຍົດຂອງເຂົາ ວ່າເຂົາໄດ້ປະພຶດຕົວ
ດ້ວຍຄວາມອວດອ້າງຈອງຫອງ
10 ພຣະອົງຊົງໃຫ້ຫູຂອງເຂົາຟັງຄຳເຕືອນສອນ ແລະຊົງສັ່ງໃຫ້ເຂົາຫັນກັບຈາກຄວາມຜິດບາບຂອງເຂົາ
11 ຖ້າເຂົາທັງຫລາຍເຊື່ອຟັງແລະບົວລະບັດພຣະອົງ ເຂົາຈະຢູ່ຄົບອາຍຸຂອງເຂົາດ້ວຍຄວາມຈະເຣີນຮຸ່ງເຮືອງ
ແລະຢູ່ຄົບປີຂອງເຂົາດ້ວຍຄວາມສຸກໃຈ
12 ແຕ່ຖ້າເຂົາທັງຫລາຍບໍ່ເຊື່ອຟັງ ເຂົາທັງຫລາຍຈະພິນາດດ້ວຍດາບ ແລະຕາຍໂດຍປາສຈາກຄວາມຮູ້
13 "ຄົນໃຈບໍ່ນັບຖືພຣະເຈົ້າກໍສະສົມພຣະພິໂຣດ ເມື່ອພຣະອົງຊົງມັດເຂົາ ເຂົາບໍ່ຮ້ອງໃຫ້ຊ່ອຍ
14 ເຂົາຕາຍເມື່ອຍັງໜຸ່ມຢູ່ ແລະຊີວິດຂອງເຂົາສິ້ນສຸດລົງຖ້າມກາງພວກເທວະທາດ
15 ພຣະອົງຊົງຊ່ອຍຜູ້ທີ່ທຸກໃຈໄວ້ດ້ວຍຄວາມທຸກໃຈຂອງເຂົາ ແລະຊົງໃຫ້ຄວາມລຳເຄັນເພື່ອເປີດຫູຂອງເຂົາ
16 ພຣະອົງຊົງຊວນທ່ານໃຫ້ອອກມາຈາກຄວາມຄັບໃຈ ມາຍັງທີ່ກວ້າງທີ່ບໍ່ມີການບີບ ແລະສິ່ງທີ່ວາງໄວ້ທີ່ງ
ໂຕະຂອງທ່ານເຕັມໄປດ້ວຍຂອງດີມີອາຫານການກິນຢ່າງເຫລືອລົ້ນ
17 "ແຕ່ທ່ານກໍສົມກັບການພິພາກສາຄົນຊົ່ວ ການພິພາກສາ ແລະຄວາມຍຸດຕິທັມມາທັນຈັບທ່ານ
18 ຈົ່ງລະວັງເຖີດ ຢ້ານວ່າພຣະພິໂຣດຈະລໍ້ຊວນທ່ານໃຫ້ເຍີ້ຍຫຍັນ ແລະຢ່າໃຫ້ຄ່າອັນຍິ່ງໃຫຍ່ຂອງການໄຖ່
ທຳໃຫ້ທ່ານຫລົບຫລີກໄປ

19 ສຽງຮ້ອງຈະຊ່ວຍໃຫ້ທ່ານພົ້ນຈາກຄວາມທຸກໃຈຫລື ຫລືເຫື່ອແຮງທັງຫມົດຂອງທ່ານຈະຊ່ວຍທ່ານໄດ້ຫລື
20 ຢ່າອາລັຍເຖິງກາງຄືນ ເມື່ອຊົນຊາດທັງຫລາຍຖືກຕັດອອກໃນທີ່ຂອງເຂົາ
21 ລະວັງໃຫ້ດີ ຢ່າຫັນກັບຄືນໄປຫາຄວາມບາບຜິດ ເພາະທ່ານເລືອກສິ່ງນີ້ຫລາຍກວ່າເລືອກຄວາມທຸກໃຈ
22 ເບິ່ງແມ່ ພຣະເຈົ້າຊົງສຳແດງຄວາມຍິ່ງໃຫຍ່ດ້ວຍຣິດທານຸພາບຂອງພຣະອົງ ຜູ້ໃດເປັນຜູ້ສັ່ງສອນເຫມືອນ
ຢ່າງພຣະອົງ
23 ຜູ້ໃດເປັນຜູ້ບົງການພຣະອົງ ຫລືຜູ້ໃດຈະເວົ້າໄດ້ວ່າ “ພຣະອົງຊົງກະທຳຜິດແລ້ວ”
24 “ຈົ່ງລະນຶກເຖິງທີ່ຈະຍົກຍ້ອງພຣະຣາຊກິດຂອງພຣະອົງ ຊຶ່ງມະນຸດໄດ້ຮ້ອງເພງກ່າວເຖິງນັ້ນ
25 ມະນຸດທັງປວງເບິ່ງເຫັນສິ່ງນັ້ນຢູ່ແລ້ວ ມະນຸດເຫັນສິ່ງນັ້ນໄດ້ແຕ່ໄກ
26 ແນ່ນອນ ພຣະເຈົ້ານັ້ນຍິ່ງໃຫຍ່ ແລະເຮົາກໍບໍ່ຫຍັ່ງຮູ້ເຖິງພຣະອົງ ອາຍຸຂອງພຣະອົງເປັນສິ່ງທີ່ຄົ້ນຫາກັນບໍ່
ໄດ້
27 ເພາະພຣະອົງຊົງດຶງຢົດນ້ຳຂຶ້ນໄປ ຊຶ່ງກັ່ນເປັນຝົນຈາກເມກຂອງພຣະອົງ
28 ຊຶ່ງຟ້າກໍເທລົງມາ ແລະຢົດລົງທີ່ມະນຸດຢ່າງອຸດົມ
29 ມີຄົນໃດເຂົ້າໃຈການແຜ່ຂອງເມກຫລື ແລະຟ້າຮ້ອງຜ່ານຫ້ອງຟ້າບ່ອນພຣະເຈົ້າຢູ່ນັ້ນ
30 ພຣອົງຊົງກະຈາຍຟ້າແລບອອກໄປຮອບພຣະອົງ ແລະຄວາມເລິກຫ້ອງທະເລກໍຍັງຄົງດຳມືດ
31 ເພາະພຣະອົງຊົງພິພາກສາຊົນຊາດທັງຫລາຍດ້ວຍສິ່ງນີ້ ພຣະອົງປະທານອາຫານຢ່າງອຸດົມສົມບູນ
32 ພຣະອົງຊົງຄຸມພຣະຫັດຂອງພຣະອົງດ້ວຍຟ້າແລບ ແລະຊົງສັ່ງໃຫ້ມັນຜ່າຈຸດທີ່ຫມາຍ
33 ສຽງຄື່ນໆຂອງມັນປະກາດກ່ຽວກັບພຣະອົງ ແລະຝູງສັດກໍປະກາດກ່ຽວກັບພະຍຸຊຶ່ງຈະມາເຖິງ

## 37.

1 ເຣື່ອງນີ້ກະທຳໃຫ້ຫົວໃຈຂອງຂ້າພະເຈົ້າສັ່ນ ສະທົກສະທ້ານຂວັນຫນີ
2 ຈົ່ງຟັງ ຈົ່ງຟັງຟ້າຮ້ອງຂອງພຣະເຈົ້າ ແລະສຽງກະຫຶ່ມທີ່ດັງອອກມາຈາກພຣະໂອດຂອງພຣະອົງ
3 ພຣະອົງຊົງໃຫ້ໄປທົ່ວໃຕ້ຟ້າທັງຫມົດ ແລະຟ້າແລບຂອງພຣະອົງໄປເຖິງສຸດປາຍແຜ່ນດິນໂລກ
4 ພຣະສຸຣະສຽງຂອງພຣະອົງຄາງກະຫຶ່ມຕາມໄປ ພຣະອົງຊົງແຜດພຣະສຸຣະສຽງອັນດັງກ້ອງກັງວານຂອງ
ພຣະອົງ ພຣະອົງບໍ່ໄດ້ຊົງຫນ່ວງຫນ່ຽວຟ້າແລບ ເມື່ອໄດ້ຍິນພຣະສຸຣະສຽງຂອງພຣະອົງ
5 ພຣະເຈົ້າຊົງສຳແດງສຽງທີ່ດັງກ້ອງກັງວານຢ່າງປລາດດ້ວຍພຣະສຸຣະສຽງຂອງພຣະອົງ ພຣະອົງຊົງກະທຳ
ການອັນໃຫຍ່ຊຶ່ງເຮົາເຂົ້າໃຈບໍ່ໄດ້
6 ເພາະພຣະອົງກ່າວກັບຫິມມະວ່າ “ຕົກລົງເທິງແຜ່ນດິນ” ແລະໃນທຳນອງດຽວກັນກໍກ່າວກັບຝົນ ແລະກັບ
ຫ່າຝົນອັນຫນັກຂອງພຣະອົງ
7 ພຣະອົງຊົງມັດມືຂອງມະນຸດທຸກຄົນ ເພື່ອທຸກຄົນຊຶ່ງພຣະອົງຊົງສ້າງຈະຮູ້ໄດ້
8 ແລ້ວສັດປ່າຈຶ່ງເຂົ້າໄປສູ່ຮັງຂອງມັນ ແລະອາໄສຢູ່ໃນຖ້ຳຂອງມັນ

9 ພະຍຸອອກມາຈາກທາງທິດໃຕ້ ແລະຄວາມໜາວມາຈາກລົມເໜືອ
10 ພຣະເຈົ້າປະທານນ້ຳແຂງດ້ວຍລົມຫາຍໃຈຂອງພຣະອົງ ແລະນ້ຳກວ້າງໃຫຍ່ກໍແຂງຕົວ
11 ພຣະອົງຊົງບັນທຸກຄວາມຊຸ່ມຂຶ້ນໄວ້ໃນເມກທຶບ ພຣະອົງຊົງກະຈາຍເມກແຫ່ງຟ້າແລບອອກໄປ
12 ມັນເຄື່ອນໄປຕາມການນຳຂອງພຣະອົງ ເພື່ອໃຫ້ສຳເຣັດກິດທັງສິ້ນຊຶ່ງພຣະອົງຊົງສັ່ງມັນ ທີ່ເໜືອຜິວພິພົບ
ທີ່ມະນຸດອາໄສຢູ່ໄດ້
13 ບໍ່ວ່າຈະເປັນເພື່ອການຕີສອນ ຫລືເພື່ອຄວາມຮັກໝັ້ນຄົງ ພຣະອົງຊົງກະທຳໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ
14 "ທ່ານໂຢບເອີຍ ຂໍຟັງຂໍ້ນີ້ ຈົ່ງຄຶດພິຈາຣະນາການກະທຳອັນອັດສະຈັນຂອງພຣະເຈົ້າ
15 ທ່ານຮູ້ຫລືວ່າພຣະເຈົ້າຊົງກຳຊັບມັນຢ່າງໃດ ແລະກະທຳໃຫ້ຟ້າແລບແຫ່ງເມກຂອງພຣະອົງມີແສງ
16 ທ່ານຮູ້ເຖິງການຊົງຕົວຂອງເມກຫລື ເປັນພຣະຣາຊກິດອັນປລາດຂອງພຣະອົງຜູ້ສົມບູນໃນຄວາມຮູ້
17 ຕົວທ່ານ ຜູ້ທີ່ເສື້ອຜ້າຂອງຕົນຮ້ອນ ເມື່ອລົມທິດໃຕ້ພັດມາກະໜ່ຳແຜ່ນດິນໂລກ
18 ທ່ານແຜ່ຟ້າອອກໄປຢ່າງພຣະອົງໄດ້ຫລື ໃຫ້ແຂງຈັດດັ່ງໂລຫະຖືກຂັດໃຫ້ເຫລື້ອມ
19 ຈົ່ງສອນເຮົາມາວ່າເຮົາຄວນຈະທູນພຣະອົງຢ່າງໃດ ເພາະຄວາມມືດເຮົາຈຶ່ງຮ່າງສຳນວນຂອງເຮົາບໍ່ໄດ້
20 ຈະທູນພຣະອົງໄດ້ບໍ່ວ່າ ຂ້າພະເຈົ້າຢາກຈະທູນ ມີໃຜເຄີຍຄຶດບໍ່ວ່າເຂົາຢາກຈະຕາຍ
21 "ຝ່າຍມະນຸດມອງເບິ່ງແສງສວ່າງບໍ່ໄດ້ ເມື່ອມັນສຸກໃສຢູ່ໃນທ້ອງຟ້າ ເມື່ອລົມຜ່ານໄປກວາດໃຫ້ກະຈ່າງ
22 ແສງທອງສ່ອງມາຈາກທິດເໜືອ ພຣະເຈົ້າຊົງສລອງພຣະອົງດ້ວຍພຣະສະງ່າຣາສີຢ່າງໜ້າຢ້ານກົວ
23 ອົງຜູ້ມີຣິດອຳນາດຍິ່ງໃຫຍ່ນັ້ນ ເຮົາຈະຄົ້ນພົບພຣະອົງບໍ່ໄດ້ ພຣະອົງຍິ່ງໃຫຍ່ໃນເຣື່ອງຣິດທານຸພາບ
ຄວາມຍຸດຕິທັມອັນຫລວງຫລາຍພຣະອົງຈະບໍ່ຊົງຝ່າຝືນ
24 ເພາະສະນັ້ນມະນຸດຈຶ່ງຍົກຍ້ອງ ເກງພຣະອົງ ພຣະອົງບໍ່ຊົງນັບຖືຜູ້ໃດທີ່ຖືຕົວວ່າມີປັນຍາ

## 38. ພຣະເຈົ້າຊົງຕອບໂຢບ

(ປຖກ 1:1-10)

1 ແລ້ວພຣະຜູ້ເປັນເຈົ້າຊົງຕອບໂຢບ ມາຈາກພະຍຸຝົນວ່າ,
2 ເຈົ້າແມ່ນໃຜຈຶ່ງຖົກຖຽງຄວາມຮອບຮູ້ຂອງເຮົາ ເຈົ້າພຽງແຕ່ສະແດງຄວາມໂງ່ຂອງເຈົ້າເທົ່ານັ້ນ
3 ບັດນີ້ເຈົ້າຈົ່ງລຸກຢືນຂຶ້ນຢ່າງຜູ້ກ້າຫານ ແລ້ວຕອບຄຳຖາມທີ່ເຮົາຈະຖາມຄື
4 ເຈົ້າຢູ່ໃສເມື່ອເຮົາສ້າງໂລກ ຖ້າເຈົ້າຮູ້ແທ້ຈົ່ງບອກເຮົາເບິ່ງ
5 ຜູ້ໃດກຳໜົດຄວາມກວ້າງຂອງໂລກ ໃຜເນັ່ງເຊືອກແທກເທິງໂລກ ເຈົ້າຮູ້ເຣື່ອງນີ້ທັງໝົດແມ່ນບໍ
6 ເສົາຄ້ຳຊູໂລກຕັ້ງຢູ່ເທິງອັນໃດ ໃຜເປັນຜູ້ວາງສີລາລຶກຂອງໂລກ
7 ດາວທັງຫລາຍໄດ້ຮ້ອງເພງສັນລະເສີນພ້ອມກັນໃນເຊົ້າວັນນັ້ນ ແລະບັນດາບຸດຂອງພຣະເຈົ້າກໍໂຮ່ຮ້ອງສະ
ແດງຄວາມຍິນດີ
8 ໃຜອັດປະຕູຕັນນ້ຳທະເລໄວ້ ເມື່ອມັນລະເບີດອອກມາຈາກພື້ນແຜ່ນດິນ

9 ແມ່ນເຮົາທີ່ທຳໃຫ້ເມກປົກຄຸມທະເລ ແລະທຳໃຫ້ຄວາມມືດປົກຫຸ້ມຢູ່
10 ເຮົາໄດ້ກຳໜົດເຂດແດນໃຫ້ນໍ້າທະເລ ແລະສ້າງປະຕູໃສ່ໄລກັນນໍ້າໄວ້
11 ເຮົາໄດ້ບອກມັນວ່າ “ໄປໄດ້ໄກທໍ່ນີ້ ເລີຍໄປອີກບໍ່ໄດ້ ກະແສຄື້ນອັນແຮງກ້າຂອງເຈົ້າຈະຕ້ອງຢຸດຢູ່ນີ້”
12 ໂຢບເອີຍ ຄລອດຊີວິດຂອງເຈົ້ານັ້ນ ເຈົ້າເຄີຍບັງຄັບໃຫ້ມີແສງອາຣຸນໃນຕອນເຊົ້າຫລື
13 ເຈົ້າເຄີຍສັ່ງໃຫ້ແສງອາຣຸນມາຖືກຕ້ອງໂລກ ເພື່ອຂັບໄລ່ຄົນຊົ່ວອອກໄປຈາກບ່ອນລີ້ຂອງເຂົາຫລື
14 ແສງນັ້ນໄດ້ທຳໃຫ້ແລເຫັນພູ ແລະຮ່ອມພູທັງຫລາຍເປັນເຫມືອນທີ່ນເສື້ອຜ້າ
15 ແສງສວ່າງຍາມກາງເວັນໄດ້ຮຸ່ງໂພດສຳລັບຄົນຊົ່ວ ມັນຂັດຂວາງເຂົາບໍ່ໃຫ້ກະທຳຊົ່ວຮ້າຍ
16 ເຈົ້າໄດ້ລົງໄປຍັງແປວທະເລເລິກແລ້ວຫລື ເຈົ້າຍ່າງເທິງນຳມະຫາສະໝຸດໄດ້ຫລື
17 ມີຄົນເຄີຍສະແດງໃຫ້ເຈົ້າເຫັນບໍ ປະຕູແຫ່ງພິພົບຄົນຕາຍຊຶ່ງເປັນບ່ອນມືດນັ້ນ
18 ເຈົ້າຮູ້ຈັກບໍວ່າໂລກນີ້ໃຫຍ່ປານໃດ ຖ້າຮູ້ຈັກຈົ່ງບອກມາ
19 ເຈົ້າຮູ້ຈັກບໍວ່າແສງສວ່າງນັ້ນມາຈາກໃສ ຫລືແມ່ນຫຍັງເປັນທີ່ມາຂອງຄວາມມືດ
20 ເຈົ້າບອກໄດ້ບໍວ່າແສງສວ່າງແລະຄວາມມືດເດີນໄປໄກປານໃດແລະສັ່ໃຫ້ກັບມາອີກໄດ້ບໍ
21 ເຮົາເຊື່ອແນ່ວ່າເຈົ້າຮູ້ ເພາະວ່າເຈົ້າເຖົ້າຫລາຍແລ້ວ ແລະເມື່ອສ້າງໂລກເຈົ້າກໍເກີດແລ້ວ
22 ເຈົ້າເຄີຍໄປເບິ່ງບ່ອນທີ່ເຮົາເກັບຫີມມະ ແລະໝາກເຫັບໄວ້ບໍ
23 ເຮົາຈັດຕຽມມັນໄວ້ສຳລັບເວລາຍາກລຳບາກ ແລະເວລາມີເສິກສົງຄາມ
24 ເຈົ້າເຄີຍໄປບ່ອນພຣະອາທິດຂຶ້ນ ຫລືບ່ອນລົມຕາເວັນອອກພັດມາບໍ
25 ໃຜຂຸດຊ່ອງໄຂປ່ອງໃຫ້ຝົນຕົກ ແລະບອກທາງໃຫ້ຟ້າຜ່າໃຜທຳໃຫ້ຝົນຕົກລົງມາຖືກບ່ອນບໍ່ມີຄົນຢູ່
26 ໃຜທົດແຜ່ນດິນທີ່ແຫ້ງແລ້ງ ແລະອຶດຢາກເພື່ອໃຫ້ຫຍ້າປົ່ງຂຶ້ນມາ
27 ຝົນຫລືນໍ້າໝອກມີພໍ່ຫລືບໍ
28 ໃຜເປັນແມ່ຂອງນໍ້າກ້ອນແລະນໍ້າໝອກແຂງ
29 ຊຶ່ງທຳໃຫ້ນໍ້າເປັນຄືຫີນ ແລະທຳໃຫ້ນໍ້າທະເລເປັນນໍ້າກ້ອນ
30 ເຈົ້າບໍ ມັດດາວລູກໄກ່ໃຫ້ເປັນກຸ່ມ ຫລືເຈົ້າແກ້ເຄື່ອງຜູກດາວໄຖໄດ້ບໍ
31 ເຈົ້າທຳໃຫ້ດວງດາວຕ່າງໆໝຸນໄປຕາມຣະດູການຂອງມັນໄດ້ບໍ ແລະເຈົ້າພາດາວແຂ້ານ້ອຍໃຫຍ່ໄປໄດ້ບໍ
32 ເຈົ້າຮູ້ຈັກກົດໝາຍທີ່ໃຊ້ປົກຄອງຟ້າສວັນບໍ ເຈົ້າແຕ່ງຕັ້ງກົດໝາຍນັ້ນຂຶ້ນໃຊ້ໃນໂລກໄດ້ບໍ
33 ເຈົ້າຮ້ອງບອກໃຫ້ເມກເທຝົນລົງມາຣຳເຈົ້າປຽກໄດ້ບໍ
34 ຖ້າເຈົ້າສັ່ງໃຫ້ຟ້າຜ່າລົງມາ ມັນຈະມາຫາເຈົ້າແລ້ວເວົ້າຫລືວ່າ “ໂດຍຂ້ານ້ອຍ”
35 ໃຜບອກນົກກຸລາ ມັນຈິ່ງຮູ້ວ່າແມ່ນໍ້ານິນຈະຖ້ວມ ຫລືໃຜບອກໄກ່ຜູ້ ມັນຈິ່ງຮູ້ວ່າຝົນຈະຕົກ
36 ໃຜເກັ່ງພໍທີ່ຈະນັບເມກໄດ້ ແລະໃຫ້ເມກນັ້ນເທຝົນລົງມາ
37 ເພື່ອທຳໃຫ້ຝຸ່ນດິນໂຮມກັນເປັນກ້ອນໄດ້
38 ເຈົ້າຫາອາຫານໃຫ້ສິງກິນ ຫລືໃຫ້ສິງໜຸ່ມທີ່ຫິວຢາກກິນອີ່ມໄດ້ບໍ

39 ເມື່ອມັນຫມູບຢູ່ໃນຖ້ຳຂອງມັນ ຫລືນອນຄອຍຢູ່ໃນທີ່ກຳບັງ
40 ໃຜຈັດຫາເຫຍື່ອໃຫ້ກາ ເມື່ອມັນບິນເຫາະໄປດ້ວຍຄວາມຫິວຢາກ ແລະເມື່ອລູກອ່ອນຂອງມັນຮ້ອງຂໍອາຫານຕໍ່ເຮົາ

## 39.

1 "ເຈົ້າຮູ້ບໍວ່າ ແບ້ປ່າເກີດເມື່ອໃດ ເຈົ້າເຄີຍເຫັນກວາງເກີດບໍ
2 ສັດເຫລົ່ານີ້ຢູ່ໃນທ້ອງແມ່ຈັກເດືອນ ແລະມັນເກີດເວລາໃດ
3 ເຈົ້າຮູ້ບໍເມື່ອມັນຫມູບລົງ ແລ້ວອອກລູກມາສູ່ໂລກ
4 ລູກອ່ອນຂອງມັນຈະເຣີນເຕີບໂຕຂຶ້ນໃນກາງປ່າ ມັນອອກໄປແລະບໍ່ກັບມາອີກ
5 ໃຜໃຫ້ລໍປ່າແລ່ນຫນີໄປ ໃຜແກ້ເຊືອກປ່ອຍໃຫ້ມັນໄປ
6 ເຮົາໄດ້ໃຫ້ຖິ່ນກັນດານເປັນບ່ອນຢູ່ຂອງມັນ ແລະໃຫ້ມັນອາໄສຢູ່ໃນທົ່ງດິນເຄັມ
7 ມັນຫນີຈາກເມືອງທີ່ມີສຽງອຶກກະທຶກ ບໍ່ມີໃຜຝຶກຫັດ ແລະໃຊ້ວຽກມັນໄດ້
8 ພູເປັນປ່າໃຫຍ່ບ່ອນມັນຫາກິນ ບ່ອນມັນຊອກຫາຫຍ້າອັນຂຽວສົດ
9 ງົວກະທິງຈະເຮັດວຽກໃຫ້ເຈົ້າບໍ ມັນຈະຍອມນອນຄ້າງຄືນໃນຄອກສັດຂອງເຈົ້າບໍ
10 ເຈົ້າເອົາເຊືອກຜູກມັນໃຫ້ໄຖນາໄດ້ບໍ ຫລືມັນຈະຍອມຄາດນາໃຫ້ເຈົ້າ
11 ເຈົ້າຈະເພິ່ງອາໄສໃນກຳລັງອັນມະຫາສານຂອງມັນໄດ້ບໍ ແລະເຈົ້າຫວັງວ່າມັນຈະທຳງານຫນັກໃຫ້ເຈົ້າບໍ
12 ເຈົ້າເຊື່ອວ່າມັນຈະນຳພືນເກັບກ່ຽວຂອງເຈົ້າມາຈາກລານຟາດເຂົ້າບໍ
13 ປີກຂອງນົກກະຈອກເທດນັ້ນພັດໄວແທ້ ແຕ່ມັນກໍບິນບໍ່ໄດ້ເຫມືອນນົກກະສາ
14 ນົກກະຈອກເທດປະໄຂ່ໄວ້ໃນດິນ ເພື່ອໃຫ້ມັນອົບອຸ່ນຢູ່ໃນດິນ
15 ມັນບໍ່ສົນໃຈວ່າສັດອື່ນອາດຈະມາຢຽບ ຫລືສັດປ່າອາດຈະທຳໃຫ້ແຕກ
16 ມັນທຳເຫມືອນກັບວ່າໄຂ່ນັ້ນບໍ່ແມ່ນຂອງຕົນ ແລະບໍ່ສົນໃຈວ່າຄວາມລຳບາກຂອງມັນຈະເສັຽໄປລ້າໆ
17 ແມ່ນເຮົາຜູ້ທຳໃຫ້ມັນໂງ່ ແລະບໍ່ໃຫ້ສະຕິປັນຍາແກ່ມັນ
18 ແຕ່ເມື່ອມັນແລ່ນຫນີໄປ ມັນກໍໄວກວ່າຄົນຂີ່ມ້າ
19 ໂຢບເອີຍ ແມ່ນເຈົ້າບໍຜູ້ທຳໃຫ້ມ້າເກັ່ງກ້າແຂງແຮງ ແລໃຫ້ແຜງຍາວຫຸ້ມຄໍຂອງມັນ
20 ເຈົ້າບໍເປັນຜູ້ທຳໃຫ້ມັນເຕັ້ນໄດ້ເຫມືອນຕັກແຕນ ແລະທຳໃຫ້ສຽງຫີງຫນ້າຢ້ານກົວ
21 ມັນເກືອກກົ້ວດິນໃນຮ່ອມພູຢ່າງຫ້າວຫານ ມັນແລ່ນເຂົ້າສະຫນາມຮົບຫມົດກຳລັງຂອງມັນ
22 ມັນບໍ່ຮູ້ຈັກຄຳວ່າຢ້ານ ບໍ່ຖອຍຫນີດາບ
23 ອາວຸດຂອງຄົນຜູ້ຂີ່ມ້າ ມີສຽງດັງແລະແສງວຸບວາບຕອບຕາເວັນ
24 ມ້າໄດ້ແລ່ນໄປຫນ້າດ້ວຍໃຈຫ້າວຫານຕື່ນເຕັ້ນ ມັນບໍ່ຢືນຢູ່ນິ້ງເມື່ອແກດັງຂຶ້ນ
25 ມ້າໄດ້ຫີງເວລາເປົ່າແກ ມັນຮູ້ຈັກວ່າມີສົງຄາມກ່ອນເຂົ້າໄປໃກ້ ແລະໄດ້ຍິນເມື່ອນາຍທະຫານຮ້ອງບອກ

26 ແຫລວບິນເປັນຍ້ອນເຈົ້າບໍ ເມື່ອມັນກາງປີກບິນໄປທາງທິດໃຕ້
27 ນົກອິນຊີເຮັດຮັງໃນທີ່ສູງເທິງພູ ມັນຄອຍຟັງຄຳສັ່ງຂອງເຈົ້າບໍ
28 ມັນເຮັດຮັງຂອງມັນເທິງໂງ່ນຫີນສູງ ເຮັດປ້ອມເຂັ້ມແຂງຢູ່ຍອດພູສູງ
29 ມັນຫລຽວຄອຍເບິ່ງໃກ້ ແລະໄກຈາກທີ່ນັ້ນ ເພື່ອຈອບຈັບສັດມາກິນເປັນອາຫານ
30 ຝູງແຮ້ງຍ່ອມຫຸ້ມຢູ່ໃນຊາກສົບ ແລະລູກຂອງມັນກໍດູດກິນເລືອດ

## 40.

1 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂຢບວ່າ,
2 ໂຢບເອີຍ ເຈົ້າໄດ້ທ້າທາຍພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ ບັດນີ້ເຈົ້າຈະເຊົາ ຫລືວ່າຍັງຈະເວົ້າຢູ່
3 ໂຢບທູນຕອບພຣະຜູ້ເປັນເຈົ້າວ່າ,
4 “ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງໂງ່ຫລາຍ ຈະຕອບພຣະອົງໄດ້ຢ່າງໃດ ຂ້າພຣະອົງຈະບໍ່ທູນອັນໃດອີກ
5 ຂ້າພຣະອົງເວົ້າຫລາຍເກີນໄປແລ້ວ
6 ແລ້ວພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂຢບວ່າມາຈາກລົມພະຍຸອີກວ່າ,
7 “ບັດນີ້ ຈົ່ງຢືນຂຶ້ນຢ່າງຜູ້ກ້າຫານ ຈົ່ງຕອບຄຳຖາມຂອງເຮົາ
8 ເຈົ້າຈະເວົ້າວ່າ ເຮົາບໍ່ຍຸດຕິທັມ ວ່າເຮົາເປັນຝ່າຍຜິດ ແລະເຈົ້າເປັນຝ່າຍຖືກຫລື
9 ເຈົ້າມີຣິດອຳນາດເຫມືອນເຮົາຫລື ເຈົ້າໃຫ້ສຽງຂອງເຈົ້າດັງສະທ້ານຫວັ່ນໄຫວເຫມືອນສຽງເຮົາໄດ້ຫລື
10 ຖ້າເຈົ້າທຳໄດ້ ຈົ່ງຢືນຂຶ້ນຢ່າງມີກຽດແລະພາກພູມໃຈ ຈົ່ງສວມກອດເອົາຄວາມຍິ່ງໃຫຍ່ ແລະສງ່າຣາສີ
11 ຈົ່ງເບິ່ງຄົນທັງຫລາຍຜູ້ວາງຕົວສູງ ຈົ່ງເທຄວາມຄຽດຮ້າຍຂອງເຈົ້າອອກມາ ແລ້ວທຳໃຫ້ເຂົາຖ່ອມຕົວລົງ
12 ຈົ່ງເບິ່ງຜູ້ວາງຕົວສູງ ແລ້ວທຳໃຫ້ເຂົາວາງຕົວຕ່ຳລົງ ຈົ່ງກຳຈັດຄົນອະທັມໃຫ້ດັບໄປກັບບ່ອນ
13 ໃຫ້ຝັງເຂົາທັງຫມົດໄວ້ໃນດິນ ມັດເຂົາໄວ້ໃນພິພົບຄົນຕາຍ
14 ແລ້ວເຮົາເອງຈະສັນລະເສີນເຈົ້າ ແລະຍອມຮັບວ່າເຈົ້າເອງມີໄຊຊນະແລ້ວ
15 ຈົ່ງເບິ່ງແຮດຕົວແປກປລາດດູ ເຮົາໄດ້ສ້າງມັນແລະສ້າງເຈົ້າ ມັນກິນຫຍ້າເຫມືອນງົວ
16 ແຕ່ມັນມີເຫື່ອແຮງຫລາຍ ແລະກ້າມຊີ້ນຂອງມັນກໍແຂງແຮງ
17 ຫາງຂອງມັນຕັ້ງຊັນຂຶ້ນເຫມືອນກົກສົນ ກ້າມຊີ້ນໃນກົກຂາຂອງມັນກໍມີກຳລັງແຂງແຮງ
18 ກະດູກກໍແຂງເຫມືອນທອງສຳຣິດ ແລະແຂ່ງຂາກໍເຫມືອນທ່ອນເຫລັກ
19 ສັດອັນຫນ້າອັດສະຈັນທີ່ສຸດນີ້ແມ່ນເຮົາສ້າງ ຜູ້ສ້າງມັນເທົ່ານັ້ນຈຶ່ງຈະຊນະມັນໄດ້
20 ມັນກິນຫຍ້າຢູ່ເທິງພູ ບ່ອນທີ່ສັດປ່າຫລິ້ນ
21 ມັນນອນຢູ່ລຸ່ມກົກຫນາມ ແລະຖ້າມກາງກົກອໍ້ໃນຫນອງບຶງ
22 ກົກຫນາມແລະກົກຊະໂນໃກ້ນ້ຳ ໄດ້ເປັນຮົ່ມກຳບັງມັນໄວ້
23 ມັນບໍ່ຢ້ານແມ່ນ້ຳທີ່ໄຫລແຮງ ມັນຢຸດນິ້ງເມື່ອນ້ຳໄຫລທັ່ງຫນ້າມັນ

24 ໃຜສາມາດທຳໃຫ້ຕາມັນບອດ ແລະຈັບມັນໄປໄດ້ ຫລືໃຜສາມາດທຳແຮ້ວດັກຈັບມັນໄດ້

## 41.

1 ເຈົ້າໃສ່ເບັດເອົາເງືອກໄດ້ບໍ ຫລືເອົາເຊືອກຜູກລີ້ນຂອງມັນໄດ້ບໍ
2 ເຈົ້າເຊືອກສົນເຄົາມັນໄດ້ບໍ ຫລືເອົາຂໍເກາະປາກມັນໄດ້ບໍ
3 ມັນຈະຂໍວໃຫ້ເຈົ້າປ່ອຍຫລືບໍ ມັນຈະຂໍຄວາມເອັນດູຈາກເຈົ້າດ້ວຍຄຳອ່ອນຫວານຫລື
4 ມັນຈະຍອມຕົກລົງກັບເຈົ້າ ຫລືສັນຍາວ່າຈະຮັບໃຊ້ເຈົ້າຄລອດໄປບໍ
5 ເຈົ້າຈະເອົາມັນມາໃສ່ຕຸ້ມເຫມືອນນົກໄດ້ບໍ ຫລືເຫມືອນສິ່ງນີ້ງທີ່ລູກສາວຂອງເຈົ້າຢອກຫລີ້ນ
6 ພວກຫາປາຈະຂາຍມັນໄດ້ບໍ ພວກພໍ່ຄ້າຈະຕັດມັນຂາຍໄດ້ບໍ
7 ເຈົ້າຈະເອົາຫອກແທງຫນັງຂອງມັນ ຫລືເອົາຫລາວແທງຫົວຂອງມັນໄດ້ບໍ
8 ຖ້າເຈົ້າໄດ້ສູ້ກັບມັນເທື່ອນີ້ງ ແລ້ວເຈົ້າຈະບໍ່ຢາກສູ້ອີກ ເຈົ້າຈະເຂັດຫລາບໃນການຕໍ່ສູ້ນັ້ນ
9 ເມື່ອຄົນໃດຄົນນຶ່ງພົບເຫັນຕົວເງືອກ ຄົນນັ້ນຕ້ອງຫມົດຄວາມກ້າແລະລົ້ມລົງດິນ
10 ເມື່ອຢອກລົ້ມັນ ມັນຈະຮ້າຍຢ່າງຮຸນແຮງ ບໍ່ມີໃຜກ້າພໍທີ່ຈະຢືນຕໍ່ຫນ້າມັນໄດ້
11 ມີໃຜທີ່ຕໍ່ສູ້ກັບມັນແລ້ວໄດ້ຮັບຄວາມປອດໄພ ບໍ່ມີໃຜໃນໂລກຈະທຳຢ່າງນັ້ນໄດ້
12 ໃຫ້ເຮົາບອກເຈົ້າກ່ຽວກັບແຂ່ງຂາຂອງມັນ ແລະກ່ຽວກັບກຳລັງອັນຍິ່ງໃຫຍ່ຂອງມັນ
13 ບໍ່ມີໃຜສາມາດລອກຫນັງຂອງມັນອອກໄດ້ ຫລືບໍ່ມີໃຜສາມາດແທງຫນັງຂອງມັນຊອດ
14 ໃຜທຳໃຫ້ມັນອ້າປາກໄດ້ ປາກຂອງມັນກໍເຕັມດ້ວຍແຂ້ວອັນຫນ້າຢ້ານຫລາຍ
15 ຫລັງຂອງມັນກໍຕິດແຜ່ນເຫລັກຕ້ານທານໄວ້ເປັນແຖວ ຕິດແຈບສນິດແລະແຂງເຫມືອນຫີນ
16 ແຕ່ລະອັນຕິດກັນແຈບຫລາຍ ແມ່ນແຕ່ລົມກໍຜ່ານບໍ່ໄດ້
17 ແຜ່ນເຫລັກຕ້ານທານທັງຫມົດນັ້ນຕໍ່ຊື່ງກັນແລະກັນ ບໍ່ມີຫຍັງຈະທຳໃຫ້ມັນແຍກອອກຈາກກັນໄດ້
18 ເມື່ອມັນຈາມປ່ອຍແສງສວ່າງອອກມາ ຕາຂອງມັນລຸກໄຫມ້ເຫມືອນແສງຕາເວັນ
19 ມີແປວໄຟຮ້ອນອອກມາຈາກປາກຂອງມັນ ແລະມີປະກາຍໄຟປິວອອກມາ
20 ມີຄວັນອອກມາຈາກຮູດັງຂອງມັນ ເຫມືອນຄວັນຈູດຫຍ້າຈາກກົກຫມໍ້ໃນເຕົາໄຟ
21 ລົມຫາຍໃຈຂອງມັນຮ້ອນຈົນເປັນໄຟ ມີແປວໄຟອອກມາຈາກປາກຂອງມັນ
22 ຄໍຂອງມັນມີຣິດອຳນາດຫລາຍ ທຸກໆຄົນທີ່ພົບເຫັນມັນຈະສະທ້ານຢ້ານກົວ
23 ຫນັງຂອງມັນບໍ່ມີບ່ອນອ່ອນ ມັນແຂງເຫມືອນເຫລັກກ້າ
24 ຫົວໃຈຂອງມັນແຂງເຫມືອນຫີນບໍ່ຢ້ານກົວຫຍັງ ບໍ່ຍອມຈຳນົນ ແລະແຂງເຫມືອນຫີນໂມ້ແປ້ງ
25 ເມື່ອມັນໂປໂລຂຶ້ນ ຜູ້ມີຣິດອຳນາດກໍຕົກໃຈຢ້ານ ພວກເຂົາຢ້ານຈົນເຮັດຫຍັງບໍ່ເປັນ
26 ຈະເອົາດາບແທງມັນກໍບໍ່ໄດ້ ແມ່ນແຕ່ຫອກ ລູກທະນູ ຫລືຫລາວທຳຮ້າຍມັນກໍບໍ່ໄດ້
27 ເຫລັກກ້ານັ້ນເຫມືອນກັບເຟືອງສຳລັບມັນ ແລະທອງສຳຣິດເຫມືອນໄມ້ດອກ

28 ລູກທະນູທຳໃຫ້ມັນຫນີໄປບໍ່ໄດ້ ແກວ່ງກ້ອນຫີນໃສ່ມັນເຫມືອນເອົາເຟືອງຕີ
29 ໄມ້ຄ້ອນເຫມືອນກັບຕໍເຟືອງສຳລັບມັນ ມັນຫົວຂວັນເມື່ອຄົນຊັດຫອກໃສ່
30 ເລັບຂອງມັນແຫລມເຫມືອນກະບັ້ງຫມໍ້ແຕກ ມັນຂຸດຕົມຂຶ້ນເວລາມັນໄປ
31 ມັນທຳໃຫ້ນ້ຳທະເລເປັນຟອງເຫມືອນຫມໍ້ຕົ້ມນ້ຳພືດ ແລະທຳໃຫ້ນ້ຳທະເລຟົດຂຶ້ນເຫມືອນຕົ້ມນ້ຳມັນ
32 ມັນປ່ອຍທາງຂາວແຈ້ງໄວ້ຂ້າງຫລັງ ແລະທຳໃຫ້ນ້ຳທະເລເປັນຟອງຂາວ
33 ບໍ່ມີຫຍັງທຽບກັບມັນໃນໂລກ ເຮົາສ້າງມັນຂຶ້ນມາບໍ່ໃຫ້ມີຄວາມຢ້ານ
34 ມັນບໍ່ຈັ້ສັດທີ່ດີ້ຖືຕົວ ມັນເປັນຣາຊາຂອງສັດປ່າທັງປວງ

## 42. ໂຢບຍອມສາລະພາບແລະພຣະເຈົ້າຊົງຮັບ

1 ຕໍ່ມາ ໂຢບໄດ້ກາບທູນພຣະຜູ້ເປັນເຈົ້າວ່າ,
2 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຮູ້ວ່າພຣະອົງຊົງເດຊານຸພາບສູງສຸດ ວ່າພຣະອົງຊົງກະທຳທຸກສິ່ງໄດ້
3 ພຣະອົງຊົງຖາມວ່າ ເປັນຫຍັງຂ້າພຣະອົງຈຶ່ງກ້າຊັກຖາມການກະທຳຂອງພຣະອົງ ໃນເມື່ອຂ້າພຣະອົງຍອງ
ເປັນໂງ່ຫລາຍ ຂ້າພຣະອົງເວົ້າເຖິງສິ່ງທີ່ຂ້າພຣະອົງບໍ່ເຂົ້າໃຈ ສິ່ງທີ່ປລາດເກີນສຳລັບຂ້າພຣະອົງ
4 ພຣະອົງຊົງບອກໃຫ້ຂ້າພຣະອົງຮັບຟັງເວລາພຣະອົງກ່າວ ແລະໃຫ້ພະຍາຍາມຕອບຄຳຖາມຂອງພຣະອົງ
5 ຂນະນັ້ນຂ້າພຣະອົງຮູ້ແຕ່ສິ່ງທີ່ຄົນອື່ນບອກເທົ່ານັ້ນ ແຕ່ບັດນີ້ຂ້າພຣະອົງໄດ້ເຫັນພຣະອົງດ້ວຍຕາຂອງຂ້າ
ພຣະອົງເອງ
6 ດັ່ງນັ້ນ ຂ້າພຣະອົງຈຶ່ງລະອາຍຕໍ່ສິ່ງທັງປວງທີ່ຂ້າພຣະອົງໄດ້ກ່າວ ແລະໄດ້ປ່ຽນໃຈໄປນັ່ງຢູ່ໃນຝຸ່ນດິນ
ແລະຂີ້ເຖົ່າຍ້ອນອຸກໃຈ
7 ຫລັງຈາກພຣະຜູ້ເປັນເຈົ້າຊົງກ່າວຄຳທັງປວງນີ້ຕໍ່ໂຢບແລ້ວ ພຣະອົງກໍຊົງກ່າວຕໍ່ເອລີຟັສຊາວຕາມານວ່າ,
"ເຮົາຮ້າຍເຈົ້າ ແລະເພື່ອນສະຫາຍສອງຄົນຂອງເຈົ້າ ເພາະພວກເຈົ້າບໍ່ເວົ້າຄວາມຈິງກ່ຽວກັບເຮົາຢ່າງທີ່ຖືກ
ເຫມືອນຢ່າງໂຢບຜູ້ຮັບໃຊ້ຂອງເຮົາໄດ້ເວົ້ານັ້ນ
8 ບັດນີ້ ຈົ່ງເອົາງົວເຖິກເຈັດໂຕກັບແກະເຖິກເຈັດໂຕໄປຫາໂຢບ ແລະເຜົາຖວາຍບູຊາສຳລັບພວກເຈົ້າເອງ
ໂຢບຈະອ້ອນວອນສຳລັບພວກເຈົ້າ ເຮົາຈະຕອບຄຳອ້ອນວອນຂອງເຂົາ ແລະຈະບໍ່ລົງໂທດພວກເຈົ້າຕາມ
ທີ່ເຈົ້າຄວນຈະໄດ້ຮັບ ເພາະພວກເຈົ້າບໍ່ເວົ້າຄວາມຈິງກ່ຽວກັບເຮົາເຫມືອນໂຢບໄດ້ເວົ້າ"
9 ເອລີຟັສ ບີນດັດ ແລະໂຊຟາ ໄດ້ທຳຕາມທີ່ພຣະຜູ້ເປັນເຈົ້າຊົງບອກ ແລະພຣະຜູ້ເປັນເຈົ້າກໍຊົງຕອບຄຳ
ອ້ອນວອນຂອງໂຢບ

### ໂຢບກັບຄືນສູ່ສະພາບດີ

10 ຫລັງຈາກ ໂຢບໄດ້ອ້ອນວອນສຳລັບເພື່ອນສາມຄົນຂອງທ່ານແລ້ວ ພຣະຜູ້ເປັນເຈົ້າໄດ້ຊົງທຳໃຫ້ໂຢບອຸດົມ
ສົມບູນຂຶ້ນອີກ ຊົງໃຫ້ທ່ານມີຂອງເພີ່ມຂຶ້ນອີກສອງເທົ່າ

11 ພວກນ້ອງຊາຍ ນ້ອງສາວ ແລະເພື່ອນຝູງກ່ອນໆທັງຫມົດຂອງໂຢບໄດ້ມາຢ້ຽມຢາມ ແລະຮ່ວມກິນລ້ຽງໃນ
ເຮືອນຂອງທ່ານ ພວກເຂົາໄດ້ສະແດງຄວາມເຫັນໃຈ ແລະເລົ້າໂລມທ່ານເຖິງການຍາກລຳບາກທີ່ພຣະຜູ້
ເປັນເຈົ້າຊົງນຳມາທົດລອງທ່ານນັ້ນ ທຸກໆຄົນໄດ້ໃຫ້ເງິນແລະແຫວນຄຳຜູ້ລະວົງແກ່ທ່ານ
12 ພຣະຜູ້ເປັນເຈົ້າຊົງອວຍພອນໃຫ້ໂຢບ ໃນຊີວິດບັ້ນປາຍຫລາຍກວ່າຊີວິດບັ້ນຕົ້ນ ໂຢບໄດ້ເປັນເຈົ້າຂອງ
ແກະສິບສີ່ພັນໂຕ ອູດຫົກພັນໂຕ ງົວກວຽນພັນຄູ່ ແລະລໍພັນໂຕ
13 ທ່ານເປັນພໍ່ຂອງລູກເຈັດຄົນ ແລະລູກສາວສາມຄົນ
14 ທ່ານໄດ້ເອີ້ນລູກສາວກົກຊື່ວ່າ ເຢມີມາ ເກຊີຢາຜູ້ທີ່ສອງ ແລະເກເຣນຮັບປຸກຜູ້ທີ່ສາມ
15 ໃນໂລກນີ້ບໍ່ມີຍິງໃດຫມົດງາມເທົ່າລູກສາວຂອງໂຢບ ພໍ່ຂອງເຂົາໄດ້ແບ່ງມໍຣະດົກໃຫ້ເຂົາເຫມືອນກັບໃຫ້
ພວກອ້າຍ
16 ຕໍ່ຈາກນີ້ໄປ ໂຢບໄດ້ມີຊີວິດຢູ່ອີກຮ້ອຍສີ່ສິບປີ ຈົນໄດ້ເຫັນຫລານເຫລັນຂອງທ່ານ
17 ແລະທ່ານກໍສິ້ນຊີວິດໃນເວລາເຖົ້າແກ່ທີ່ສຸດ